ດາວວຽງ ບຸດນາໂຄ



# ຂວາ ຝາກ

1992



"ຄວາມຮັກຊາດຂອງຄົນຜູ້ໜຶ່ງ
ບໍ່ອາດຈະວັດແທກຫຼືຊູດ້ວຍຊີກິໂລໄດ້
ຄວາມຮັກຊາດ ບໍ່ໄດ້ຂຶ້ນກັບຖານະຕຳແໜ່ງ
ອຳນາດວາດສະໜາ ເປັນທາສາຊາລີເລດໆ...
ທີ່ເອີ້ນວ່າ ຄວາມຮັກຊາດອັນແທ້ຈິງນັ້ນ
ຄື: ຫົວໃຈຄົນ ແລະການກະທຳຂອງຄົນນັ້ນເອງ."

# ດວງງຽ ບຸດມໂຄ




ສະຫງວນລິຂະສິດ




ຈັດພິມໂດຍ

ສຳນັກພິມ ແລະຈຳໜ່າຍປຶ້ມແຫ່ງລັດ

ຂື້ນທະບຽນເລກທີ 243 /ພຈມ
ພິມຄັ້ງທຳອິດ: ເດືອນເມສາ 1992
ຈຳນວນພິມ : 1000 ເຫຼັ້ມ
ລາຄາ : 500 ກີບ
ໃຊ້ໜ້າປົກ: ຂນູກາບ ຣັດຕະນະໄພທູນ
ຮູບປະກອບ : ສັກດາ

# ຄຳນຳຂອງຜູ້ຈັດພິມ

ການສູ້ຊົນເພື່ອສະແຫວງຫາຄວາມສຸກໃຫ້ແກ່ຊີວິດນັ້ນມີທັງ ວັດຖຸ ແລະຈິດໃຈ, ນັ້ນມັນເປັນສິ່ງທຳມະດາຂອງມະນຸດ ບາງຄົນມີ ຄວາມສຸກທີ່ໄດ້ສະແຫວງຫາອາຫານ -ເງິນ ຄຳມາຄ້ຳຈູນຄອບຄົວໃຫ້ ຢູ່ລອດໄປວັນໆ. ບາງຄົນມີຄວາມສຸກເມື່ອສາມາດສະແຫວງຫາຄຸນ ປະໂຫຍດແລະຄວາມເປັນທຳມາສູ່ສັງຄົມ. ການສະແຫວງຫາຂອງ ຄົນເຮົາມີຫລາຍຮູບຫລາຍແບບແລະບໍ່ຢຸດຢັ້ງລົງຕົວ ຢູ່ກັບທີ່ຕະຫລອດໄປດັ່ງບົດປະພັນ " ຂອງຝາກ " ທີ່ໄດ້ສັນຫາສິ່ງດີໆມາມອບໃຫ້ແກ່ ຜູ້ອ່ານ.

ຕົວລະຄອນສ່ວນໃຫ່ຍເຂົາໄດ້ຖືກສ້າງມາຈາກບຸກຄົນຊາວບ້ານທຳມະດາທີ່ຕັ້ງໜ້າທຳມາຫາກິນດ້ວຍຄວາມຊື່ສັດ ສຸດຈາລິດ, ຂະ ຫຍັນໝັ່ນພຽນ, ຕໍ່ສູ້ກັບບັນຫາຊີວິດຢ່າງບໍ່ຍອມຖອຍຫລັງແມ່ນແຕ່ກ້າວດຽວ ພວກເຮົາຈະເຫັນວ່າຄົນເຮົາເຖິງຈະຢູ່ໃນຊົນຊັ້ນ ວັນນະທີ່ ຕ່ຳຕ້ອຍ

ດ້ວຍຖານະກໍຕາມ ແຕ່ຊີວິດຂອງເຂົານັ້ນມີຄຸນຄ່າຄວນແກ່ການ ຍົກຍ້ອງຊົມເຊີຍ ຍ້ອນເຂົາມີມານະຈິດອັນສູງສົ່ງພ້ອມທີ່ຈະປະເຊີນ ກັບອຸປະສັກດ້ວຍຄວາມທະນົງອົງອາດ.

" ຂອງຝາກ " ຊຸດນີ້ ຈາກ ດາວວຽງ ບຸດນາໂຄ ຈຶ່ງຂໍ ມອບເປັນຂອງຝາກແດ່ເພື່ອນນັກອ່ານທຸກໆທ່ານດ້ວຍ. ຫາກທ່ານມີຄວາມຄິດເຫັນເປັນປະການໃດກະລຸນາຈົດໝາຍໄປຍັງສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ຕູ້ ປ.ນ. 1300 ວຽງຈັນ,ສປປລາວ ຫລື ໂທລະສັບ 3402,3403,2136,2129.

ຂໍຂອບພະຄຸນຢ່າງສູງ

ດ້ວຍຄວາມຮັກແພງແລະ ນັບຖື,

ວຽງຈັນ,ວັນທີ 4 /2 / 92 ...

ຫົວໜ້າ ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ສປປລາວ.

ສີວຽງແຂກ ກອນນີວົງ



" ຂອງຮັກສາ ອັນວິເສດ ແລະສັກສິດ
ທີ່ເອົາຊະນະໃຈຄົນທັງໂລກນັ້ນ
ຄື: ຄວາມດີ ! ແລະຄວາມດີ !... "

( ປະເສີດ ວໍຣະພົມ )



"ຟ້າມີສິດກຳນົດໄດມື້ເກີດແລະແຜ່ນດິນເກີດ
ສ່ວນມື້ຕາຍ ແລະ ແຜ່ນດິນປົກຫນ້າ,
ມະນຸດມີສິດທີ່ຈະເລືອກເອງໄດ້."

(ສິດ ຟຣີຈິດ)



" ພືດຊະນິດດີ...ແຕ່ຂາດຄົນທີ່ດີ
ກໍ່ມີສິດ ທີ່ຈະຕາຍໄດ້ ! "

( ຄຳຫມູນ ແກ້ວວິພອນ )



"... ຄົນເຮົາ ຖ້າຢູ່ດີກິນດີ ມັກມີສະຫນອງ
ຄິດອັນໃດ ຫຼ້າອັນໃດ ກໍ່ມັກບັນລຸຜົນ,
ແຕ ... ຖ້າອັດຕະຄັດຂັດສົນ, ຈົນອຳນາດ
ຂາດເງິນທອງ ສະຫນອງນັ້ນ ຫຼືຈະປອດປ່ງ!"

( ດຣ.ສຸລີ ພານຸວົງ )



" ສາມປີ, ຈຶ່ງໜອດກາຍລາວໄດ້,

ຜົນງານທີ່ແຂ່ງກັບເວລາ,

ອັນເປັນໝາກເປັນຜົນນັ້ນ,

ຄືມາດຖານຄົນສົມບູນແບບ "

( ບຸນເພັງ ແກ້ວວິໄລ )



" ຄົນດີ ມັກແກ້ໄຂ

ຄົນຈັ່ງໄຣ ມັກແກ້ຕົວ

ຄົນຊົ່ວ ມັກທຳລາຍ

ຄົນເວົ້າຫຼາຍ ມັກເຮັດນ້ອຍ "

( ໜູການ ຣັດຕະນະໄພທູນ )



" ໂຈນເວົ້າເລື່ອງທັມມະ,

ມັນໝ້າຍຢາກຫົວດັ່ງ

ນິທານແມວເຖົ້າຈຳສິນ "

( ເບີຍສີ ຣາຊະພົນ )



" ຄຸນສົມບັດຂອງນາຍ ຢູ່ທີ່ໃຈຄຸນນະທຳ "

( ພູຂຽວ ຈັນສົມບູນ )



"ສາສນາເປັນບ່ອນສ້າງ ຊູຊ່ວຍໃຫ້ທຳດີ
ສາສນາ ເປັນແຫຼ່ງທຣມ ສ່ອງທາງທວນຊົ້
ສາສນາ ເປັນອຸ່ງນ້ຳ ໃຫ້ຊາວອຸ້ນລ້າງສ່ອາຍກິເລດ
ສາສນາ ເປັນບ່ອນສ້າງ ໃຫ້ຄົນຮູ້ຄາຄົນ ... "

( ກ.ແສງສຸລິຍາ )



" ມະນຸດ ແມ່ນກ້ອນຄຳ
ແຕ່ມະນຸດ ທີ່ຂາດຄຸນນະທັມ
ຈະສ້າງກັມຊົ່ວໃນທຸກເມື່ອ !..."

( ທ່ານ ພູ ຣາຊະພົນ )



ພ້າ-ຂວານ ໄຊ້ໄວ້ຕັດໄມ້ຜ່າຟືນ,
ຈົກ-ສອມ ໄຊ້ໄວ້ຂຸດດິນເສັຍຫຍ້າ,
ໂອ! ມະນຸດຜູ້ບໍ່ຮູ້ໂຕເອງກໍ່ຄືຜູ້ທຳລາຍໂຕເອງ.

( ທ່ານ ວິເສດ ສະແຫວງສຶກສາ )



"ເມື່ອເລີ່ມກະທຳໃນສິ່ງທີ່ດີ
ຜົນໄດ້ຮັບກໍ່ຈະມັກມີ ແຕ່ອັນດີ ! ... "

( ກົ້ປອງ )



" ທາງເວ້ງຫຼວໄກ ຮອດໄວເພາະທາງແປນ
ທາງລັດຕັດພູຜາ ຫ້ວຍເລິກ ຮອດຍາກ
ແຕຈູດຫມາຍປາຍເຖິງ,
ຂໍໃຫເປັນສຽງເຕັ້ນ ຂອງຫົວໃຈປວງຊົນດີແລ ! "

( ໂຊຕິທອນເນືອງພິລັກ )



" ເຈັບ ! ຄືບົດຮຽນ
ເຈັບກໍ້ຕ້ອງຈຳ !
ລົ້ມແລ້ວກໍ້ຕ້ອງລຸກ !...."

( ຄຳ ສະຫວາດ ຈັນດາຮາ )



" ຄວາມເປັນສ່ຽວຈະລົ້ມລະລາຍ
ກໍ່ຕໍ່ເມື່ອ ໂລກຫນ້ວຍນສະຫລາຍ !... "

(ສະຫວັດ ຈັນເກສອນ +
ຟອງສາລີ ວົງສະຫວັດ)



" ທຸກຊີວິດ - ທຸກອາຊີບ ຍາກພ່ງກັນ,
ຄົນຈົນ ຍາກນຳເງິນ !
ເສດຖີ ກໍຍາກຍອມເງິນ !

(ສຸຂີຍະສັນ ສະແຫວງສຶກສາ )



"ຜູ້ເຖົ້າ , ເລົ່າຄືນອາດີດ !
ນອຍໜຸ່ມ ໂສເລື່ອງອະນາຄົດ !
ຄົແນວົບນ, ເສົາເຮືອນມັນຕອງໄມ້ເນື້ອແກ່ນ !."

( ສະຫລຽວ )



" ນາດີ ຍ້ອນຄັນ  ໝູ່ມັນຍ້ອນເຈົ້າຂອງໝັ່ນ
ຄົນຂະຫຍັນ  ບໍ່ມັກນອນເວັນ
ຄົນເອັນຍາວ  ບໍ່ຂີ້ຄານ ... "

( ພູຄຳ ຄົນແຄນໜອງ )



" ນິຍາມ ຂອງມະນຸດ ຄື ອິດສະຫຼະພາບ "

( ທະນົງສັກ ວົງສັກດາ )

● ຂໍຂອບໃຈ ບັນດາທ່ານ ເພື່ອນສະຫາຍ
ທີ່ໄດ້ເປັນທານນ້ຳໃຈ ຊ່ວຍຊ້ຳປຶ້ມ "ຂອງຝາກ"
ອັນປຽບເໝືອນດອກໄມ້ ສົດຈະທຳດວງນ້ອຍດວງໜຶ່ງ
ໃຫ້ໄດ້ມີໂອກາດ ຜຸດເກີດຂຶ້ນມາງຸ່ມຈີ່ເບີ່ງບານ,
ພາຍໃຕ້ພະອາທິດສີທັນ.

ໂຮງພິມ ກະຊວງສຶກສາ
ທ ບ ໔໕ນ/ພປ ໔໘ ໐໔ ພ໔
ຈຳນວນ ໑໐໐໐ ຫົວ
ສົ່ງສຳເນົາ ໃນວັນທີ..../...



# ສາລະບານ

- ເກີບໂຊອາເມລີກາ ໜ້າ 1
- ຝັນຂອງມະນີແດງ 17
- ເງິນຄ່າໂຮງຮຽນ 27
- ຖ້ວຍເຜີໃນຮອບປີ 38
- ຄົນຜິວຂາວ 49
- ຄວາມຮັກລີເລົ້າ 61
- ລົດຖີບອີ່ພ່ 73
- ຄືນຊີວິດ 81


USA

# ເກີບໂຊອາເມລິກາ

ພໍ່ ແນມເບິ່ງເກີບຄູ່ນັ້ນ ດ້ວຍສາຍຕາອິດສາ, ມັນເປັນ ເກີບເມດອິນ ຢູ ເອສ ເອ (Made in USA) ເປັນເກີບຄູ່ສຸດທ້າຍຂອງພໍ່ ທີ່ຍັງໃຫມ່ອ່ຽມເປັນຕາຢາກໃສ່.

ມື້ບາງມື້ ພໍ່ ກໍນຳເອົາເກີບມາເຊັດຜັດຕາກແດດໃຫມ່ເຫຼື້ອມ ຈົນແຍງເຫັນເງົາ ແຕ່ ພໍ່ ກໍບໍ່ມີສິດທີ່ຈະໃສ່ເກີບຄູ່ນີ້. ເວົ້າແນວນີ້ ບໍ່ຫມາຍວ່າເກີບນ້ອຍ ຫລື ໃຫຍ່ກວ່າຕີນແລະຫມົດຊີວິດຂອງພໍ່ ຈະບໍ່ມີໂອກາດໃສ່ເກີບຄູ່ນີ້ໄດ້ອີກແລ້ວ.

ພໍ່ ຮັກແພງເກີບຄູ່ນີ້ເອົາແທ້ເອົາວ່າ ຫມູ່ພໍ່ ຫລາຍຄົນຂໍ ແຕ່ພໍ່ບໍ່ຍອມໃຫ້, ແມ່ນແຕ່ ອາວບຸນແຍ້ມ ນ້ອງຊາຍພໍ່ຄີງໆແທ້ໆ ພໍ່ກໍບໍ່ຍອມວາງມື. ພໍ່ຍັງເວົ້າອີກວ່າ ເກີບຄູ່ນີ້ລາຄາເປັນລ້ານກໍບໍ່ຂາຍອາດແມ່ນພໍ່ຮັກສາມັນໄວ້ເປັນທີ່ລະນຶກເພື່ອຄວາມຊົງຈຳ ທີ່ຄັ້ງຫນຶ່ງແລະຊີວິດຫນຶ່ງທີ່ພໍ່ເຄີຍເປັນນາຍທະຫານ.

ພໍ່ຈົບໂຮງຮຽນນາຍທະຫານ ເອໂກນແຊງເຊຍ ປະເທດຝະລັ່ງເສດ, ກັບຈາກຝະລັ່ງ ຢອງບາດຕີນຢຽບແຜ່ນດິນລາວບໍ່ພໍເທົ່າໃດມື້ ຊັ້ນຮ້ອຍໂທກໍປັ້ນຂຶ້ນມາງອຍບ່າພໍ່ ຢ່າງປະຕິເສດຢາກແລະປະຕິບັດງານບໍ່ທັນຮອດປີ ຊັ້ນຕຳແໜ່ງຮ້ອຍເອກ ກໍປີນຂຶ້ນບ່າພໍ່ ອີກແລະຕ່າງຈາກນັ້ນສາມປີຕໍ່ມາ ຊັ້ນຕຳແໜ່ງພັນໂທຫລື ເອີ້ນວ່າທ່ານໂກໂລແນນ ກໍຕົກຫຼົ່ນໃສ່ບ່າພໍ່ ໂອຍ! ຈັ່ງແມ່ນຊາຕາ ອີ່ພ່ອນ.

ນາຍທະຫານໜຸ່ມ ທະຫານອາເມລິກາ, ຄວາມເຈົ້າຊູ້ ລົດຂີ່ເງິນເດືອນບໍ່ຕ້ອງບັນລະຍາຍ ບອກວ່າເຫລືອເຟືອກໍແລ້ວກັນ. ຜູ້ສາວຕອນພໍ່ບໍ່ຕ່າງຫຍັງກັບໝູ່ເຜິ້ງຕອມເກສອນດອກໄມ້ ບວກກັບພໍ່ເປັນຄົນມີແວວເລື່ອງຕຳລາລົມແສ້ລົມສາວແດ່ ຮູບຮ່າງແຫລັດຄຳບໍ່ສຳຄັນ ເງິນສາມາດຍ້ອມຄົນໃຫ້ມີສະເໜ່ໄດ້ແລະຕອນປ້ອພໍ່ໄດ້ຊັ້ນທ່ານ ໂກໂລແນນ ນັ້ນລະ ເປັນປີທີ່ອພໍ່ແຕ່ງງານກັບແມ່.

ແມ່ເປັນ ຜູ້ສາວງາມສາວຊ່າໃນສະໄໝນັ້ນ ແມ່ຍັງບອກວ່າເປັນຍອດຜູ້ສາວໃນເຂດບ້ານ. ແມ່ແຕ່ງງານຕອນອາຍຸ 19ປີແລະຂ້ອຍກໍເປັນລູກຄົນທຳອິດໃນຕະກຸນແລະຕໍ່ມາກໍມີນ້ອງຊາຍ 3 ຄົນເກີດຕໍ່ກັນກັນ ຄອບຄົວຂອງຂ້ອຍມີແຕ່ລູກຜູ້ຊາຍ ລວມສີ່ຊາຍ.

ເກີດເປັນລູກ ໂກໂລແນນ ສະບາຍແປດຢ່າງ, ບໍ່ໄດ້ຮັດໄຮ່ໃສ່ນາ, ບໍ່ໄດ້ແຍງແວ່ນຢູ່ ກ້ອງຫາງຄວາຍຄືຊົນນະບົດເຍີຍກັນ . ເກີດພັດເກີດຢູ່ໃນເມືອງ ມີໄຟຟ້າ ນ້ຳປະປາ ນ້ຳໄຫລ ໄຟສະຫວ່າງ ສະໜຸກຮ່ຳສະໜຸກຮຽນ ແຕ່ງູດດີຂອງສີ່ອ້າຍນ້ອງ ພວກຂ້ອຍຕ່າງກັບລູກທ່ານໂກໂລແນນຄົນອື່ນໆ ພວກຂ້ອຍບໍ່ເຄີຍ ເອົາ

ຖານະຕຳແໜ່ງຫລືອົດທີພິມພໍ່ໄປຂາຍກິນຫລືຊູ້ຂ້າຜູ້ອື່ນ ຄວາມຈິງພົນຕະກູນພໍ່ ກໍມາຈາກພໍ່ນາຫມາເຕົ່ານີ້ລະ ພໍ່ກຳເນີດຈາກ ໄທບ້ານນອກຂາລາຍ ແຕ່ຟ້າໄດ້ເຂົ້າຂ້າງພໍ່ ທີ່ໄດ້ມີໂອກາດມາ ສຶກສາໃນຕົວເມືອງ.

ກໍຍ້ອນຄວາມຂະຫຍັນຫມັ່ນພຽນ ຄວາມມານະອົດທົນ ບວກກັບການຮຽນເກັ່ງຂອງພໍ່ຕື່ມກັບຜູ້ປົກຄອງໄດ້ເປັນແຮງ ສະຫນັບສະຫນູນຢູ່ເບື້ອງຫລັງ ໃນທີ່ສຸດພໍ່ກໍມີສິດເສັງເອົາທຶນ ໂຮງຮຽນນາຍທະຫານໄດ້. ລູກທ່ານໂກໂລແນນຄືພວກຂ້ອຍ ເວລາໃດ ກໍບໍ່ລືມທີ່ມາຂອງຊົນຊັ້ນ ບໍ່ເຄີຍວາງຕົວເປັນງົວລືມຕີນ ເພາະ ເຂົ້າໃຈໃນບາງຕຳນານໄດ້ຂຽນວ່າ: ເສດຖີກໍມີໂອກາດເປັນຄົນຂໍທານໄດ້ ແລະ ເທວະດາກໍມີໂອກາດຈະຫອນເຫົາຄືຫມາ... ຈັ່ງຊັ້ນຖ່ອມຕົວໄວ້ດີກວ່າ.

ມັນເປັນເລື່ອງແປກ ທີ່ຄອບຄົວຂ້ອຍບໍ່ມີໃຜນຳແນວພໍ່ ສີ່ອ້າຍນ້ອງພວກຂ້ອຍ ພາກັນມັກອາຊີບຄູຫມົດ. ຂ້ອຍເອງ ແມ່ນຈົບຄູຊັ້ນສູງຈາກມະຫາວິທະຍາໄລດົງໂດກ ຂ້ອຍເຮັດຫນ້າທີຄູໄດ້ 5 ປີແລ້ວ. ນ້ອງຊາຍຜູ້ຖັດຂ້ອຍກໍຈົບຄູຊັ້ນສູງເຊັ່ນດຽວ ອີກນ້ອງຊາຍສອງຄົນກໍຍັງເປັນນັກສຶກສາ ມະຫາວິທະຍາໄລຢູ່.

ການທີ່ ສີ່ອ້າຍນ້ອງ ພາກັນມັກອາຊີບຄູ ຕາມຄົ້ນຄິດ ພິຈາລະນາແລ້ວ ພວກຂ້ອຍແມ່ນໄດ້ແນວແມ່ ເພາະພົນຖານຕະກູນແມ່ສ່ວນຫລາຍແມ່ນເຄີຍບວດເປັນຍາຄູຍາຊາ ແລະ ມີບາງພໍ່ ທວດກໍບວດຕາຍຄາວັດເລີຍ. ສະແດງວ່າແນວແມ່ພວກຂ້ອຍ ມັກ ຢູ່ໃນສິນກິນໃນທຳ ແລະ ການທີ່ມັກອາຊີບຄູ ຂອງສີ່ອ້າຍນ້ອງແມ່ນສືບ

ທອດເຈດຕະນາລົມຂອງພົນຕະກຸນແມ່ ເພາະຄູແປວ່າ ຜູ້ໃຫ້ເອົາ ໃຫ້ແປວ່າທານ ທານຄືການສ້າງຄວາມດີແລະຄວາມດີນັ້ນລະ ຄື ສິນທຳ.

ອ້າວ! ອີພໍ່ ເອົາເກີບໂຊອາເມລິກາ ມາພັດຕາກແດດ ອີກ ແລ້ວ, ມັນພໍ່ໃສ່ຊຸດທະຫານ ປາຣາເຕັມຊຸດ ສີ່ອ້າຍນ້ອງພວກຂ້ອຍ ພາກັນງົວ ແຕ່ກໍ່ບໍ່ມີໃຜຈະໃຫ້ຄວາມເຫັນ ເພາະມັນເປັນ ເລື່ອງ ຂອງພໍ່ແລະອີກຫນຶ່ງພໍ່ກໍ່ເຖົ້າແກ່ແລ້ວ ຄວາມພໍໃຈຂອງພໍ່ກໍ່ຄືຄວາມ ສຸກຂອງພໍ່ ຄິດວ່າພໍ່ຈະບໍ່ມາຈັບປືນເຮັດຟ້າເຮັດ ໄຟໄດ້ອີກແລ້ວ.

ພໍ່ ນັ່ງງຽບຢູ່ຫ້ອງຮັບແຂກ.

ສາຍຕາຂອງພໍ່ຈ້ອງໄປຍັງຮູບຖ່າຍຕ່າງໆທີ່ຫ້ອຍແຂວນ ໄວ້ ຕາມຝາເຮືອນ.

ພໍ່ຈ້ອງຕາເບິງຮູບເຄິ່ງຄິງ ທີ່ໃສ່ເຄື່ອງນາຍທະຫານເຕັມ ຊຸດ ໃນຕຳແຫນ່ງຊັ້ນພົນໂທ ແລະ ແລ້ວພໍ່ ກໍ່ເຮັດຫນ້າເສົ້າໆ. ຈາກ ນັ້ນ ພໍ່ກໍ່ຫລຽວໄປຍັງຮູບຖ່າຍຫມົດຄິງທີ່ຢູ່ໃນຊຸດນັກຮຽນ ທະຫານ ນາຍຮ້ອຍ ເວລານັ້ນ ພໍ່ຍັງຫນຸ່ມແຫນ້ນກ້ານກຶດແລະແລ້ວພໍ່ກໍ່ເຮັດ ສີຫນ້າເສົ້າໆຄືເກົ່າ.

ອາດແມ່ນພໍ່ຄິດຮອດອາດີດທີ່ພໍ່ເຄີຍເປັນນາຍທະຫານ ເຄີຍ ມີລູກນ້ອງຄອຍກົ້ມຫົວເອົາອົກເອົາໃຈມີຜູ້ໂດຍ ມີຜູ້ຂະນ້ອຍ ເວ ລາລົງເຮືອນກໍ່ມີງລົດຈີບທະຫານແລະມີງອ້າງໆພໍ່ ກໍ່ຍັງແມ່ນທີ່ປຶກ ສາເປັນຄົນອາເມລິກາ. ອາດີດພໍ່ ມັນຊ່າງມີກຽດມີຫນ້າມີຕາ. ແມ່ ນອນລະຄົນທີ່ເຄີຍເປັນນາຍແລ້ວກັບມາເຊົາເປັນນາຍ ມັນກໍ່ຕ້ອງ

ມີປືນ ດ້ອຍເປັນທຳມະດາເໝືອນດັ່ງເສດຖີກັບມາຂໍທານ ໂຄແມ່ແຕ່ພໍ່ຍັງມີສະຕິດີມາຮອດມື້ນີ້ ພໍ່ປົງຕົກກິເລດຕັນຫາໝົດແລ້ວ ທຳຕົວໃຫ້ສະບາຍແລ້ວເຮົາກໍສະບາຍໃຈ ແຕ່ບາງຄັ້ງອາການພໍ່ເບິ່ງຄືກັບມີໄຂ້ຂຶ້ນໃນດັ່ງຄົນເສຍສະຕິ ຕົວຢ່າງຄືພໍ່ເອົາເກີບໂຊອາເມລິກາ ມາເຈັດຜັດຕາກແດດ ທັງໆທີ່ຂາເບື້ອງຊ້າຍຂອງພໍ່ຖືກ ຕັດກຸດມາແລ້ວຕັ້ງຫລາຍປີ.

ສາລາພູຄູນ, ຄຳນີ້ ພໍ່ຍັງຈຳຝັງໃຈໄດ້ດີທີ່ສຸດ.

ປີ 1964-70, ພື້ນທີ່ສາລາພູຄູນ ເກີດສົງຄາມອ່າວໜັກ ທີ່ສຸດ. ສາລາພູຄູນ ແມ່ນເຮືອນຮັງທະຫານອາເມລິກາ ເປັນ ສາງອາວຸດ ແມ່ນແຫລ່ງສະບຽງອາຫານແລະທັງເປັນບ່ອນພັກປະ ຈຳການທີ່ປຶກສາຄົນອາເມລິກາ ຈົນເຮັດໃຫ້ຫລາຍຄົນເອີ້ນວ່າ ສາລາພູຄູນ ແມ່ນເມືອງທະຫານ.

ຄ້າຍສາລາພູຄູນ ຍັງມີເຮືອນຫີນທີ່ສ້າງຂຶ້ນສະໄໝ ນັກລ່າເມືອງຂຶ້ນຝະລັ່ງລະຫວ່າງປີ 1930 ເສດແລະຍັງມີຫ້ອງໃຕ້ດິນທີ່ເປັນບ່ອນເຊື່ອງມ້ຽນຄວາມລັບ.

ຄ້າຍສາລາພູຄູນ ແມ່ນແປ້ນຢັນອັນແໜ້ນໜາຂອງກອງ ທັບລາຊະອານາຈັກ ໃນການຕໍ່ເອົາຊະນະກຳລັງແນວລາວ ຮັກຊາດ ແລະພ້ອມດຽວຄ້າຍສາລາພູຄູນ ກໍກາຍເປັນຈຸດຍຸດທະສາດ ທະຫານທີ່ຈະຕ້ອງທຳລາຍຈາກຝ່າຍກຳລັງຮັກຊາດ. ສາລາພູຄູນ ຕັ້ງລະຫວ່າງຈຸດສາມແຍກ ວັງວຽງ-ຊຽງຂວາງ-ຫລວງພະ ບາງ ແລະພູຄູນ ຍາມໜາວ ອາກາດໜາວຈັດ.

ພໍ່ຖືກຍິງກາງປີ 1970 ວັນທີ 17 ມິຖຸນາ ເວລາ 2 ໂມງ 20 ນາທີ ໃນຂະນະທີ່ພໍ່ກັບຈາກຄ້າຍສາລາພູຄູນ ອ່ວາຍໜ້າກັບຄືນວັງວຽງ. ທີ່ປຶກສາຄົນອາເມລິກາປອດໄພ. ສ່ວນພໍ່ຖືກຍິງ ບາດເຈັບສາຫັດທີ່ຂາເບື້ອງຊ້າຍ ໂຊດແຕ່ແຕ່ລົດບໍ່ຂວ້ຳ ດີແຕ່ພໍ່ ລອດຕາຍມາໄດ້ ພໍ່ຖືກຕັດຂາເບື້ອງຊ້າຍແລະແລ້ວຄຳວ່າ ທະຫານເສຍອົງຄະກໍໄດ້ກາຍເປັນປ້າຍແຂວນຄໍພໍ່ ຈົນມາຮອດເທົ່າທຸກວັນນີ້.

ມາຮອດມື້ນີ້ ພໍ່ຍັງມີອະຄະຕິຕໍ່ທະຫານແນວລາວຮັກຊາດຢູ່.

"ພໍ່!...ມັນຍ້ອນສົງຄາມຈັກກະພັດອາເມລິກາ ເປັນ ຕົ້ນເຫດນັ້ນລະພໍ່!...ເຈົ້າຈະໄປໂທດທະຫານແນວລາວຮັກຊາດກໍ່ບໍ່ຖືກ!...".

" ເອີ! ພໍ່ກໍ່ພໍຮູ້ວ່າ ໃຜເປັນໃຜຢູ່ດອກ...ແຕ່ມື້ນັ້ນມັນແມ່ນທະຫານແນວລາວຮັກຊາດແທ້ໆນາ ຍິງລົດພໍ່ ຂາພໍ່ຖືກຕັດ ຍ້ອນແນວລາວ ມັນບໍ່ແມ່ນຊັ້ນຫວະ...ພໍ່ມີປາກກໍ່ໃຫ້ພໍ່ເວົ້າແດ່ດູ ... ພວກສູນກະດາຍ...ພໍ່ຮູ້ ວ່າຈັກກະພັດອາເມລິກາຮຸກຮານ ປະເທດລາວ ແລະ ມັນກໍ່ມີການກູ້ຊາດຂອງແນວລາວຮັກຊາດ.... ຄັນບໍ່ມີສົງຄາມ ຂາພໍ່ກໍບໍ່ຖືກຕັດຄືແນວນີ້ດອກ!..."

" ເອົາລະພໍ່...ຖືວ່າປັ້ນມັນ ເຈົ້າຊ່ວຍກໍແລ້ວກັນ... ອາດແມ່ນພໍ່ມີກຳມະເວນ ແຕ່ຊາດກ່ອນກໍບໍ່ຮູ້...ຢ້ານຢູ່...ຢ້ານ ແຕ່ຊາດກ່ອນ ອີພໍ່ເປັນເພັດສະຄາດຂ້າຄົນແລະຕົກມາຊາດນີ້ກໍ ຖືກເຂົາຕາມລ້າຄືນ...ສະແດງວ່າ ມາຮອດມື້ນີ້ ອີພໍ່ກໍໝົດ ເວນ

ຫມົດກຳແລ້ວເດ...ແຕ່ນີ້ເມື່ອຫນ້າມີແຕ່ຊິຫມັ້ນຊົບນັ້ນລະ..."

ຢາກຊະນະໃຈ ອີ່ພໍ່ບໍ່ຢາກພໍ່ດື້ ແກ້ດົງ ອາລົມຂອງລາວ ໄປຫາພຸດທະສາດສະຫນາ ແລ້ວອີ່ພໍ່ກໍ່ຫມົດອາລົມໂກດ. ພໍ່ຍັງ ເຊື່ອວາດສະຫນາຊາຕາ ເຊື່ອສິນເຊື່ອທຳ ຍັງເຊື່ອກຳເຊື່ອເວນ. ແຕ່ລະມື້ພໍ່ຍັງເກັບດອກໄມ້ບູຊາພະ ກ່ອນນອນພໍ່ຈະໄຫວ້ພະແລະ ວັນສິນວັນພະ ພໍ່ມັກຈະເຂົ້າວັດ ຕັກບາດຢາດນ້ຳ.

ເອີ! ຖ້າເປັນຄວາມສຸກຂອງພໍ່ແລະເຮັດໃຫ້ພໍ່ມີອາຍຸຍືນຍາວ ຂໍໃຫ້ພໍ່ຈົ່ງເຊື່ອຖືຕໍ່ໄປເຖີດ! ຖ້າວ່າການນັບພະນັບຖືສາດສະຫນາ ບ້ານບໍ່ຫລົ້ມເມືອງບໍ່ຈົມ ຂໍໃຫ້ພໍ່ຈົ່ງນັບຖືເຖີດເອີຍ!

ນິດໃສໃຈຄໍພໍ່
ບາງມື້ ງຽບຂຶມ
ບາງມື້ອາລົມດີງ
ພິເສດພໍ່ ມັກເປັນກັນເອງທີ່ສຸດກັບພວກລູກໆ
ແລະ ບາງມື້ພໍ່ກໍ່ຍົກເອົາວຽກບ້ານການເມືອງມາວິ ເຄາະວິຈານ.

ພໍ່ຍ້ອງຍໍ ປະທານໂຮ່ຈິມິນ ທີ່ສົມຄືເປັນຜູ້ນຳຢ່າງສົມນ້ຳ ສົມຕ່ອນ. ພໍ່ເວົ້າວ່າ; ຜູ້ນຳປະເທດຫນຶ່ງເວລາດັບສັງຂານລົງໄປ ປະຊາຊົນທັງຊາດບໍ່ລືງນ້ຳຕາໄຫ້ວອາໄລ ສະແດງວ່າຜູ້ນຳຄົນນັ້ນຍັງບໍ່ທັນເປັນຜູ້ນຳທີ່ດີ ໄດ້ເທື່ອ ເບິ່ງຄວາມງາມເບິ່ງທີ່ຊາກພີ ແລະຄຸນງາມຄວາມດີເບິ່ງຢູ່ການເສຍສະຫລະ.

ທ່ຽງຂອງມື້ໜຶ່ງ,

ພໍ່ນັ່ງເຝົ້າໂທລະທັດ ຄອຍຕິດຕາມຂ່າວສະຖານະການ ສົງຄາມອ່າວເປີເຊຍ ຈາກຂ່າວຊີເອັນໆ ຊ່ອງຫ້າຂອງໄທ ພໍ່ ພິງຫູຟັງຂ່າວຢ່າງຈົດຈໍ່.

ຂ້ອຍປົງກັ້ນນັ່ງຂ້າງພໍ່.

ຄວາມຈິງ ທັດສະນະຂອງຂ້ອຍຕໍ່ຂ່າວ ຊີເອັນໆ ແມ່ນ ເອົາຄວາມແນ່ນອນໄດ້ຍາກ. ຂ່າວເວົ້າແຕ່ຄວາມເກົ່າສັບໄປສັບມາ . ໂອ! ເກືອບລືມໄປ ກໍ່ແມນວ່າ ຊີເອັນໆ ກໍ່ແມ່ນກະບອກ ສຽງຂອງສະຫະລັດໂດຍກົງຢູ່ແລ້ວ.

ຫລັງຈາກ ຊີເອັນໆ ລາຍງານສະຖານະການອ່າວເປີ ເຊຍສິ້ນສຸດລົງ ພໍ່ຈິ່ງມີໂອກາດຫາຍໃຈໂລ່ງ.

"ພໍ່!...ສົມມຸດລູກເປັນນັກຂ່າວ...ຢາກຖາມພໍ່ວ່າມີຂໍ້ຄິດເຫັນແນວໃດທີ່ສະຫະປະຊາຊາດກຳນົດເສັ້ນຕາຍໃຫ້ກັບອີຣັກ ?

"ຄວາມຈິງສົງຄາມມັນບໍ່ຄວນຈະເກີດຂຶ້ນມາ... ມັນແມ່ນການຕັດສິນໃຈຜິດຂອງສະຫະປະຊາຊາດ...ເລື່ອງ ອີຣັກກັບກູເວດ ມັນພໍເວົ້າກັນໄດ້ມາ!.."

" ພໍ່! ເຂົາວ່າ...ອີຣັກກັບກູເວດມັນເປັນແຜ່ນດິນ ສາຍເລືອດແບບ ລາວແລະໄທ ອີສານມັນແມ່ນບໍ່ ?..."

"ແຕ່ລູກເປັນຮອດອາຈານສອນມະຫາວິທະຍາໄລ... ລູກຍັງບໍ່ຮູ້ເຖິງປະຫວັດສາດອີຣັກ-ກູເວດຊັ້ນຫວະ ?..."

" ຮ້ວາຍ! ເຮົາຖາມພໍ່ໃນຖານະນັກຂ່າວໃດພໍ່ ?..."

ພໍ່ ຫົວຍຸ້ມບາດໜຶ່ງ.

" ຖ້າພໍ່ຈື່ບໍ່ຜິດ...ກູເວດແຍກອອກຈາກອີຣັກໃນສະໄໝສົງຄາມໂລກຄັ້ງທີ່ໜຶ່ງ ປີ 1920 ປາຍນີ້ລະ ແມ່ນຈັກກະ ພັດອັງກິດ ເປັນຜູ້ຈັບຈິກ...ກູເວດ ເປັນແຜ່ນດິນບໍ່ນ້ຳມັນ ທີ່ ສະຫະລັດອາເມລິກາກຳລັງໄດ້ຮັບເສັດຜົນປະໂຫຽດຫລວງຫລາຍ ທີ່ສຸດ...ມາຮອດມື້ນີ້ ອີຣັກ ຍັງຖືວ່າ ກູເວດ ຄືແຂວງໜຶ່ງ ຂອງເຂົາ.

...ອີກຣັກ ເຂົ້າຍຶດກູເວດແມ່ນເພື່ອປົດເຂ່ຍສະຫະລັດອາເມ ລິກາອອກຈາກສິດຜົນປະໂຫຽດເລື່ອງບໍ່ນ້ຳມັນ...ເພາະຊາວ ອິດສະລາມ ເຂົ້າໃຈວ່າ ເຂດແຄ້ວນແດນອາຣັບແມ່ນດິນດອນທີ່ພຣະເຈົ້າມອບໃຫ້ພວກເຂົາຄົນອິນ ບໍ່ມີສິດ...ອາດແຈ່ະແມ່ນ ເປັນແນວນັ້ນ!...".

" ພໍ່!...ເລື່ອງສະຫະລັດອາເມລິກາບວກກັບປະເທດ ພັນທະມິດ ປະກາດວ່າຈະບຸກຖະຫລົ່ມອີຣັກ ພຽງສາມວັນໃຫ້ ຮາບກຽງ...ມັນຈະເປັນໄປໄດ້ຫວະ ?..."

" ຄັນຊັ້ນລູກຄິດແນວໃດ ?..."

" ລູກກໍ່ບໍ່ຖະໜັດເລື່ອງການວິເຄາະສະຖານະການ... ຮູ້ແຕ່ວ່າທຸກສົງຄາມ ບໍ່ວ່າຢູ່ບ່ອນໃດ, ປະເທດໃດ...ອາເມລິ ກາບໍ່ເຄີຍມີໄຊຊະນະເປັນຕົ້ນຢູ່ຫວຽດນາມ-ລາວ-ກຳປູເຈຍ!..."

"ແຕ່ ເວົ້າເລື່ອງກຳລັງ ພໍ່ຍັງເຊື່ອສະຫະລັດ ແລະ ປະເທດພັນທະມິດ...ເພດຜົນກໍ່ມີຢູ່ວ່າ: ປະເທດອີຕາລີ ກໍ່ແມ່ນຈັກກະພັດເກົ່າ, ອັງກິດ-ຝະລັ່ງ ກໍ່ລ້ວນແຕ່ເປັນປະເທດມະຫາອຳນາດແລະສະຫະລັດອາເມລິກາເອງກໍ່ຍັງແມ່ນບິດາມະຫາອຳນາດ!..."

" ບໍ່ແມ່ນພໍ່ເຄີຍເປັນລູກນ້ອງອາເມລິກາ ກໍເລີຍເຂົ້າ ຂ້າງນາຍແມ່ນບໍ່ ?...

" ກໍບໍ່ດອກ...ແຕ່ເວົ້າເລື່ອງກຳລັງ ພໍ່ຍັງເຊື່ອໝັ້ນອາເມລິກາ ແລະ ພັນທະມິດ...ພວກເຂົາເປັນປະເທດມະຫາ ອຳນາດ...ເຮັດຫຍັງກໍຕ້ອງເດັດຂາດເດັດດ່ຽວເພື່ອຍາດເອົາທາງສຽງສັດທາຈາກໂລກ...ພໍ່ກໍຮູ້ສະຫະລັດກຳລັງເສຍຜົນປະໂຫຽດ ເຮັດເພື່ອສິດຜົນປະໂຫຽດຂອງຕົນແຕ່ລະຄົນຊີວິດຜູ້ອື່ນມາຕາຍນັບໝື່ນນັບແສນ ກໍສະແດງວ່າສະຫະລັດ ມີຄາຖາສະກົດຈິດທີ່ ເຂັດຢຳພໍ່ສົມຄວນ...ພໍ່ຍັງບໍ່ເຂົ້າໃຈວ່າ ເປັນຫຍັງສະຫະປະຊາຊາດຄິດແນວໃດ ຈຶ່ງມາມອບຄວາມຕາຍໃຫ້ກັບອິຣັກ...ສົງຄາມ ຄືຄວາມຕາຍ ຄວາມຫາຍຍະນະກໍຄືຂາເບື້ອງຊ້າຍຂອງພໍ່ຄືກູດນີ້ ກໍແມ່ນມໍລະດົກຂອງສົງຄາມມອບໃຫ້...ໂລກຄວນຢູ່ກັນຢ່າງສັນຕິພາບຈະດີກ່ວາ!..."

" ພໍ່...ພະນັນກັບລູກບໍ່...ລູກວ່າການບຸກຖະຫລົມ ອິຣັກຂອງສະຫະລັດ ແລະປະເທດພັນທະມິດຈະແກ່ຍາວກ່ວາສາມວັນ!

ພໍ່ ຍິ້ມຢ່າງເຊື່ອໝັ້ນຕົນເອງ.

"ລູກຈະເອົາຫຍັງພະນັນກັບພໍ່..."

" ຫາກສົງຄາມສຳເລັດພຽງສາມວັນ...ເງິນເດືອນ ລູກສາມເດືອນ...ອີ່ພໍ່ ເອົາໄປຫມົດເລີຍ...ສະແດງວ່າ ອີ່ພໍ່ ຕົກລົງແມ່ນບໍ່ ?..."

" ລູກຈະໃຫ້ພໍ່ເອົາຫຍັງເປັນການພະນັນ ?..."

ຂ້ອຍຖິ້ມສາຍຕາໄປຍັງເກີບໂຊ ອາເມລິກາ ທີ່ນັ່ງຮຸນຢູ່ກູ້ໂຊ. ເກີບໂຊ ຄູ່ນີ້ ອີພໍແພງທີ່ສຸດ.

ພໍແມ່ມເບິ່ງໜ້າຂ້ອຍ ແລ້ວງຶກຫົວຕາງຄຳຕອບ.

" ອີພໍ ໂອເຄ ແລ້ວແມ່ນບໍ່ !... "

ຂ້ອຍເດີນໄປຈັບມືພໍ່ ເພື່ອຢັ້ງຢືນການຕົກລົງໃຫ້ມີປະສິດທິຜົນ ແລະຂະນະນັ້ນ...ຜູ້ທີ່ເປັນພະຍານເຫັນຮູ້ນຳ ກໍ່ມີອີແມ່ ແລະ ນ້ອງຊາຍສາມຄົນ ແລະ ແລ້ວພໍລູກພວກຂ້ອຍກໍ່ຕິດຕາມສະຖານະການສົງຄາມ ອ່າວເປີເຊຍ ຕໍ່ໄປ. ຄວາມຈິງຂ້ອຍເຂົ້າຂ້າງອີຣັກ ເພາະຜົນມີຢູ່ວ່າລະຫວ່າງຜູ້ຮຸກຮານແລະຜູ້ລຸກຕ້ານອີງ ໃສ່ຄວາມເປັນຈິງຂອງປະຫວັດສາດ ຫລາຍຍຸກຫລາຍສະໄໝ ຜູ້ລຸກ ຕ້ານຍ່ອມເປັນຜູ້ມີເປີເຊັນຊະນະຂ້ອນຂ້າງສູງ.

ສົງຄາມອ່າວເປີເຊຍ ເລີ່ມຕົ້ນແລ້ວ!

ເລີ່ມຕອນເຊົ້າ ວັນທີ 17/1/91,3 ໂມງເວລາທ້ອງ ຖິ່ນກົງກັບ 7 ໂມງເຊົ້າເວລາບ້ານເຮົາ.

ສົງຄາມເລີ່ມຕົ້ນດ້ວຍກອງທັບສະຫະລັດອາເມລິກາ ໄດ້ ຖິ້ມລະເບີດຢ່າງໜັກໃສ່ນະຄອນຫລວງ ແບກແດດ ປະເທດອີຣັກ . ເປົ້າໝາຍການບຸກໂຈມຕີຄັ້ງນີ້ແມ່ນແນໃສ່ຈຸດຍຸດທະສາດທະຫານເປັນຈຸດໜັກ.

ປະທານາທິບໍດີ ບຸສ ແຫ່ງສະຫະລັດ ຖະແຫລງວ່າ: ການບຸກໂຈມຕີອີຣັກ ແມ່ນການປົດປ່ອຍ ກູເວດ ອອກຈາກການ ຍຶດຄອງທາງການທະຫານຂອງອີຣັກ.

ຊາວໂລກພາກັນຕົກຕະລຶງ ເມື່ອເຫັນສະຫະລັດແລະພັນ ທະມິດປົດປ່ອຍກູເວດ ພັດແມ່ນການມາຍິງຖະຫລົ່ມນະຄອນຫຼວງແບກແດດ ຂອງອີຣັກ ທີ່ບໍ່ແມ່ນການຖະຫລົ່ມຈຸດຍຸດທະສາດ ທະຫານຂອງອີຣັກ ທີ່ຍຶດຄອງກູເວດ.

ອີຣັກ ໄດ້ກ່າວປະນາມສະຫະລັດວ່າ: ເປັນຜູ້ເຈດຕະນາຢາກກໍ່ສົງຄາມກັບອີຣັກ ອາເມລິກາເອງບໍ່ມັກສັນຕິພາບແລະອາເມ ລິກາ ຍັງເປັນຜູ້ຮຸກຮານ ອີຣັກ ໂດຍກົງ.

ມື້ທຳອິດ ອີຣັກ ທ່າເປັນເສືອບໍ່ມີເລັບ.

ສະຫະລັດແລະພັນທະມິດ ໂຄສະນາວ່າ ທຸກຈຸດຍຸດທະ ສາດການທະຫານຂອງອີຣັກຖືກທຳລາຍຢ່າງຮາບຄາບ.

ມື້ຕໍ່ມາ ອີຣັກກໍ່ສະແດງລາຍເສືອທີ່ມີເລັບໂດຍການຍິງ ລູກສອນໄຟ ເຈັດລູກຖະຫລົ່ມນະຄອນຫລວງ ແຕນເລີວິດ ຂອງ ອິດສະຣະແອັນ ຕາມແຜນການຍຸດທະສາດການທະຫານຂອງ ຊັດດຳຮຸດເຊັນ ໄດ້ຖະແຫລງວ່າ:

ຖ້າຖືກໂຈມຕີ ຈາກສະຫະລັດແລະພັນທະມິດມື້ໃດ ຈຸດທີ່ ອີຣັກ ຈະໂຈມຕີກ່ອນໝູ່ຄືອິດສະຣະແອັນ ແລະ ອີຣັກ ກໍໄດ້ ສັດຊື່ຕາມຄຳຖະແຫລງການຂອງຕົນອີຫລີ. ແລະມື້ຕໍ່ມາອີຣັກກໍ່ຍິງຖະຫຼົ່ມຊາອຸດີ ອາລາບີ ດ້ວຍລູກສອນໄຟອີກສາມລູກ ເພື່ອສະແດງ ໃຫ້ສະຫະລັດແລະພັນທະມິດພິສູດວ່າ ອີຣັກຄືເສືອແລະ ບໍ່ແມ່ນ ໝູ ແລ້ວສົງຄາມອ່າວເປີເຊຍກໍ່ແກ່ຍາວມາເປັນມື້ທີເຈັດຄືມື້ນີ້.

ອີ່ພໍບໍ່ປາກພໍຄວາມ

ເກີບໂຊ ອາເມລິກາ ໄດ້ຕົກມາເປັນຂອງຂ້ອຍຕາມການພະນັນ.

ອີແມ່ ກໍເຍີ້ຍ ນ້ອງຊາຍກໍເຍີ້ຍພໍ່.

ອີພໍ່ເຮັດຄືຫອງບໍ່ຮູ້ຮ້ອນ ແຕ່ພໍ່ຍິ້ມຫົວອອກມາຄືວ່າຍັງ ເຊື່ອຫມັ້ນໂຕເອງຢູ່

ຕອນເຊົ້າມື້ຕໍ່ມາ,

ຂ້ອຍເອົາເກີບໂຊອາເມລິກາມາໃສ່

ຈັ່ງແມ່ນພໍດີ ກັບຕີນຂ້ອຍ.

ຂະນະທີ່ສຸບເກີບຢູ່ນັ້ນ, ຂ້ອຍຄິດເຖິງເລື່ອງສັ້ນຂອງນັກ ຂຽນບູນທະນອງ ຊົມໄຊພົນ ທີ່ເວົ້າເຖິງກະດູກອາເມລິກາແລະໄຊ ສຸວັນ ແພງພົງ ທີ່ເວົ້າເຖິງ "ເສືອອາຖັນ".

ຂ້ອຍເຮັດປາກຈົ່ມຄາຖາຢູ່ຜູ້ດຽວ.

ເກີບຄູ່ນີ້ ເປັນເກີບອາຖັນຄືກັນນັ້ນລະ

ເກີບ ເມດອິນຢູ ເອສເອ (Made in USA) ເປັນເກີບທີ່ມີມົນທົນທີ່ບໍ່ດີ.

ເກີບຢູ ເອສ (US) ວ່າແຕ່ໄປຮອດປະເທດໃດ, ຈອກແຈໃດ ມັກຈະມີເລື່ອງບໍ່ດີເກີດຂຶ້ນ, ສິ່ງນັ້ນຄືສົງຄາມຄວາມ ຕາຍແລະຄວາມຫາຍຍະນະ...ຫລັງຈາກຂ້ອຍໃສ່ເກີບໂຊຮຽບ ຮ້ອຍແລ້ວ, ຂ້ອຍຍ່າງທີບພື້ນເຮືອນດັງ ກັບ!ກັບ!ກັບ! ດັງທະຫານຈະອອກແນວຮົບ.

ຂ້ອຍສົມມຸດໂຕເອງເປັນພົນທະຫານ.

ຂ້ອຍຍ່າງ ກົ້ງໜ້າໄປຫາພໍ່ ທີ່ກຳລັງນັ່ງຢູ່.

ຂ້ອຍຍົກມືຊາລູຍ (Salut) ພໍ່ຄືທະຫານຄຳນັບນາຍ

ຂ້ອຍເວົ້າອອກໄປວ່າ:

" ຂໍລາຍງານທ່ານ ພັນໂທ!...ຜູ້ນ້ອຍໃນນາມຄົນລາວ ຜູ້ໜຶ່ງທີ່ໃສ່ເກີບໂຊ ອາເມລິກາ ແຕ່ບໍ່ຂໍສະໜັບສະໜູນອາເມລິກາ...ຜູ້ນ້ອຍບໍ່ມັກສົງຄາມ...ຜູ້ນ້ອຍມັກສັນຕິພາບ!..."

ອີແມ່ ແລະ ນ້ອງຊາຍທີ່ກຳລັງເຫັນຂ້ອຍຕະຫລົກຕໍ່ພໍ່ຄືແນວນັ້ນ ພວກເຂົາພາກັນຫົວຂວັນເຂົາຕາຍວ່າ..[redacted]

ວັນທີ 29/1/1991.


ศาลานักเขียน ๑
๑๘ พ.ย. ๓๒



# ຝັນຂອງມະນີແດງ

ທຸກຄົນ ເກີດມາມີຝັນ

ຝັນ! ເປັນ ຢາໃຈ

ຝັນ! ຄືສິ່ງຍົວະໃຈ

ແລະ ຝັນ ຄືກຳລັງໃຈ

ຝັນ...ຈະເປັນຈິງ ຫລື ຝັນລ້າຝັນດາຍນັ້ນ ກໍຂຶ້ນກັບກາລະໂອກາດ ເງື່ອນໄຂສະພາບແວດລ້ອມ ແລະ ຂຶ້ນຢູ່ກັບຕົວບຸກ ຄົນເອງທີ່ຈະເປັນຈ່າສານແຕ້ມຄວາມຝັນໃຫ້ກັບຊີວິດກໍຄືອານາຄົດ , ແຕ່ທຸກຄົນເກີດມາໃນໂລກຕ່າງກໍມີສິດທີ່ຈະຝັນ.

ຝັນຂອງເຈັກແປະ"ໃຜຈະເປັນນາຍພິມນາຍພັນ...ອົ້ວກໍ ບໍ່ສົນ!...ອົ້ວສົນໃຈແຕ່ເງິນ!..."

ຕູ້ດຳໂກ້ຍຝັນ " ຊີວິດນີ້ບໍ່ຢາກລ້ຳ ຢາກລວຍຫຍັງໝົດ... ມີເຂົ້າກິນ-ມີນາມີຄວາຍ-ມີກວຽນລຳໜຶ່ງ-ມີເຮືອຕຶກແຫຫາ ປາແລະ ກໍມີເມຍສາວນ້ອຍຄອຍເອົາໃຈກໍພໍແລ້ວ ແຮະງ!...

ຝັນປ້າຄຳແພງ "ຢາກມີເງິນຫລາຍໆເດ...ຊິປຸກເຮືອນ ວິນລາ ໃຫ້ຄົນຕ່າງປະເທດເຊົ່າ...ຢູ່ທ່າງໃຊ້ທ່າງຈ່າຍ... ສະບາຍ!ສະບາຍ!...

ວົງເດືອນ ຝັນຢາກເປັນພະເອກໜັງ

ສົມຫລີ ຝັນຢາກເປັນນາງເອກລຳເລື່ອງ

ບົວຂຽວ ຢາກເປັນນາງແບບ

ວົງສະກຸນ ຢາກເປັນດາລານັກຮ້ອງ

ໂອຍ! ໂລກເອີຍ...ມີສາລະພັດຝັນ ເພາະທຸກຄົນຕ່າງກໍມີສິດທີ່ຈະຝັນ...

ຕໍ່ໄປ ຂໍເຊີນທ່ານພົບກັບ"ຝັນຂອງມະນີແດງ"ໄດ້ລະບັດນີ້!.

ມະນີແດງ ປາກສຽງໄທໃຕ້. ສະກຸນພໍ່ນາໜາເຕົ່າ. ໂຊກ ດີຟ້າເຂົ້າຂ້າງໄດ້ໄປສຶກສາທີ່ຕ່າງປະເທດ. ຄວາມຮູ້ຂັ້ນປະລິນ ຍາໂທ. ມາຮອດບ້ານບໍ່ທັນມີງານທຳ. ວິຊາສະເພາະຮຽນມາ ແມ່ນກ່ຽວກັບທິວລົດໄຟ. ຊິວ່າຫວ່າງງານກໍຍັງບໍ່ທັນແມ່ນ ເພາະຜູ້ກ່ຽວກຳລັງມີອາຊີບຖີບສາມລໍ້ຫາເຊົ້າກິນແລງ.

ສາມປີຫລັງ,

ຂ່າວຄາວ ມະນີແດງ ລ້ຳລວຍຊ່າລືດັງເມື່ອຮອດບ້ານ. ບໍ່

ຈັກອ້າຍ ບໍ່ຈັກນ້ອງສາວ ຂຽນຫນັງສືມາຂໍເງິນ. ເພື່ອຄວາມ ແນ່ໃຈ ພໍ່ເຖົ້າຈານເປີ ພໍ່ເກີດຂອງມະນີແດງຈຳຕ້ອງປືນລົດ ໂດຍສານຂົນມາວຽງຈັນ, ໃນທີ່ສຸດມັນບໍ່ຄືເຂົາຈ່າ ມະນີແດງ ກໍຍັງເປັນມະນີແດງຄົນເດີມ ດີແຕ່ຍັງພໍມີເງິນຄ່າລົດໃຫ້ພໍ່ກັບບ້ານ . ເວົ້າເລື່ອງຊີວິດມະນີແດງ ເຂົາເອງກໍອິດຫົວຂວັນຊີວິດເຂົາເອງບໍ່ໄດ້ ມີບາງເທື່ອເຂົາຫົວຂົນ ບັກດັ່ງໆເຂົາວ່າຫົວໃຫ້ໂລກ ສະຫວ່າງ.

ຮູບຮ່າງມະນີແດງ ອ້ອນຂ້າງເຈົ້າຊູ້ຫຼູ້ເຫຼົາ. ເຂົາເປັນຄົນສູງຮຽວ ຜິວດຳເຫລືອງ ເປັນຄົນເວົ້າດີໃຈດີ ມັກເອົາໃຈເພື່ອນ ຝູງຕໍ່ຫນ້າຜູ້ສາວເຂົາທຳຕົວເປັນສຸພາບບຸລຸດເຕັມຮ້ອຍ. ຫມໍ່ນີ້ເອົາໃຈຜູ້ຍິງເກັ່ງ ເວລາລົມສາວມັກໃຊ້ສຳນວນຄົມພະເອກຫນັງ, ລົມສາວຫຼາກເທື່ອພານຖືກແຕ່ເມຍເຂົາ ມີເທື່ອຫນຶ່ງເກືອບຖືກຄ້ອນຜົວເຂົາຂຸນຫມໍ່ນີ້ ມັກຖືກແຕ່ຜູ້ສາວຕົນ ລົມສາວແຕ່ລະເທື່ອວ່າແຕ່ຊິ ໄດ້ເລື່ອງເລື່ອຍໆ ໃນທີ່ສຸດຊາຕາກຳຫມໍ່ກໍພໍພຽງໄດ້ແຕ່ເປັນມິດແດງໂດ່ງເຝົ້າຕົ້ນຫມາກມ່ວງ.

ສະພາບຄ່າຄອງຊີບ ເຂົ້າຢາກຫມາກແພງ ກໍເປັນພູເຂົາທັບຫົວອີກ. ໄປຫາເງິນປານກັບໄປຊອກຄຳ. ເຮືອນເຊົ່າເຂົ້າຊຸຄ່າໄຟຟ້ານ້ຳປະປາ ຄອຍຫົວເຍີ່ຍທ້າທາຍ. ຊ້ຳບໍ່ຫນຳຍັງຕ້ອງໄດ້ຮັບຜິດຊອບອີກ ສອງຊີວິດທີ່ເປັນນ້ອງຊາຍແລະຫລານຊາຍທີ່ເຂົາ ເຈົ້າທັງສອງຢູ່ໃນໄວການສຶກສາ. ຄືແນວນັ້ນ; ຫຼາກຄວາມເປັນຕາຍຂອງສອງຊີວິດກໍຕ້ອງໄດ້ຫອບໂຍນຖົມໃສ່ບ່າຂອງມະນີແດງຄົນງາມຫມໍ່ນີ້.

ມະນີແດງ!

ເຂົານີຟັນ

ບາງຄັ້ງເຂົາກໍໄຫ້ວອນໃຫ້ຟັນເປັນຈິງ

ການຕົວະໂຕເອງ ກໍຄືການໃຫ້ກຳລັງໃຈໂຕເອງ.

ຄືແນວນັ້ນ, ມະນີແດງຈຳຕ້ອງກັດແຂ້ວກົ້ມໜ້າກົ້ມຕາຕົວະຕົນເອງຕະຫລອດມາ ໂດຍການສົມສູດໂຕເອງວ່າ: ເຂົາຄືເສດຖີໃນທ້ອງເລື່ອງ...

ນົມນີ ມະນີແດງ ຮູ້ສຶກວ່າຄືກັບໄຟຈູດກົ້ນ.

ເຂົາອີລົມຫົນຫວຍ

ບາງທີບາງເທື່ອ ເຂົາຢືນຊຶງລຶງຢ່າງເຈົ້າຄວາມຄິດ

ນັ້ນມາ! ເບິ່ງແມ່ເຂົາລັກຍິ້ມຜູ້ດຽວຢູ່ນັ້ນມາ!

ເຂົາຄິດຢາກດຶງ ດວງຕາເວັນໃຫ້ຕົກດິນໄວໆ.

ປານໃດດ ມັນຊິຄ່ຳ!

ເຂົາຈຶກເອົາໃບຫວຍພັດທະນາມາໄຈ້ງເບິ່ງໂຕເລກ.

ສົມພໍດອກ! ນົມນີ ມະນີແດງ ຊື້ໃບຫວຍພັດທະນາວ່າຊຸ້ມ ສາເຢີ!...

ເຂົາລົງຫົນໜົດຕັ້ງຫ້າພັນກີບພຸ້ນ

ສາທຸ! ຂໍໃຫ້ຟັນເຂົາຈົ່ງເປັນຈິງເຖີດ!

ແລ້ວຄ່ຳຄືນຂອງນົມນີ ມະນີແດງ ກໍມີໜ້າທີ່ບ່ອນອອກຫວຍພັດທະນາ.

ມະທີ່ຫວຍ ພັດທະນາ,

ສອງຝ່າຍເສັ້ນທາງຖະໜົນລ້ານຊ້າງຫລາກຫລາຍໄປ ດ້ວຍຄົນ.

ຜູ້ຍິງ ແລະ ຜູ້ຊາຍຫົວຈຸ້ມໃສ່ກັນ.

ຕ່າງກໍມີສິດທີ່ຈະໂອກເພາະຕ່າງກໍມີສິດທີ່ຈະຝັນ.

ຕາມສະຖິຕິທົ່ວໂລກທີ່ບໍ່ເປັນທາງການ ຜູ້ມັກນິຍົມຫລິ້ນ ຫວຍສ່ວນໃຫຍ່ ມັກຈະເປັນຄົນຈົນເກືອບເຈັດສິບເປີເຊັນ ເພາະຕາມຫລັກຈິດຕະວິທະຍາ ໄດ້ຂຽນວ່າ: ຄົນຈົນມີຝັນອ້ອນອ້າງຈະ ສູງກ່ວາຄົນລວຍ ກໍໝາຍວ່າ: ຄົນຈົນມັກຫລິ້ນຫວຍ–ຄົນລວຍມັກຫລິ້ນຮຸ້ນ.

ມະນີແດງ ເກັບຕົວງຽບຢູ່ກ້ອງຕົ້ນຫູກວາງໜ້າໂຮງຮຽນ ຊຸດົມວຽງຈັນ. ເຂົາມີງຫ່າງຈາກທາງໄກເກີບເພື່ອປ້ອງກັນຊຸປະຕິເຫດກາງຖະໜົນ. ເຂົາບໍ່ ຢາກເປັນຊາກພິຄົນຕໍ່ໄປ ເພາະ ປີໃໝ່ສາກົນ ຜ່ານກາຍເລີຍມາຕັ້ງດົນເຕີບ ຊຸປະຕິເຫດບົນ ຖະໜົນລ້ານຊ້າງນີ້ອອກຫວຍ ກໍໄດ້ກິນກົນຊີວິດມະນຸດຕັ້ງຫລາຍ ສິບເຕີບ ເວົ້າມາໜ້າຂົນຫົວລຸກ.

ເຂົາມີງຮົ່ມຢາແລະພົມຄວັນຢາດ້ວຍທ່າທາງຜູ້ມີຝັນ

ດວງຕາທັງຄູ່ ບຸຝູງຄົນໄປຫາບ່ອນວາງສະແດງລາງວັນຫວຍທີ່ມີລາງວັນທີໜຶ່ງ ລົດຈັກຮອນດ້າ ອາເກຍຮາ ແລະ ລາງວັນທີສອງ ລົດຈັກ ຮອນດ້າ ໂນວາ ແລະຕັ້ງໄປ...

ເຂົາຝັນ!

ເຂົາຫວັງ!

ເຂົາຄິດວ່າ ຖ້າເຂົາຖືກຫວຍລາງວັນທີໜຶ່ງ ລົດຈັກຮອນດ້າ

ອາເກຍຣາ, ເຂົາຈະບໍ່ຊື້, ເຂົາຈະຂາຍ; ເງິນສ່ວນໜຶ່ງຈະ ໝູນເຂົ້າໃນທຸລະກິດການຄ້າ, ສ່ວນໜຶ່ງກໍຈະໃຊ້ໜີ້ສິນແລະສ່ວນເຫຼືອກໍຈະຊື້ລົດຈັກຮ້າງສ່ຳໃດສ່ຳໜຶ່ງພໍໄດ້ຂີ່ກໍພໍແລ້ວ.

ຝັນມາຮອດນີ້ ເຂົາກໍຍິ້ມຫວານໃຫ້ກັບຊີວິດ.

ເວລາລະທຶກໃຈໃນການອອກສະຫລາກຫວຍກໍຍ່າງຫຍັບເຂົ້າມາເລື້ອຍໆ. ສຽງໂຄສົກປະຈຳເວທີຫວຍກໍໂປ້ງປາວຊັກຊວນ ອອນຊື້ໃບຫວຍຢ່າງປາກປຽກ: ສ່ຽງໂຊກ–ສຽງໄຊ–ຖ້າໄດ້ແມ່ນບໍ່ຊວຍ ຖ້າໂຊກຊ່ວຍໄດ້ ລົດຈັກ...ເຊີນ!

ມະນີແດງ ຫົວໃຈຕຳເຂົ້າບາດຖີ່ບາງຫ່າງ.

ຫົວໃຈເຂົາໄຫວ້ວອນເອີ້ນຫາ ເທວະດາຟ້າດິນໃຫ້ມາບັນດົນບັນດານຊ່ວຍຂຽນໂຕເລກລາງວັນທີໜຶ່ງ ຈົ່ງເປັນຂອງເຂົາດ້ວຍເຖີດ! ຫລືບໍ່ດັ່ງນັ້ນຖືກລາງວັນທີສອງກໍໄດ້!

ແລະແລ້ວ ມະນີແດງ ກໍຫົວຂຶ້ນອາກງໃຫ້ກັບຕົວເອງຈົນ ຄົນໃກ້ຄຽງງວາກມາເບິ່ງ. ໃນລາງວັນທີໜຶ່ງທີ່ມີໂຕເລກຫ້າໂຕເຂົາຖືກແຕ່ເລກແປດໂຕດຽວ, ສ່ວນລາງວັນທີສອງ ບໍ່ເຫັນຮອດ ກິນ ແລະ ລາງວັນທີສີ່ ທີ່ຫ້າ ພໍໄດ້ແຕ່ສູຍຂ້າງສູຍແຂວ.

ຂາກັບເມືອເຮືອນ,
ເຂົາຫົວຂວັນໂຕເອງໄປສຸດທາງ
ຢ່າງຂາເຂົ້າປະຕູເຮືອນ,
ຫລານຊາຍແລະນ້ອງຊາຍກໍລາຍງານວ່າ ບໍ່ມີເຂົ້າໝ່າ.
ເຂົາຫົວຮາງໆໆ! ບັກດົງໆ

ນັຄາຊາຍແລະຫລານພາກັນງົງ

" ພວກສູຕ້ອງອົດເຂົ້າຄາບໜຶ່ງດີ!...ເງິນກູວ່າຈະໄປຊື້ເຂົ້າສານນັ້ນ...ກູໄປຊື້ໃບຫວຍໝົດແລ້ວ...ແມ່ນແຕ່ລາງ ວັນຊົມເຊີຍ ມັນກໍບໍ່ແນມເບິ່ງໜ້າກູ!...

ມັນຊວຍນຳພວກສູນີ້ລ່ະ!...ຣາງງງ!..."

ແລ້ວເຂົາກໍລົ້ມຕົວໃສ່ໝອນ ເພື່ອຈະນອນຫລັບຫຼຸກ.

ເຊືອບຕານອນ ບໍ່ພໍເທົ່າໃດນາທີເຂົາກໍຝັນ.

ເຂົາຝັນວ່າຖືກຫວຍພູດທະນາສາຍພິເສດ.

ເຂົາຖືກລາງວັນທີໜຶ່ງ ລົດໂຕໂຍຕາກາບະ.

ເຂົາດີໃຈ ເອົາຕາຍວ່າ

ເຂົາຕົບມືພີຜ້າ-ເຕັ້ນແຮ້ງ ເຕັ້ນກາ-ຊົກໝັດຊົກມວຍ.

ແລ້ວ ເຂົາກໍສະເດີດຕື່ນຂຶ້ນທາງນັ່ງ

ອ້າວ! ກູຝັນຊັ້ນຫວະນີ້!

ເຂົາສີຫູ ສີຕາ

ເຂົານັ່ງ ເອົາມືກອດຕົວເຂົາພາຍໃຕ້ລາຕີການອັນອັບເສົ້າ.

ເຂົາທົບທວນຄວາມຝັນດ້ວຍຄວາມດີໃຈໝຸ່ນໆຢ່າງລົມມິຝັນ! ■


500
໑໐໐
50

# ເງິນຄ່າໂຮງຮຽນ

ຄຳເຄນ ຈູງລົດຖີບຄູ່ຊີບອອກຈາກເຮືອນ. ເຂົາມາຢຸດຢູ່ປາກປະຕູບ້ານ ເຂົາຢຸດຢືນຕັ້ງຕົນເຕີບ. ເຂົາຊຶງຊົງວ້ວງງົງຄືກັບ ຄົນຫລົງປາ.

- ເຮົາຈະໄປໃສດີ !

- ຈະໄປຫາໃຜ ?

- ແມ່ນໃຜຈະເປັນຜູ້ແກ້ຂັດຍາມຊາຕາຊີວິດຕົກອັບແບບນີ້ !

ເຂົາເກີດແລະໃຫຍ່ຢູ່ວຽງຈັນ ຈົນອາຍຸສາມສິບຫ້າປີ, ແຕ່ຊອກຫາເພື່ອນຕາຍມັນຊາງຫາຍາກ, ສ່ວນເພື່ອນຈອກເຫລົ້າແມ່ນມີບໍ່ອຶດ.

ເຂົາປິ່ນອ້ອມ ລົດຖີບ ຄູ່ຊີບ. ເຂົາມຸ່ງໜ້າໄປທາງສີໄຄ. ເຂົາຖີບລົດໃນຄວາມໄວປານກາງ ທ່າມກາງສຽງລົດຈັກໃຫຍ່ ຂອງສັງຄົມນະຄອນຫລວງວຽງຈັນ. ຂະນະທີ່ເຂົາຖີບລົດຢູ່ນັ້ນຈະໄດ້ຍິນສຽງໂກບໂສ້ດັງກະແຣກໆ ! ທີ່ປຽບເປັນດົນຕີ ແນວເພງ ເພື່ອຊີວິດເສບັນເລງກ່ອນຂວັນໃຫ້ໃຈສູ້.

- ຊີວິດເອີຍ! ຖ້າມຶງຈະທຸກຮອດມື້ຕາຍ ກໍຂໍໃຫ້ມຶງທຸກ ໄປເຖີດ !

- ແຕ່ກູຄິດວ່າ ມື້ໜຶ່ງກໍຕ້ອງພົ້ນທຸກ !

- ຊີວິດນີ້ເລື່ອງທຸກບໍ່ເຄີຍຢ້ານ! ຢ້ານແຕ່ເປັນເສດຖີ!

- ທຸກສ່ຳນັ້ນບໍ່ຍອມຕາຍ!

- ຕັ້ງແຕ່ໜ້າບໍ່ມີເຈົ້າ ມັນກໍຍັງຢູ່ລອດໄດ້! ກູມັນຄົນນີ້ນ່າ !

ບໍ່ພໍເທົ່າໃດນາທີ ເຂົາກໍມາຮອດຕະຫລາດສີໄຄ ແລະ ເຂົາກໍມຸ່ງໜ້າສູ່ບ້ານທົ່ງປົ່ງຕໍ່ໄປ.

ຍາມຊີວິດຄືນຕົກນ້ຳແນວນັ້ນ, ເຂົາຄິດເຫັນແຕ່ໜ້າເມຍ. ຄິດຮອດຄຸນງາມຄວາມດີແລະຄິດເຫັນຄວາມຂະຫຍັນຂັນແຂງເມຍ ທີ່ຢືນສູ້ຄຽງບ່າຄຽງໄຫລ່ກັບເຂົາ. ສະໄຫມເມຍຍັງມີຊີວິດຢູ່ ເຖິງຈະທຸກຍາກລຳບາກກໍພໍຍິ້ມໄດ້ ແຕ່ມາບັດນີ້ຊາຕາຊີວິດຄອບຄົວຕົກຢູ່ໃນພາວະຍິ້ມຍາກສາແລ້ວ.

ຄຳເຄນ ເປັນຄົນຮັກເມຍຫລາຍ.

ຕອນເມຍຕາຍ ເຂົາຮ້ອງໄຫ້ເອົາແທ້ເອົາວ່າ.

ເຂົາບວດນຳເມຍສາມວັນແລະມາຮອດມື້ນັ້ນເຂົາຍັງຊື່ສັດ ຕໍ່ຄຳເວົ້າຂອງເມຍທີ່ວ່າ: ກ່ອນເມຍຈະໃຈຂາດ ເມຍໄດ້ສັ່ງເສຍວ່າ: ຖ້າຈະເອົາເມຍໃຫມ່ຂໍໃຫ້ລູກໄດ້ໃຫຍ່ເປັນທ້າວເປັນ ນາງ ສາກ່ອນ.

ເຈັດປີແລ້ວເດ ທີ່ເຂົາຄອງຄວາມໂສດຫລັງຈາກເມຍຕາຍ.

ໃນທີ່ສຸດ ເຂົາມາຢຸດຢູ່ຕໍ່ໜ້າເຮືອນຫລັງໜຶ່ງ.

- ມີໃຜຢູ່ເຮືອນບໍ່ ?

ມີຜູ້ຊາຍຄົນໜຶ່ງປ່ອນໜ້າອອກມາ.

- ບັກເຄນສ່ຽວ! ມຶງໄປຈັ່ງໃດມາຈັ່ງໃດ ! ລົມໜຍັງ ພັດມຶງມາ!

- ກໍລົມຮັກລົມແຄ້ນນີ້ລະພັດມາ ຮາງ!...

- ເກືອບປີບໍ່ ເຫັນກັນ! ເປັນແນວໃດຊີວິດມຶງດີຂຶ້ນກ່ວາເກົ່າຕີ່ບໍ ?...

- ເອີ! ຍັງເປັນບັກເຄນຄົນເດີມ!..ຍັງທຸກຍັງຍາກ ຢູ່ສ່ຽວເອີຍ!...ກໍຢາກເປັນເສດຖີຢູ່ ແຕ່ຟ້າບໍ່ເປັນໃຈ!...

- ເຊີນ! ເຊີນຂຶ້ນເທິງເຮືອນສ່ຽວ!...

- ເປັນໜຍັງຄືວ່າມຶງຈ່ອຍແທ້ ?...ມຶງບໍ່ສະບາຍຊຸມຂີ້ ?.

- ກູຫາກໍອອກໂຮງໝໍໄດ້ສາມມື້! ກູນອນໂຮງໝໍເດືອນ ກັບຊາວວັນ!...ສ່ຽວເອີຍ! ຄົນບໍ່ມີເງິນແດ່ສໍາເອົາຊີວິດໄປຖິ້ມ...ດຽວນີ້ຢູ່ໂຮງໝໍມີແຕ່ເງິນທັງນັ້ນ! ຫວ້ານຢາທຸກເມັດກໍຕ້ອງ ແມ່ນເງິນ...ແພດໝໍກໍຕ້ອງແມ່ນເງິນແລະຂອງຕ້ອນ...ຄົນລວຍຈະຖືກເອົາໃຈໃສ່ດີກ່ວາຄົນຈົນ...ເຂົ້າໂຮງໝໍເດືອນປາຍໝົດຄ່າສີ່ບາດ...ມີເທົ່າໃດກໍເຂາະຂອດໃສ່ຍ້ອນບໍ່ທັນຢາກຕາຍ.....ດຽວນີ້ຍັງຕິດໜີ້ພີ່ນ້ອງຕັ້ງແສນກ່ວາກີບ...ດີ! ແຕ່ຍັງມີຊີວິດຢູ່..ຄ່ອຍຊອກໃຊ້ຊອກແທນເອົາ!...

- ໂອຍ! ເວົ້າເລື່ອງໂຮງໝໍ ກູໂລດເໜັນປານໝົກ ປາແດກເນົ່າ... ເມຍກູຕາຍກໍຍ້ອນບໍ່ມີເງິນນັ້ນລະ!...ຖ້າມີຊາດ

ໜ້າຖ້າເລືອກເກີດໄດ້ກູຈະເກີດເປັນເສດຖີອີ່ສະບາຍໃຈ ແປດ ຢາງ!...

– ເຄນ!...ເບິ່ງໂຕຄືວ່າມີຫຍັງກັບເຮົາມີ້ລະ!

ຄຳເຄນ ຫລຽວເບິ່ງໜ້າສ່ຽວ.

– ຄວາມຈິງໃນໂລກນີ້ບໍ່ອິດແຕ່ຄົນ...ແຕ່ກູພໍ່ຫລຽວເຫັນແຕ່ມຶງ...ແຕ່ໃນສະພາບໜີ່ງກຳລັງຢ້ຳແຢ້ແນວນີ້...ກູບໍ່ຊ່າງຈະຂໍຮ້ອງຫຍັງນຳມຶງອີກແລ້ວ!...

– ມັນແມ່ນເລື່ອງໃດ?...ເລື່ອງເງິນບໍ່ສ່ຽວ!...

– ເອີ!...ມັນກໍທຳນອງນັ້ນລະ!...ຄົນອື່ນນີ້ ລູກຫ້າ ຄົນຈະເຂົ້າໂຮງຮຽນ,ເງິນຄ່າໂຮງຮຽນຕົກຫົວຄົນໜຶ່ງ 2.880ກີບ ແລະຫ້າຄົນຈະຕົກເປັນ 14.400 ກີບ...ດຽວນີ້ໝົດຕົນ ໝົດໂຕ ກູມີເງິນແຕ່ສອງພັນກີບ...ຄົນບໍ່ຊື້ປີ້ຄ່າໂຮງຮຽນກໍບໍ່ມີ ສິດເຂົ້າຫ້ອງຮຽນ...ສົກຮຽນປີກາຍກໍຍັງໄຄແດ່...ເງິນຄ່າ ໂຮງຮຽນເກັບເປັນເດືອນເອົາ...ເດືອນໜຶ່ງຕົກຫົວຄົນລະສາມຮ້ອຍກີບ...ກໍຍັງພໍສູ້ໄຫວ...ແຕ່ສົກຮຽນປີ 1991 ນີ້ຕີ...ເງິນຄ່າໂຮງຮຽນພັດເກັບລວດດຽວໝົດປີໂລດ 2.880 ກີບ ແລະ ມີລູກຫລາຍຄືເຮົາພັດເປັນວົນເປັນກຳບັກໃຫຍ່.

ຄົນຊິບໍ່ໃຫ້ລູກເຂົ້າຮຽນ ກໍຄິດເຫັນອານາຄົດລູກ.ບໍ່ຢາກ ໃຫ້ລູກໂງ່ຄືພໍ່ມັນ.ຢ່າງຂີ້ຮ້າຍກໍຢາກໃຫ້ລູກຮຽນມີອານາຄົດພໍລ້ຽງໂຕເອງໄດ້.ບໍ່ຢາກໃຫ້ພວກເຂົາເດີນຕາມຮອຍຕີນພໍ່ທີ່ເປັນ ກຳມະກອນຫາເຊົ້າກິນສວຍ.

ຄວາມຈິງສະໄຫມເຮົາກໍອາໃສວັດເທົ່ານັ້ນທີ່ໄດ້ມີການສຶກສາ ອ່ານໄດ້ຂຽນເປັນ. ອີກຫນຶ່ງຄັນຈະບໍ່ ໃຫ້ລູກເຂົ້າໂຮງຮຽນ ພັດ ຕົກຢູ່ໃນພາກບັງຄັບ. ຂັ້ນເທິງພັດອອກຄຳສັ່ງວ່າ: ເດັກນ້ອຍທີ່ມີອາ

ຍຸເຕັມກະສຽນທີ່ກຂອບຂັ້ນໄປຕ້ອງໃຫ້ເຂົ້າໂຮງຮຽນຫມົດ, ຖ້າ ບໍ່ ດັ່ງນັ້ນ ຜູ້ປົກຄອງເດັກເປັນຜູ້ຮັບຜິດຊອບເອົາເອງ.

ຫລັງຈາກລະບາຍຄວາມໃນໃຈສົ້ນສຸດ, ຄຳເຄນກໍເກົາ ຫົວ ຍ້ອກໆເຫມືອນຢາກເວົ້າວ່າໂລກເອີຍ! ໂລກແຫ່ງບັນທາ!...

ຄູສົມທະນາ ເກີດຄວາມເຫັນອົກເຫັນໃຈ.

ຄວາມຈິງ ເຂົາສອງຄົນນີ້ເຄີຍເປັນນ້ຳຜຶ້ງເຮືອເປັນ ເສືອ ເພິ່ງປ່າດ້ວຍກັນມາຫລາຍຄັ້ງຫລາຍທີ່ນແລ້ວ.

ຄູສົມທະນາ ລູກຢ່າງເຂົ້າໄປຫ້ອງນອນ, ມີເຂົາຖືເງິນ ຈຳ ນວນຫນຶ່ງ.

- ສ່ຽວກູຊ່ວຍມຶງໄດ້ແຕ່ 3000 ກີບ!

- ກໍຢ່າແລ້ວສ່ຽວ! ມຶງເອງກໍບໍ່ມີຢູ່ແລ້ວ!... ມຶງຈະຊ່ວຍ ກູ ແນວໃດ !

- ກໍຍ້ງວ່າກູຊ່ວຍມຶງ!... ກໍຊ່ວຍກັນຍາມທຸກນີ້ລະ... ບາດ ຍາມພວກເຮົາລວຍຈະຫັນຫລັງຊັ່ງກັນກໍບໍ່ເປັນບັນຫາ!...

- ຄູສົມທະນາຍົດເງິນສາມພັນກີບ ໃສ່ມືຄຳເຄນດ້ວຍຄວາມ ຈິງໃຈ.

- ກູຂໍຂອບໃຈນຳມຶງເດີສ່ຽວ!...ນ້ຳໃຈຂອງມຶງໃນເທື່ອນີ້ ກູຂໍຈົດຈຳຈົນວັນຕາຍ!...

-ກໍພວກເຮົາເຄີຍຊ່ວຍເຫລືອກັ້ນນ່າ!...ທີກູທີມຶງນັ້ນ ລະ ສ່ຽວ!...

ຄຳເຄນ ກັບຈາກ ທົ່ງປົ່ງ ແລະຍັງມຸ່ງຫນ້າຕໍ່ໄປທາງ ບ້ານ ດົງປາຍມາແລະເຂົາກໍໄປອີກຫລາຍບ່ອນເພື່ອຊອກຢືມເງິນ. ມັ້ນ ສອງຂາເຂົາທຳງານຫນັກ. ເຂົາເວົ້າວ່າ ຖ້າມີບ່ອນໃດພໍຈະ ຢືມ ເງິນໃຫ້ລູກໄດ້ເຂົ້າໂຮງຮຽນ ເຖິງຈະໄກເປັນຮ້ອຍຫລັກ ເຂົາກໍ ຈະຖີບລົດໄປຢືມ.

ຫລັງຈາກກິນແລງແລ້ວ,

ທີ່ບ້ານເຊົ່າເຮືອນຫ້ອງແຖວ ຕິດພັນດ້ວຍລາຄາເດືອນ ລະ 3.000 ກີບ ດອກໄຟມີອອນພຽງສອງດອກ,ດອກຫນຶ່ງ ທີ່ເຮືອນ ຄົວກິນແລະອີກດອກຫນຶ່ງໄຕ້ຢູ່ຫນ້າບ້ານ,ສ່ວນຫ້ອງນອນໄຕ້ ຕະ ກຽງນ້ຳມັນກາຊວນ. ການຫຸງເຂົ້າຕົ້ມແກງກໍໃຊ້ຟືນເປັນສ່ວນໃຫຍ່ ນ້ຳອາບນ້ຳກິນກໍຕ້ອງປະຢັດ, ເພາະສູມັ້ນໄຟຟ້າ-ນ້ຳປະປາກໍ ຫັນ ເປັນທຸລະກິດແລະອັນໃດກໍເປັນເງິນເປັນກຳໄລໄປຫມົດແລ້ວ. ອະ ນິຈາ! ຍຸກນີ້ມັນຍຸກເງິນຕາມນ່າ!...ແລະກໍຖືກກັບຄຳເວົ້າທີ່ວ່າ: ຖ້າບໍ່ຢາກ ໃຊ້ເງິນມີແຕ່ເກີດເປັນຄວາຍ!...

ຄຳເຄນ ນັ່ງຢູ່ຕັ່ງຫນ່ວຍຫນຶ່ງ. ແຂນເບື້ອງຫນຶ່ງເທົ້າໃສ່ປ່ອງ ຢ້ຽມ. ເຂົາຮີດຢາເຂົ້າປອດ ບາດເບົາໆ! ເຂົາໃຊ້ແສງ ຕາ

ຈ້ອງມອງໄປທາງທ້ອງຟ້າທີ່ມີແສງເດືອນແລະແສງດາວ. ແລະແລ້ວເຂົາກໍປ່ອຍແນວຄິດທົບທວນຫວນອາດີດ .

ຊີວິດຄຳເຄນ, ເກີດມາບໍ່ເຄີຍເຫັນໜ້າພໍ່ໜ້າແມ່. ເຂົາເປັນລູກມານທາງ. ດີແຕ່ບໍ່ແມ່ນເດັກຈໍລະຈັດ-ອັນທະພານ. ພໍ່ໃຫຍ່ ຂັ້ມຮູ້ຈັກຄວາມກໍຮູ້ຜູ້ທີ່ເຂົາເອີ້ນພຽງນັ້ນແມ່ນ ຍາທ່ານ ຄຳດີ ວັດໂນນຄໍ້, ດຽວນີ້ເພິ່ນກໍໝົດບຸນໄປແລ້ວ. ເຂົາຄິດວ່າຖ້າເຂົາມີຊີວິດ ຄືເດັກນ້ອຍຄົນອື່ນໆທີ່ມີພໍ່ກັບແມ່ ເປັນພົນເປັນຖານໃຫ້ ຊີວິດເຂົາກໍຈະບໍ່ຕົກຟາກລາກດິນຄືແນວນີ້.

ແຕ່ເຮັດແນວໃດໄດ້, ຊາຕາຊີວິດບໍ່ແມ່ນຈະນິລະມິດເອົາເອງໄດ້ ຄືພະເອກໃນເທບນິຍາຍ. ອັນໃດມັນກໍເປັນໄປແລ້ວ, ມີຊີວິດຢູ່ກໍນັບວ່າໂຊກຢູ່ແລ້ວ, ທາງອອກທາງດຽວກໍຄືຮ້ອງຄຳຂວັນວ່າສູ້ !

ພວກລູກທັງຫ້າກຳລັງເວົ້ານົວທົວມ່ວນກັນ. ລູກຊາຍກົກ ປຶ້ນແມ່ນຮຽນຊັ້ນມັດທະຍົມໜຶ່ງ. ອີກລູກສາວແລະລູກຊາຍຮຽນຊັ້ນປະຖົມຫ້າ, ອີກຜູ້ໜຶ່ງຮຽນປະຖົມສາມແລະລູກຊາຍຫຼ້າຮຽນຫ້ອງປະຖົມສອງ.

ສະເພາະສິກຮຽນປຶ້ມ, ເງິນຄ່າສົ້ງເສື້ອ-ຄ່າປຶ້ມ ສໍຊານ ຈະຄົບຄົນ ຜູ້ເປັນພໍ່ກໍເກືອບເປັນວິນຕາຍຢູ່ແລ້ວແລະຊ້ຳບໍ່ຫານຳກໍ ຍັງເງິນຄ່າໂຮງຮຽນອີກ.

ຄຳເຄນ ສູບລົມຫາຍໃຈເຂົ້າຢ່າງບໍ່ທົ່ວທ້ອງ.

ເຂົາແນມເບິ່ງລູກທັງຫ້າກໍເກີດຄວາມຊົມຊື່ນນຳອານ່າ ລົດຂອງພວກເຂົາ.

ລູກທ້າຄືນເລື້ອງຮຽນໜັງສືບໍ່ເປັນຕາຖິ້ມຈັກຄົນ,

ໂດຍສະເພາະລູກຊາຍກົກແມ່ນຄອງທີ່ໜຶ່ງທີ່ສອງ ທີ່ສາມມາ ແຕ່ຊັ້ນປະຖົມພູມ.

ເຂົາເອງກໍພະຍາຍາມເອົາຫລັງສູ້ຟ້າໜ້າສູ້ດິນເພື່ອໄດ້ເງິນຈູນເຈືອອານາຄົດຂອງລູກ. ຄວາມສຸກຂອງພໍ່ ກໍຄືໄດ້ເຫັນລູກເຕົ້າມີອານາຄົດດີມີລະ. ພວກລູກພາກັນກຽມຫົວປື້ມ, ກຽມອຸປະ ກອນການຮຽນເພາະມື້ອື່ນຄືນເປີດສົກຮຽນໃໝ່. ລູກຊາຍຫລ້າກໍເອົາສົ້ງເສື້ອຜືນໃໝ່ທີ່ມີເສື້ອຂາວແລະສົ້ງສີຟ້າມາອ້າງອວດພວກອ້າຍເອື້ອຍ.

-ພໍ່! ເງິນຄ່າໂຮງຮຽນມື້ອື່ນເປັນແນວໃດ ?...

ລູກຊາຍກົກຖາມຂຶ້ນ.

ຈາກຄຳຖາມຂອງລູກເໝືອນມີດສຽບຫົວໃຈ.

- ພໍ່! ຖ້າບໍ່ມີເງິນຊຸປີ ເພິ່ນບໍ່ໃຫ້ເຂົ້າຫ້ອງໃດ!

ລູກຊາຍຫລ້າສອຍ.

- ເອີ! ພໍ່ກໍ່ພໍ່ມີຢູ່ດອກ!...ພວກລູກຈົ່ງກຽມໃຈໄວ້ມື້ອື່ນ ທົນມາ!

ເຂົາຢືນໃຈເວົ້າເພື່ອປອບໃຈລູກທັງໆທີ່ເງິນຄ່າໂຮງຮຽນ ກໍບໍ່ທັນມີລົບຖ້ວນເທື່ອ.

ເງິນ! ຖ້າບໍ່ມີກີບໜຶ່ງກໍບໍ່ມີ! ພຣາຫຍ້ານາງເອີຍ!

ເງິນ! ຄືເທບພະເຈົ້າແທ້ໃດ! ຄົນບໍ່ມີເງິນອັນໃດກໍບໍ່ມີ ....

ຍາມເຈັບເປັນເອັນອຸ່ນລົມບໍ່ມີເງິນກໍກຽມຕົວເຂົ້າໂຮງສົບໄດ້... ສະແດງວ່າເງິນມີສິດຊີ້ຊົວດມະນຸດໄດ້.

ຄຳເຄນ ລຸກໂປ້ອືນ.

ເອົາຢ່າງວົນໄປວົນມາແລະກໍໄປຢຸດຢູ່ບ່ອນເກົ່າ.

ເອົາຄິດຮອດເງິນຄ່າແຮງງານກ້ອນໜຶ່ງຈຳນວນ 30.000 ກີບ, ກ່ອນໜ້ານີ້ເດືອນເສດໆ, ຄຳເຄນຮັບສະໝັກເຂົ້າ ເຮັດການກຳມະກອນກໍ່ສ້າງເຮືອນຫລັງໜຶ່ງ. ຄ່າແຮງງານວັນໜຶ່ງ 1.500 ກີບແລະເຮັດວຽກຊາວວັນເຕັມ.

ໄປຖາມເອົາເງິນນຳຫົວໜ້າຮັບເໝົາແຮງງານກໍນັດໝາຍມື້ນມື້ນ, ໃນທີ່ສຸດກີບໜຶ່ງກໍບໍ່ໄດ້. ຂ່າວຄາວຫົວໜ້າຮັບເໝົາແຮງງານມິດມີປານຫອຍໄຂ້.

- ຮ່າກິນຫົວມຶງເອີຍ! ຄ່າແຮງງານຕ່ຳຢູ່ແລ້ວ ກໍຍັງຖືກໂກງອີກ!

- ມຶງເດີ! ຖ້າພົບໜ້າມຶງຢູ່ທີ່ໃດ...ກູຊິເອົາກຳປັ້ນ ຟາດປາກມຶງໃຫ້ຫາຍແຄ້ນເບິ່ງ!...

ຄຳເຄນ ຈັບລົດຖີບ ຄູ່ຊີບຜ່າຄວາມມືດອອກໄປຢ່າງຄຸກ ລຸກລັກລັກ. ພວກລູກພາກັນງຶງທີ່ເຫັນ ພໍ່ຈູງລົດອອກດ້ວຍສີໜ້າ ເຄັ່ງອື່ນ ແຕ່ບໍ່ມີໃຜຈະກ້າຖາມວ່າພໍ່ໄປໃສ ?

ສິບສອງໂມງທ່ຽງຄືນ ຄຳເຄນ ຈຶ່ງກັບເຮືອນ

ລູກຊາຍຫລ້ານອນກົນສອດໆ ສ່ວນລູກຊາຍກົກແລະນ້ອງ ອີກສາມຄົນຍັງນັ່ງຄອຍຫາງພໍ່.

- ອ້າວ! ບໍ່ທັນພາກັນນອນຫວະ ?
- ພວກເຮົາຖ້າພໍ່!
- ຄຳເຄນ ຈົກເງິນອອກຈາກຖົງແລະກໍປົງລົງຕໍ່ໜ້າ ພວກລູກ.
- ນີ້ລະ! ຄືເງິນຄ່າໂຮງຮຽນ!
- ມື້ອື່ນ ໄປເຂົ້າໂຮງຮຽນຢ່າງສະບາຍ!
- ບໍ່ຈຳເປັນຈະຖາມວ່າເງິນກ້ອນນີ້ເອົາມາແຕ່ໃສ!
- ພໍ່ ບອກວ່າພໍ່ໄດ້ມັນມາດ້ວຍຄວາມບໍລິສຸດ!
- ໄປ! ພາກັນເຂົ້ານອນໄດ້!

ມື້ຕໍ່ມາ ພວກລູກຈຶ່ງລັກຮູ້ວ່າເງິນຄ່າໂຮງຮຽນກ້ອນນັ້ນ ແມ່ນພໍ່ໄປຂາຍລົດຖີບຮ້າງພໍ່, ແລ້ວພວກລູກທັງຫ້າກໍພາກັນຈ້ອງ ມອງເບິ່ງໜ້າພໍ່ດ້ວຍສາຍຕາເສົ້າໆ.

ວັນທີ 20/9/1991.





# ຖ້ວຍເຝີໃນຮອບປີ

*ທຸກເທື່ອທີ່ບັກຄຳໂກ້ຍູ້ລໍ້ຜ່ານກາຍຮ້ານອີນາຍຊຸມ ຮູ້ສຶກວ່ານ້ຳລາຍຂອງມັນໄຫລເຮ່ຍປາກອອກມາດ້ວຍຄວາມຢາກ. ເວົ້າແນວນີ້ກໍບໍ່ໝາຍວ່າບັກຄຳໂກ້ບໍ່ມີເງິນຊື້ເຝີກິນ ແຕ່ເງິນທີ່ພໍຊື້ເຝີ ຄຳໂກ້ ຈຳຕ້ອງອົດກິນນ້ຳລາຍເອົາໄວ້ເພື່ອນຳໃຊ້ໃນສິງຈຳເປັນອີກຫລາຍກ່ວາແລະແລ້ວຄຳໂກ້ກໍເດີນກົ້ມໜ້າຊຸກລໍ້ຕໍ່ໄປ.

ເກີດມາຈົນກໍບໍ່ໝາຍຈະໄປໂທດ! ເທວະດາຟ້າດິນ!
ຈະໄປໂທດພໍ່ກັບແມ່ ກໍບໍ່ເຂົ້າທ່າ.
ເກີດເປັນຄົນດີກ່ວາເກີດເປັນຄວາຍຕັ້ງພັນເທື່ອ !
ມີຫ້າກີບສິບກີບກໍຈ່າຍໄປ !
ບໍ່ຕາຍ ກໍພໍຊິໄດ້ກິນດອກ ສຳເຝີ ເອກະຊົນ !

ນີ້ຄືບົດເພງລຳພັນຂອງບັກຄຳໂກ້ຕາມຍະຖາກຳຂອງ ເດັກຂ້າງຖະໜົນ.

ປີນີ້ ຄຳໂກ້ອາຍຸສິບຫ້າຂວບເຕັມ. ພາສາພົນບ້ານເອີ້ນວ່າມັນກຳລັງສອນບ່າວ.

ຟັງແຕ່ຊື່ຄຳໂກ້ ກໍເປັນຊື່ທີ່ໂສພິໂສພາພໍຄວນ, ໃຫ້ຖືກແທ້ ຄົນທີ່ຊື່ວ່າຄຳໂກ້ ມັນຄວນຈະເກີດເປັນລູກເຖົ້າແກ່ຫລືຢ່າງນ້ອຍມັນຈະຕ້ອງເກີດໃນຕະກູນເສດຖີ. ແຕ່ເຮັດແນວໃດມັນເລືອກເກີດ ບໍ່ໄດ້ຄືດັ່ງເລືອກຊື້ຜັກໃນຕະຫລາດ, ວາດສະໜາ ຄຳໂກ້ ພໍພຽງແຕ່ເປັນຫນູຊີງຕີກຖັງຮຳ ແຕ່ບໍ່ແມ່ນຖັງເຂົ້າສານ.

ເຮືອນເຊົ່າເຊົາຊື້.

ໄຟຟ້ານ້ຳປະປາ ເປັນລາຄາ

ໄຟໄຫມ້ຂີວດີນພາກຫນຶ່ງນັ້ນລະຄື ຕົ້ນທາງຄວາມທາຍຍະນະຂອງຄອບຄົວຄຳໂກ້. ຫນີ້ສິນທີ່ກູ້ຢືມກໍຖີບຕົວຂຶ້ນສູງ, ສາມລໍ້ ຣູຊິບພໍ່ຈຳຕ້ອງຂາຍມາຕາບຫນີ້ແລະຄຳສັ່ງແບບຂຸນເສິກຂອງພໍ່ກໍໃຫ້ ຄຳຂາດກັບຄຳໂກ້ວ່າ ລູກຕ້ອງອອກໂຮງຮຽນມາເປັນເສົາຄ້ຳ ຄອບຄົວຊ່ວຍພໍ່ແມ່ແລະກໍປະໂອກາດໃຫ້ນ້ອງທັງສາມໄດ້ຮຽນ ຖ້າບໍ່ດັ່ງນັ້ນນ້ອງທັງສາມມັນຈະເປັນຄົນຕາບອດງົມຊ້າງ.

ຄຳໂກ້ ຄືດຮອດໂຮງຮຽນດ້ວຍນ້ຳຕາອາໄລ ແຕ່ມາ ເບິ່ງຄວາມທຸກໂສກຂອງຄອບຄົວກໍສົມຄວນທີ່ໂຕຕ້ອງຈີກຕົວອອກ ຈາກໂຮງຮຽນມາເປັນຕີນມືຊ່ວຍພໍ່ແມ່, ອີກຢ່າງຫນຶ່ງໂຕເອງ ກໍເປັນອ້າຍກົກຫນູ່.

ຄອບຄົວຄຳໂກ້ຈະເຮັດໄດ້ທຸກໆວຽກທີ່ເຫັນພໍເປັນເງິນ ແລກຕ່ອນ. ສ່ວນພໍ່ກໍເຊົ່າສາມລໍ້ຖີບ. ແມ່ຮັບເລືອງເຂົ້າມາຊັກຮີດ ຢູ່

ເຮືອນ ບາງເທື່ອແມ່ກໍໄປຮັບຈ້າງລ້າງຖ້ວຍຫລືໄປຮັບຈ້າງ ເອົາລູກໃຫ້ເຂົາ. ສ່ວນຄຳໂກ້ ນິລື້ ຊຸກເກົາຮ້າງຄືນໜຶ່ງ ເລາະລາດຕະເວນເກັບເຫລັກເສດຫລືເສດເຫລັກຂາຍ.

ໄລຍະສອງສາມປີມານີ້.

ເຫລັກເສດ ເກີດເປັນກ້ອນຄຳ.

ໜຶ່ງໃນສິນຄ້າຂາອອກຄຽງຄູ່ກັບໄມ້ທ່ອນກໍຍັງແມ່ນ ເຫລັກເສດ.

ຢາກເຫັນໜ້າພໍ່ຄ້າໄມ້ທ່ອນຫລືພໍ່ຄ້າເຫລັກເສດວ່າເປັນ ຂະບວນໃຫຍ່ສ່ຳໃດກໍເບິ່ງແມ່ຄ້າຢູ່ໃນຕະຫລາດກໍພໍຮູ້. ຂະບວນເຫລັກເສດຂ້າມຝັ່ງສິນສະເທືອນແຕ່ຍອດຂູ ເຖິງຫລີຜີ.

ເສດຍົນ-ເສດລົດ-ເສດສົງຄາມກັບເກີດເປັນກ້ອນຄຳ.

ແຂວງໃດ-ເຂດໃດ ມີຊາກສິບສົງຄາມເຫລືອຫລໍປະກົດ ວ່າເກີດເປັນທຸລະກິດອັນລາບລົ້ນ.

ທີ່ເທດສະບານນະຄອນຫລວງວຽງຈັນ,

ບ່ອນໃດທີ່ມີຊ່ອງຫວ່າງອັນເໝາະເຈາະກັບສະຖານທີ່ຮັບ ຊື້ເຫລັກເສດ-ເຫລັກໂລ-ທອງ-ຂາງ ກໍເປີດປ້າຍປະກາດ ຢ່າງເປັນທາງການແລະບໍ່ເປັນທາງການ. ຈາກສະພາວະການກໍຄືການວິວັດທະນາການຂອງໃບໜ້າເສດຖະກິດສັງຄົມຄືແນວນີ້, ຈຶ່ງເກີດມີຄຳຂວັນສຳນວນໃໝ່ເອີ້ນວ່າ: ວຽງຈັນ ຍຸກນິກກະທາ, ຍຸກຕູ້ນ້ຳອ້ອຍ, ຍຸກຮ້ານຂາຍຢາ, ຍຸກຮ້ານກິນດື່ມ, ຍຸກໄມ້ທ່ອນ, ຍຸກໂຮງ

ຊອຍໄມ້ແລະມາຣອດ ມື້ນີ້ແມ່ນຍຸກເຫລັກເສດແລະຍຸກນັກ ຖ່າຍ ຮູບ... ແຖວຕະຫລາດແລງຫນອງດ້ວງ, ຫນອງບົວທອງ, ສີສະຫວາດ, ຫນອງບອນ, ທາດຫລວງ, ໂພນທັນ ຈະເຫັນກອງ ເສດເຫລັກກອງສູນກັນຢ່າງເປັນກອງໆ, ຜູ້ປາກໂພດເກືອບວ່າ ກອງສຳຫນ່ວຍພູນ້ອຍ.

ຕາມເສັ້ນທາງທ່າເດືອ ຈອດຢາຍຕາມທ່າເຮືອທ່ານາ ແລ້ວກໍຈະເຫັນຂະບວນລົດແບກ ເຈ່ຍເຫລັກເສດກຽມທະຍອຍຂ້າມຝັ່ງ ຈອດຕິດຫົວຕໍ່ກັ້ນຢ່າງເປັນຂະບວນການໃຫຍ່, ຖ້າທຽບໃສ່ສະໄຫມສິ່ງຄາມມັນຮ້າຍກ່ວາລົດຂະບວນລຳລຽງອາວຸດເສິກ.

ແຂວງສະຫວັນນະເຂດ ແຖວເຊໂປນ ເມືອງພິນ ກໍດົງ ດັງ ເລື່ອງບັນຫາເຫລັກເສດ. ຊຽງຂວາງ–ຊຳເຫນືອ ກໍບໍ່ນ້ອຍ ຫນ້າໃຜ. ການຂັດແຍ່ງ, ການປະທະກັນເລື່ອງສິດຜົນປະໂຫຽດກ່ຽວກັບບັນຫາເຫລັກເສດກໍເກີດຂຶ້ນລຽນຕິດ ລະຫວ່າງຄົນກັບຄົນ, ລະຫວ່າງທ້ອງຖິ່ນກັບທ້ອງຖິ່ນກໍເກີດມີປາກສຽງກັນຮ້າຍກ່ວາແຂ້ຫວງນ່ານນ້ຳ, ນັກຄ້າເຫລັກເສດບາງລາຍຈົນເກືອບຈະເອົາທ່ອນເຫຼັກທັບຫົວກັນຕາຍ.

ຊ່ວງເວລາເຫລັກເສດເກີດເປັນກ້ອນຄຳ.

ບັນດາສື່ມວນຊົນຕ່າງໆກໍຍິບຍິ່ນຂໍ້ຄຳວິພາກວິຈານ, ໂດຍ ສະເພາະຫນັງສືພິມ ວຽງຈັນໃຫມ່ ກໍເປັນຜູ້ອອກຫນ້າອອກຕາພໍຄວນທຸກຂໍ້ຂຽນ ແມ່ນສະແດງເຖິງທັດສະນະເປັນຫ່ວງເປັນໃຍ ເສຍດາຍເຫລັກເສດ. ຫລາຍບົດຂຽນກໍໃຫ້ເຫດຜົນໄປໃນຫລາຍ ແງ່ .

" ຈຳເປັນບໍ້ ທີ່ຈະຂາຍເສດເຫລັກໃຫ້ກັບໄທ ?..."

" ເປັນຫຍັງລັດຖະບານລາວຈຶ່ງບໍ່ຮັບຊື້ເຫລັກເສດສະສົມໄວ້ທັງໆທີ່ໂຮງງານຫລອມເຫລັກຂະໜາດນ້ອຍເຮົາກໍມີ ?..."

ອີກບາງເຫດຜົນກໍເວົ້າວ່າ:

" ໃນໄລຍະກໍ່ສ້າງປະເທດຊາດໃໝ່, ຄວາມຈຳເປັນ ຈະຕ້ອງນຳໃຊ້ເຫລັກກໍມີຫລວງຫລາຍ..."

" ການຂາຍເຫລັກເສດແມ່ນເປັນການເສຍ ປຽບໃຫ້ ຝາຍກົງກັນຂ້າມ, ເພາະໂລກເຂົາກ່ອນຈະຕັ້ງໂຮງງານຂຸດຄົ້ນບໍ່ເຫລັກຈະຕ້ອງໄດ້ລົງທຶນຢ່າງມະຫາສານ, ແຕ່ເຫລັກເສດເຮົາມັນກໍເປັນເຫລັກທີ່ພົ້ນບໍ່ຂຶ້ນມາແລ້ວແຕ່ໄປຂາຍໃນລາຄາທີ່ຖືກ ເຫັນວ່າ ຜູ້ເສຍປຽບກໍຍັງແມ່ນເຮົາ..." ແລະອີກບາງຄຳເຫັນ: " ການຂາຍເຫລັກເສດກໍຄວນແຍກປະເພດບໍ່ ?...ອັນໃດຄວນ ຂາຍແລະອັນໃດບໍ່ຄວນ ?

ຂະນະທີ່ເສດເຫລັກເປັນສິນຄ້າຂາອອກທີ່ຂາຍດິບຂາຍດີ ຄືແນວນີ້, ມີຫລາຍຄົນກໍເກີດຄວາມຕ່ຳຄ້ອຍນ້ອຍໃຈ ໂດຍສະເພາະພວກມືອາຊີບຊ່າງຕີເຫລັກ-ຕີພ້າ-ກ່ຽວ-ສຽມ-ຈົກ, ຊ້ວນ, ມາດຽວນີ້ຊອກຫາເຫລັກເສດມາຕີພ້າເກືອບປານວ່າຊອກຄຳ... ກໍ່ມັນໝົດແລ້ວເດ... ໃນຕໍ່ໜ້າແມ່ນແຕ່ກ່ຽວດວງໜຶ່ງກໍຕ້ອງ ໄດ້ສັ່ງຊື້ຈາກຕ່າງປະເທດ, ອາຊີບຊ່າງຕີເຫລັກຄາດວ່າຈະ ຫວ່າງງານໃນຕໍ່ໜ້ານີ້.

ຕາມຂ່າວລືປາກຕໍ່ປາກກະຊິບກະຊັບວ່າ: ທຸລະກິດເຫລັກເສດມີທັງຜົນບວກແລະຜົນລົບ. ຜົນບວກ ເຫລັກເສດເປັນສິນຄ້າ ຂາອອກທີ່ເປັນຜົນກຳໄລ ຈູນເຈືອງົບປະມານຂອງຊາດ. ຜົນລົບກໍ ຄືເປັນຊ່ອງຫວ່າງໃຫ້ນັກສວຍໂອກາດຜູ້ມີຄວາມຄິດຕື້ນມໍ່ກະທຳ ໄປໃນສິ່ງທີ່ຜິດ.

ລົດດີເປັນ ລົດເພ, ລະຫວ່າງລາຄາລົດຊາວລ້ານກີບ ແຕ່ມາຂາຍເປັນເຫລັກເສດໃນລາຄາຫ້າໝື່ນກີບ ເຂົາກໍ ຫຼັບຕາຂາຍ. ຂົວດີກາຍເປັນຂົວເພ, ເສົາໄຟຟ້າກໍຖືກຕັດເລື່ອຍ, ລູກຊາຍ ຫລ້າລັກໝໍ້ຂາງໃຫຍ່ແມ່ໄປຂາຍ, ຄ້ອງທອງປູ່ແກ້ວວັດປ່າ ກໍຫາຍສາບສູນແລະໜັກໄປກ່ວານັ້ນຫມາກກະແລ່ງໂຮງຮຽນກໍຖືກຫາຍ ຕົວແລະມີອີກບາງລາຍກໍງັດແງະອາວຸດເສິກເພື່ອເອົາທອງໄປຂາຍ.

ເຫລັກເສດເກີດເປັນຄຳ

ຊີວິດບັກຄຳໂກ້ ບໍ່ຕ່າງຫຍັງກັບຕົ້ນຫຍ້າແຫ້ງເດືອນຫ້າກຳລັງຖືກຣວດຣອຍຈາກສາຍຝົນເດືອນຫົກ. ແດດຈະຮ້ອນຝົນຈະລິນ ຈະບໍ່ເປັນອຸປະສັກຖ້າສິ່ງນັ້ນພໍໄດ້ເງິນ.

ຄຳໂກ້ ຊຸກລໍ້ລາດຕະເວນໄປທຸກຈອກທຸກແຈ. ມີບາງມື້ເສືອບໍ່ຈຳເປັນຈະຫົນຄືງ. ມັນທັງເປັນຜູ້ຊອກເກັບເຫລັກເສດແລະຮັບຊື້ເຫລັກເສດ. ຊີງກີໂລຕິດເຫລັກເສດກໍເປັນເພື່ອນຄູ່ລີ້ປະຈຳ. ບັກຄຳໂກ້ ບໍ່ໂຕ່ງຫູສົນໃຈກັບການວິພາກວິຈານຂອງໜັງສືພິມເພາະຄຳໂກ້ພຽງປາຍຕາດແລະມັກກໍເປັນນາຍໜ້າພໍ່ຄ້າເຫລັກ ເສດອາດເປັນມືທີເກົ້າສິບເກົ້ານັ້ນລະ.

ຈາກຊີວິດຊອກເຫລັກເສດມາຂາຍ,

ລາຍຣັບແຕ່ລະມື້ໄດ້ດີກ່ວາພໍ່ ມັນຖີບສາມລໍ້ອີກ.

ໜີ້ສິນລຸງລັງມາຫລາຍເດືອນກໍສາມາດປົດເປື້ອງໄດ້.

ເມືອເຫັນລາຍຣັບດີ, ພໍ່ຄຳໂກ້ ກໍຢຸດການຖີບສາມລໍ້ຊົ່ວຄາວ ມາຕະລຸຍເຫລັກເສດຄຽງບ່າຄຽງໄລ່ກັບລູກຊາຍ. ໃຊ້ລໍ້ຊຸກຄົນລະຄັນ ແຍກຍ້າຍໄປຄົນລະທິດ ຄ້າຍຄ່ຳພໍ່ລູກຈື່ງມາພໍ້ໜ້າກັນ.

ໃນທີ່ສຸດພໍ່ຂອງຄຳໂກ້ ກໍສາມາດຊື້ສາມລໍ້ເຄື່ອງເປັນ ໂຕຂອງໂຕເອງໄດ້. ແລະຄຳໂກ້ຈື່ງຍໍມືສາທຸຂອບພະຄຸນເທບພະເຈົ້າແຫ່ງເສດເຫລັກທັງຫລາຍແລ!...ຖ້າບໍ່ມີເຫລັກເສດຂ້ອຍ ອາດຈະເປັນເສດຄົນຕໍ່ໄປນັ້ນລະ!...

ມະທີຣ້ານເຝີອນາຍຊິມ.
ມື້ນີ້ ຄຳໂກ້ ນຸ່ງເຄື່ອງເຈົ້າຊູ້ພໍເສດ.
ລັກສະນະທ່າທີຂອງມັນຊົງຜູ້ມີເງິນພໍທີ່ຈະຊື້ເຝີ.
ມື້ນີ້ ມັນພັກຜ່ອນການຢູ່ລໍ້.
ມັນຍ່າງເຂົ້າໄປຣ້ານເຝີອນາຍຊິມ.

" ເຝີແດ່...ໜຶ່ງຖ້ວຍ!..."

ຄຳໂກ້ ປ້າຍກົ້ນນັ່ງຢູ່ໂຕະອີກໜ່ວຍໜຶ່ງ.

ມັນນັ່ງສັ່ນຫົວ ແລະສັ່ນຂາ

ມີເງິນໃນຖົງບໍ່ເກງກົວໃຜໝົດ, ປາກກໍໄດ້ໄອກໍດັງ.

ຄາວໜຶ່ງຖ້ວຍເຝີກໍຖືກຍົກມາ.

ຄຳໂກ້ ກົ້ມໜ້າໃສ່ຖ້ວຍເຝີ.

ມາ ! ກູຂໍກິນມຶງແດ່ເທາະ !

ກູອົດກັ້ນມາເກືອບປີມື້ນາ !

ບັກຄຳໂກ້ ກິນເຜີຢ່າງແຊບນົວທີ່ສຸດ.

ເຫື່ອໄຫລໄຄຍ້ອຍ.

ຫລັງຈາກນັ້ນ ກໍອັດກາເຟນົມເຢັນອີກຈອກໃຫຍ່.

ຄຳໂກ້ ລູບທ້ອງນິເບົາໆ.

ໂອຍ ! ຈັ່ງແມ່ນຂ້ອຍອີ່ມພົມພະຫຍາດີ !

ຄຳໂກ້ ຫູດບາດຕີນອອກຈາກຮ້ານເຝີອີນາຍຊຸມ.

ທັງມີຍັງຈົ່ມແຂ້ວ.

ມັນຫລຽວເບິ່ງຮ້ານອີນາຍຊຸມອີກເທື່ອໜຶ່ງ.

ມັນຍິ້ມໃຫ້ກັບຊີວິດຂອງມັນ

ແລະມັນກໍເວົ້າກັບຕົວໂຕວ່າ:

ອະນິຈາ ! ຖ້ວຍເຝີໃນຮອບປີ !





# ຄືນຜົວຂາວ

* ມື້ນີ້ "ປາແວນ" ຈະຈາກຂ້ອຍກັບຄືນປະເທດແລ້ວ. ຂ້ອຍສຸດທີ່ເປັນຫ່ວງແລະຄິດຮອດມັນ ຜິດປົກກະຕິ. ຂ້ອຍຫ່ວງມັນຄື ກັບຜູ້ເປັນແມ່ຫ່ວງລູກຊາຍທີ່ກຽມການອອກສະໜາມແລະແລ້ວຂ້ອຍກໍອອກສົ່ງທາງ " ປາແວນ "ທີ່ເດີນບິນວັດໄຕ.

" ເອົານີ້ ປາແວນ ! ຂອງຕ້ອນ...ກູບໍ່ມີຫຍັງຈະ ຕ້ອນມຶງ...ມີແຕ່ໜ້ອຍໆນີ້ລະ ... ແຕ່ມຶງຢາກຮູ້ວ່າມີອີຫຍັງ ແດ່...ໄປຮອດມົດສະກູ ມຶງຈຶ່ງໄຂເບິ່ງເດີ !..."

" ຂໍຂອບໃຈ ! ຂອບໃຈ "

" ຂອບໃຈ ! ຂອບໃຈ ..."

ແລ້ວຂ້ອຍແລະປາແວນກໍຊວງແຂນເດ່ເຂົ້າຫາກັນ, ປາແວນເອົາມືຕົບບ່າຂ້ອຍດ້ວຍບາດມືເບົາໆແລະຂ້ອຍເອງກໍພໍເດົາ ອອກວ່າ: ປາແວນມັນກໍບໍ່ຢາກພາກຂ້ອຍຊື່ນດຽວກັນ.

" ບໍ່ຄິດວ່າມື້ໃດຈະໄດ້ພົບກັນອີກ ?..." ປາແວນໂຍນປະໂຫຍກນັ້ນອອກມາ.

" ກໍບໍ່ແນ່ດອກ...ແຕ່ໄປເຖິງ ມົດສະກູ ແລ້ວຢ່າລືມ ຂຽນ ຈ.ມ -ຈົດຫມາຍມາຫາກູແດ່ !..."

" ກູຈະຂຽນ ຈ.ມ.ຫາມຶງເດືອນລະສອງສະບັບຈະດີບໍ?.."

" ມັນກໍວິເສດທີ່ສຸດຖ້າມຶງເຮັດໄດ້ !..."

ພ້ອມນັ້ນຂ້ອຍແລະປາແວນກໍພາກັນຫົວ ຮາ ໆ ຂຶ້ນ.

" ມີໂອກາດໄປທັດສະນະສຶກສາປະເທດໂຊວຽດ ຕ້ອງ ໄປຢ້ຽມຢາມເຮືອນກູເດີ !..."

" ກູຢ້ານບໍ່ມີໂອກາດຫລາຍກ່ວາ !..."

" ບໍ່ຕ້ອງທໍ້ຖອຍມາ...ລືມມີຜົນງານຄືມຶງ...ແນ່ນອນຕ້ອງຢູ່ໃນສາຍຕາຂອງປະເທດຊາດສະເຫມີ...ມຶງຕ້ອງໃຫ້ໄດ້ໄປປະເທດໂຊວຽດອີກເທື່ອຫນຶ່ງແນ່ນບໍ່ ?..."

" ຄັນຊັ້ນມຶງເດ ?...ມຶງຕ້ອງໃຫ້ໄດ້ມາເມືອງລາວ ອີກເທື່ອຫນຶ່ງແນ່ນບໍ່ ?.."

" ເອົາຈັ່ງຊີ້ສາ...ຊົ່ວຊີວິດນີ້ຕ້ອງໃຫ້ໄດ້ພົບກັນອີກ ເທື່ອຫນຶ່ງຈະດີບໍ່ ?..."

" ມັນກໍວິເສດລະບໍ່... ເອີ!...ກູເອງຈະພະຍາຍາມໃຫ້ໄດ້ໄປພົບມຶງທີ່ ມົດສະກູ !..."

ແລະແລ້ວຂ້ອຍແລະປາແວນ ກໍເດີນທາກັນອີກເທື່ອໜຶ່ງ. ໃນທີ່ສຸດເຂັມໂມງມາຮອດເລກ 3 ແລະ 20 ນາທີ ສາຍການ ບິນອາເອໂຣຟະລົດ ກໍຫອບເອົາຕົວປາແວນໜີຈາກຂ້ອຍໄປ.

ຂ້ອຍຢືນເຣັດກະວ່າງກະເວ່ງ.

ຂ້ອຍຕິດຕ້ອຍຫ້ອຍຕາມອາເອໂຣຟະລົດ ລຳນັ້ນຈົນ ຕົວ ທໍ່ແມງມີ.

ຂ້ອຍກໍໄດ້ແຕ່ຈືມພຶມຈືມພາຍວ່າ: ປາແວນ ! ປາແວນ! ແລະກໍປາແວນ !...

*

* *

ຂ້ອຍແລະປາແວນເກີນວ່າເປັນເພື່ອນສະໜິດສະໜົມ ກັນເອົາແທ້.

ຂ້ອຍແລະມັນສາມາດຊຸບຕົວເຂົ້າເປັນຄົນຜູ້ດຽວກັນໄດ້ ຂ້ອຍບໍ່ຄິດເລີຍວ່າຄົນໂຊວຽດໜຸ່ມນີ້ຈະເປັນຄົນກະທັດຮັດງ່າຍດາຍ ຄືແນວນີ້.

ປາແວນ ເປັນຄົນຂໍ່ເສືອ ແຮງຊ້າງແລະລວງສູງຂອງມັນຍັງສາມເຊັນຈຶ່ງຈະໄດ້ສອງແມັດ, ສ່ວນຂ້ອຍພັດເຕ້ຍໜາກຂາມ ຂໍ່ດຽວ, ຄືແນວນັ້ນເວລາປຶກສາວຽກງານນຳກັນຂ້ອຍຈຶ່ງແຫງນ ຄໍເບິ່ງໜ້າມັນ.

ປາແວນເປັນຄົນມີດສະກູ, ເປັນວິສາວະກອນຜູ້ຊຳນານ ງານຝ່າຍຂົວທາງ. ມັນມາເຮັດໜ້າທີ່ສາກົນຢູ່ປະເທດລາວຄົບກຳ ນົດຫ້າປີພໍດີ ໜຶ່ງໃນຜົນງານຂອງປາແວນທີ່ເປັນລາຍມືສະຫລັກ ປັກ

ໄວ້ບິນດິນແດນ ສ.ປ.ປ.ລ ກໍແມ່ນຂີວສີທອງ (ຂີວນ້ຳຼື່ມ )
ນັ້ນເດ ! ທີ່ເປັນໂຄງການຊ່ວຍເຫລືອມິດຕະພາບໂຊວຽດ-ລາວ
ແລະຂ້ອຍເອງໄດ້ເຮັດວຽກຫລັ້ມທົ່ວຈົນທ້າຍກັບມັນແມ່ນສອງ ປີ
ເຕັມໆ.

ຂ້ອຍກໍຮຽນຈົບວິຊາສະເພາະຂຸ້ນກາງຝ່າຍຂີວທາງຈາກ ປະ
ເທດໂຊວຽດ.

ບາງເທື່ອຂ້ອຍກໍເປັນນາຍພາສາໃຫ້ປາແວນ.

ບາງຄັ້ງຂ້ອຍກໍເປັນທັງໂຊເຟີດ.

ຄວາມຈິງແລ້ວຜ່ານການປະຕິບັດວຽກງານຕົວຈິງຮ່ວມ ກັນ,
ຂ້ອຍເອງແມ່ນຍາດໄດ້ບົດຮຽນຈາກປາແວນຫລາຍພໍຄວນ, ປາ
ແວນເປັນຄົນບໍ່ຂີ້ຖີ່ຄວາມຮູ້, ມັນເປີດປະຕູໃຫ້ຂ້ອຍສືຖາມແລະມັນກໍ
ເຕັມໃຈອະທິບາຍໃຫ້ຂ້ອຍຢ່າງເປັນກັນເອງທີ່ສຸດ.

ປາແວນ ແມ່ນຄົນຈິງຈັງຕໍ່ວຽກງານ, ມັນເຮັດວຽກຢ່າງ ບໍ່ຮູ້
ອິດເມື່ອຍ, ວຽກເປັນວຽກ, ໂມງເປັນໂມງ, ພັກຜ່ອນເປັນພັກຜ່ອນ
ເລື່ອງການອອກແຮງງານ, ບາງຄັ້ງຂ້ອຍກໍຄິດລະອາຍ ປາແວນ
ເພາະເຫື່ອແຮງຂ້ອຍບໍ່ທັນມັນແຕ່ຂ້ອຍກໍຄຽງບ່າຄຽງໄຫລ່ກັບ ມັນ
ເພື່ອຮັກສາເຊີງລູກຜູ້ຊາຍໄວ້.

ປາແວນປາກ ພາສາລາວໄດ້ດີພໍຄວນ.

ມັນມັກຊອກຮູ້ກ່ຽວກັບຈາດພິເສດຮີດຄອງປະເພນີລາວ.

ມັນເວົ້າວ່າ: ເຂົ້າຫນຽວຫນຶ້ງຕີສະເຫມີໄດ້ກັບເຂົ້າຈີ່ເຂົ້າບະ
ເລ.

ປາແວນ ຮຽນກິນອາຫານແບບລາວ

ມັນມັກທີ່ສຸດລາບຊີ້ນຊອຍເສືອແລະຕົ້ມງູສິງ.

ມີຕອນໜຶ່ງພາກັນກິນກ້ອຍປາຢູ່ທ່າລາດ, ຍ້ອນວ່າກ້ອຍ " ປາເຜັດໂພດຈຶ່ງເຮັດໃຫ້ທ້າວປາແວນສູບຂີ້ມູກຢູ່ປຶດໆ...

ຄິດຮອດປາແວນ ຕ້ອງເວົ້າເຖິງເຫດການທີ່ບ້ານນ້ອຍຕີນພູ.

ມື້ນັ້ນຂ້ອຍເອງເປັນຜູ້ບັນຊາພວງມະໄລລົດ.

ຈາກເສັ້ນທາງກາສີກັບຄືນວັງວຽງ.

ຢູ່ໃນລົດກາຕຽນສີຂີ້ມ້າຄັນນັ້ນ, ປາແວນນັ່ງຢູ່ເບາະໜ້າຂ້າງຂ້າງຂ້ອຍ. ຢູ່ຂ້າງຫລັງກໍ່ມີສະຫາຍ ວາຊິລີ ແລະ ສະຫາຍພະນັກງານລາວອີກສອງ ລວມທັງໝົດມີຫ້າຊີວິດ.

ມາຮອດຍ່ານໜຶ່ງ, ຂ້ອຍເອງກໍ່ບັນຊາຈັກລົດຮ້ວຍໆລົງ ຢູ່ເບື້ອງໜ້າຂອງຂ້ອຍເບື້ອງຊ້າຍມືຈະຫລຽວເຫັນບ້ານນ້ອຍ ຕີນພູ ຂ້ອຍເອງຫຽວໄປຫຽວມາເສັ້ນທາງສາຍນີ້ພໍປານກັບພໍ່ມາ ຫຽວເມືອນາ ແຕ່ຂ້ອຍກໍ່ບໍ່ເຄີຍເຂົ້າແວ່ບ້ານນ້ອຍນີ້ຈັກເທື່ອ.

ບ້ານນ້ອຍແຫ່ງນີ້ຢືນຢູ່ອ່າວເປົ້າປ່ຽວແລະສອກຫລີກ. ປະ ດັບປະດາບ້ານນ້ອຍເກືອບວ່າມີແຕ່ຕົ້ນໝາກພ້າວ. ຕົ້ນໝາກພ້າວແຕ່ລະຕົ້ນເປັນໜ່ວຍເປັນແຊງລູຊູລາບຊາບ. ຂ້ອຍຄິດຢາກຊື້ ໝາກພ້າວອ່ອນຈັກແຊງສອງແຊງເພື່ອໃຫ້ສະຫາຍປາແວນແລະວາ ຊິລີໄດ້ຊີມລົດຊາດໝາກພ້າວອ່ອນເຂດກາສີ-ວັງວຽງ ວ່າຊັ້ນ.

ຂ້ອຍໃຊ້ແສງຕາຫລຽວຊອກຫາຮ່ອມທາງເຂົ້າໄປຫາ ບ້ານນ້ອຍ.

ຮ່ອມທາງມີລັກສະນະເປັນທາງກວຽນ.

ເວົ້າໄດ້ວ່າເກືອບບໍ່ມີລົດຄັນໃດເຄີຍເຂົ້າແວ່ຢາມບ້ານ ນ້ອຍແຫ່ງນີ້.

ຂ້ອຍຫັກຫົວລົດບຸທາງກວຽນເຂົ້າໄປ.

" ສະຫາຍຈະໄປໃສ ?..." ປາແວນ ຖາມຂຶ້ນ.

" ໄປກິນໝາກພ້າວອ່ອນ...ນັ້ນເດ່ ! ເປັນແຊວຊູລາບ ຊາບ...ຈັ່ງແມ່ນເປັນຕານ້ຳລາຍເຮ່ຍ !...

ຂ້ອຍຊີ້ມືໄປທາງບ້ານນ້ອຍເພື່ອແນະນຳປາແວນ.

ຂ້ອຍຈອດລົດຫ່າງຈາກບ້ານປະມານສອງຮ້ອຍແມັດ.

ຕໍ່ໜ້າພວກຂ້ອຍຈະເຫັນປະຊາຊົນຈຳນວນໜຶ່ງຫົວຈຸ້ມໃສ່ກັນ ແຕ່ບໍ່ຮູ້ວ່າ ເຂົາເຈົ້າກຳລັງເຮັດຫຍັງ.

ຂ້ອຍເປັນຜູ້ຍ່າງອອກໜ້າ, ປາແວນຕາມຫລັງຂ້ອຍຕໍ່ມາ ກໍແມ່ນວາຊິລີແລະສອງສະຫາຍພະນັກງານລາວ.

ຂະນະທີ່ພວກຂ້ອຍກຳລັງບຸໜ້າເຂົ້າໄປ, ສັງເກດໄດ້ວ່າ ປະຊາຊົນທີ່ກຳລັງຍືນຈຸ້ມຢູ່ນັ້ນຟາດສາຍຕາສີກໃສ່ພວກຂ້ອຍແບບ ງົວຕື່ນເສືອ. ພວກເຂົາເບິ່ງພວກຂ້ອຍດ້ວຍສາຍຕາບໍ່ເປັນມິດຈັກດີ.

ຂະນະດຽວຜູ້ຄົນເຫລົ່ານັ້ນກໍພາກັນແຕກກະຈັດກະຈາຍອອກໄປແບບລັບໆລີ້ໆ ບາງຄົນກໍເຊື່ອງຕົວລີ້ຕາມຄອກໄກ່, ລີ້ບັງກົບຕົ້ນໝາກພ້າວ, ບາງກໍເຮັດລັບໆຊ້ອນໆເໝືອນພວກເຂົາຈະ ຈອບເບິ່ງເລື່ອງໃດໜຶ່ງຈາກພວກຂ້ອຍ.

" ຢຸດໆ!... ພວກເຮົາຢຸດກ່ອນ!..."ຂ້ອຍອອກຄຳ ສັ່ງພ້ອມຊູມືຂຶ້ນຫ້າມ.

" ມີຫຍັງບໍ ?..." ປາແວນຖາມຂຶ້ນ.

" ກູບໍ່ເຊື່ອໃຈປະຊາຊົນບ້ານນີ້ !...ເບິ່ງດີ ! ພວກເຂົາ

ເຮັດຫນ້າລັບໆລີ້ໆຢູ່..."
"ບໍ່ແມ່ນເຂດເລື່ອນໄຫວປະຕິການບໍ່ ?..."ປາແວນຖາມຂຶ້ນ.
" ເຂດນີ້ເປັນເຂດປອດໄພນາ!..ເອີ !....ທຸກຄົນ ມີສະຕິຕື່ນເຕີ !..."
ຈີວພິບຕາດຽວ,ກ້ອນດິນກ້ອນຫີນ ສຳແລ່ງສຳແຂນະ ກໍຖືກແກ່ວງບິນສູ່ມມາໃສ່ພວກຂ້ອຍ.
" ລະວັງ !..." ຂ້ອຍອອກຄຳສັ່ງ
ທຸກຄົນຫລົບຫລີກກ້ອນຫີນ
" ກົບ!...ກົບຄືນຂຶ້ນລົດ!..."
ສະຫາຍພະນັກງານລາວສອງຄົນແລ່ນກ່ອນ,ປາແວນ,ວາຊິລີຕາມຫລັງແລະຂ້ອຍເປັນຜູ້ແລ່ນລາກຫລັງຫມູ່ເພື່ອປົກປ້ອງຂະບວນ
ມີກ້ອນຫີນກ້ອນຫນຶ່ງ ບິນມາຟາດໃສ່ຫລັງຂ້ອຍດັງອັບ!
ກ້ອນຫີນພາໃຫ້ເກີດໂມໂຫ.
ຂ້ອຍຢຸດບາດກ້າວທີ່ກຳລັງແລ່ນ
ຂ້ອຍອວ່າຍຫນ້າສູ້ກັບພວກເຂົາອີກເທື່ອຫນຶ່ງ.
ບັດຍຫນຶ່ງກໍມີຂີ້ຫີນສອງກ້ອນບິນມາສື່ວຫົວຂ້ອຍອີກ.
ເຫັນທ່າບໍ່ດີຂ້ອຍກໍໂຢບບາດຕີນແລ່ນຕໍ່...
" ຂັບໄລ່ໄຖຫົວມັນ ພວກຈັກກະພັດອາເມລິກາ !..."
" ຂ້າຫົວມັນຖິ້ມອາເມລິກາສອງໂຕນັ້ນ!..."
" ອາເມລິກາສອງໂຕນັ້ນຕົກຍົນມາແຕ່ໃສອີກ ?..."

ອັນນັ້ນຄືສຽງຮ້ອງດ່າຂອງພວກເຂົາຕາມຫລັງຂ້ອຍ

ເມື່ອໄດ້ຍິນສຽງປ້ອຍດ່າເປັນເນື້ອໃນແບບນັ້ນຂ້ອຍກໍຢຸດສະງັກບາດແລ່ນ.

ຂ້ອຍຄິດໄດ້ວ່າພວກເຂົາເຫລົ່ານັ້ນເຂົ້າໃຈຜິດ. ເຂົາເຈົ້າອາດເຂົ້າໃຈວ່າ ປາແວນແລະວາຊິລີ ເປັນຄົນອາເມລິກາ ...

ຂ້ອຍຕັດສິນໃຈອ່ວາຍໜ້າກັບຄືນຫາພວກເຂົາອີກໃໝ່

ກ້ອນຫີນອີກກ້ອນໜຶ່ງກໍບິນມາເກືອບຖືກຫົວຂ້ອຍອີກ.

ຂ້ອຍຍ່າງບຸຜ່າກ້ອນຫີນເພື່ອໄປໃກ້ໆຕົວພວກເຂົາ.

ທ່າທາງຂອງຂ້ອຍເວລານີ້ບໍ່ຕ່າງຫຍັງກັບຫົວໜ້າຊາວນາ ຜູ້ໜຶ່ງທີ່ກຳລັງສ່ຽງຊີວິດຂໍຄວາມເປັນທຳຈາກເຈົ້າທີ່ດິນ.

" ຢຸດກ່ອນ !...ສະຫາຍອ້າຍນ້ອງເອີຍ!...ພວກ ເຂົາສອງຄົນນັ້ນ...ພວກເຂົາບໍ່ແມ່ນຄົນອາເມລິກາດອກ !...ພວກເຂົາແມ່ນຄົນໂຊວຽດ!..."ຂ້ອຍຮ້ອງປະໂຫຽກຍາວໆນີ້ບັກດັງໆ

" ພວກເຂົາຄືຄົນໂຊວຽດ !...ພວກເຂົາບໍ່ແມ່ນຄົນອາເມລິກາ !...

... ພວກເຈົ້າເຂົ້າໃຈຜິດ!..."ຂ້ອຍຕື່ມປະໂຫຽກນີ້ ດັງຕື່ມອອກໄປ.

ບັນຍາກາດຢູ່ໃນທ່າຕຶກຕະລຶງ.

ສັງເກດເຫັນຜູ້ຄົນທີ່ຮັດລັບໆຊ້ອນໆຢູ່ຕາມຕົ້ນພ້າວ,ລົກ ໄກ່ຮ້ານຫຍ້າ ຕ່າງກໍຮັດໃບໜ້າກະເວ່ກະວ່າ.ກ້ອນຫີນຢູ່ໃນມືຂອງແຕ່ລະຄົນຖືກປ່ອຍຖິ້ມລົງດິນ.ແຕ່ລະຄົນແນມເບິ່ງໜ້າກັນ. ເຂົາເຈົ້າຍ່າງອ່ວາຍໜ້າເຂົ້າຫາກັນແລະສຽງກະຊິບກະແຊບກໍດັງຂຶ້ນ

ຂ້ອຍຍ່າງເຂົ້າໄປຫາພວກເຂົາເຈົ້າດ້ວຍທ່າທີຂອງຜູ້ຈາດຕະນາມາດີ.

" ສະບາຍດີຕູ້!... "ຂ້ອຍທັກທາຍຖາມສະບາຍພໍ່ຕູ້ຄົນໜຶ່ງທີ່ກຳລັງຖູຜ້າແລະກໍຈັບກະຕ່າໜ່ວຍໜຶ່ງທີ່ສານບໍ່ທັນແລ້ວ.

ພໍ່ ຍົມແຫ້ງໆອອກມາແລະກໍແນມເບິ່ງໜ້າຂ້ອຍ.

ຂ້ອຍປິ່ງຕົວລົງຂ້າງໆພໍ່ຕູ້

ຈາກນັ້ນຈະເຫັນຜູ້ໃຫຍ່-ຄົນໜຸ່ມ-ເດັກນ້ອຍຈຳນວນໜຶ່ງພາກັນຢືນຕົກວົງອ້ອມຕົວຂ້ອຍ.

ຕູ້ !...ຈັ່ງແມ່ນພໍ່ແມ່ອ້າຍນ້ອງບ້ານນີ້ເຂົ້າໃຈພວກເຮົາຜິດນໍ?...ນັ້ນເດ !...ເຂົາສອງຄົນນັ້ນບໍ່ແມ່ນອາເມລິກາ ...ພວກເຂົາຄືຄົນໂຊວຽດ!...

" ຈັ່ງວ່ານີ້ລະ...ພໍ່ກໍຄິດວ່າແມ່ນຄົນອາເມລິກາແທ້ໆລະ .ກໍພໍ່ເອງກໍບໍ່ເຄີຍເຫັນຄົນໂຊວຽດຈັກເທື່ອນີ້ມາ... ຍິນແຕ່ເຂົາເວົ້າວ່າ ໂຊວຽດ-ໂຊວຽດ...ເອີ!ຂໍໂທດ ຂໍອະໄພນຳພວກລູກຫລາຍໆເນີ !...ປະຊາຊົນພວກເຮົາເຂົ້າໃຈພວກເຈົ້າຜິດ.."

" ຕູ້ !...ເປັນຫຍັງປະຊາຊົນບ້ານນີ້ຄືວ່າເປັນເດືອດເປັນແຄ້ນກັບຄົນອາເມລິກາແທ້ ?..."

" ບໍ່ໃຫ້ເຂົາເຈົ້າຄຽດແຄ້ນຈັ່ງໃດ...ເຂດນີ້ເປັນ ເຂດເຄື່ອນໄຫວຂອງທະຫານອາເມລິກາ ກ່ອນປີເຊັນສັນຍາແລະອະນຸສັນຍາ...ນາຍທະຫານອາເມລິກາກັບນາຍພັນຜູ້ໜຶ່ງຊື່ ບຸນ ໄທໄດ້ບັງຄັບເອົາພະພຸດທະຮູບທີ່ເປັນຂອງຄໍ້າບ້ານຄູນເມືອງຂອງປະ

ຊາຊົນບ້ານນີ້ໄປ...ພະພຸດທະຮູບອົງນັ້ນແມ່ນເປັນພະຄຳສິດໆ ຕໍ່ມາອີກສອງມື້ເຈົ້າອະທິການວັດກໍຖືກຂ້າຕາຍ...ການຂ້າ ຕາຍຂອງເຈົ້າອະທິການວັດຕາຍດ້ວຍມີດແທງແລະກໍບໍ່ຮູ້ວ່າແມ່ນ ສີມືຂອງໃຜ...ຈາກການຄາດຕະກຳດັ່ງກ່າວນັ້ນ,ປະຊາຊົນບ້ານ ນີ້ຈຶ່ງລົງຄວາມເຫັນເປັນສຽງດຽວກັນວ່າ: ເປັນແຜນການຂອງນາຍທະຫານອາເມລິກາພວກນັ້ນລະ...ແລະມາຮອດມື້ແມ່ນແຕ່ ເດັກນ້ອຍຫົວທໍ່ຫມາກກອກ...ຄັນເອີ່ຍຊື່ເຖິງອາເມລິກາແລ້ວ ...ໃຜໆກໍເກີດຄວາມໂມໂຫຂຶ້ນໂລດ!..."

ຂ້ອຍກັບຄືນໄປຫາປາແວນແລະວາຊິລີ ທີ່ຈອບຄອຍຟັງ ສະພາບຈາກຂ້ອຍ.ເບິ່ງພຸ້ນ! ປາແວນ ຣັດໜ້າທີ່ບັນຊາພວງ ມະໄລລົດເອງ. ປາແວນຕິດຈັກລົດ,ມັນຄືຈະລໍຖ້າແຕ່ຂ້ອຍໄປຮອດມັນກໍຈະອອກລົດໂລດ.

" ຢຸດກ່ອນປາແວນ!...ມອດຈັກລົດໄວ້ສາ!..."

" ເປັນແນວໃດ... ພວກເຂົາແມ່ນສັດຕູບໍ່?..."

" ກໍບໍ່ດອກ !..."

" ແລະເປັນຫຍັງພວກເຂົາຈຶ່ງຂັບໄລ່ພວກເຮົາ ?..."

" ເຂົາເຈົ້າເຂົ້າໃຈຜິດ...ເຂົາເຈົ້າເຂົ້າໃຈວ່າພວກ ມຶງແມ່ນຄົນອາເມລິກາ !..."

" ຕາຍຮ່າ !...ກູເກືອບຮັບເຄາະແທນອາເມລິກາ ຊັ້ນຫວະ ?"

ຂ້ອຍກໍເລົ່າປະຫວັດຄວາມເປັນມາຂອງປະຊາຊົນບ້ານນີ້ສູ່ປາແວນແລະວາຊິລີຟັງ ປານເລົ່ານິທານ.

ພໍຂ້ອຍເລົ່າສຸດເຫດການ ປາແວນກໍເວົ້າອອກມາຢ່າງໂມໂຫ ວ່າ: "ຈັກກະພັດອາເມລິກາໄປເຖິງບ່ອນໃດ...ບ່ອນນັ້ນຕ້ອງ ມີເລື່ອງບໍ່ດີເກີດຂຶ້ນນັ້ນລະ !..."

ຂ້ອຍຊັກຊວນປາແວນແລະວາຊີລີ ຄືນຫາປະຊາຊົນໝູ່ ບ້ານນັ້ນອີກໃໝ່.

ບັນຍາກາດໄດ້ກັບຄືນມາຍິ້ມແຍ້ມແຈ່ມໃສແລະເຂົ້າອົກ ເຂົ້າໃຈ ປະຊາຊົນຜູ້ໃຫຍ່ເດັກນ້ອຍບໍ່ຈັກຍິງຈັກຊາຍແຫ່ກັນມາ ເບີງຄົນໂຊວຽດປານວ່າຄົນວຽງຈັນບໍ່ເຄີຍເຫັນຊ້າງ.

ບາງຄົນກໍທັກທ້ວງວ່າເປັນແນວບົ້ນໍຄົນໂຊວຽດ.

ບັກພ້າວອ່ອນສອງສາມແຊງລືນຕົກຈາກຕົ້ນຢ່າງທີ່ພວກ ຂ້ອຍບໍ່ທັນໄດ້ຖາມຊົ້ພໍຄວາມ.

ປາແວນແລະວາຊີລີ ຍົກໝາກພ້າວອ່ອນຂຶ້ນດື່ມຢ່າງ ແຊບຊ້ອຍ.

ປາແວນເວົ້າເປັນພາສາລາວອອກໄປວ່າ: "ຄົນອາເມລິ ກາໄດ້ສ້າງໂທດກຳໄວ້ກັບພວກເຈົ້າ...ໃນທີ່ສຸດຄົນໂຊວຽດຈະມາ ຮັບເຄາະແທນ ເຫັນວ່າບໍ່ຍຸຕິທຳໃດນໍ !..."

ແລະແລ້ວປະຊາຊົນຜູ້ໃຫ່ຍ ເດັກນ້ອຍກໍພາກັນຫົວໂຄບ ຂຶ້ນ ເພາະເຂົາເຈົ້າຊົມຊື່ນນຳປາແວນທີ່ສາມາດເວົ້າຄວາມລາວໄດ້.

(ຂຽນປີ 1985)



# ຄວາມຮັກສີເລືອດ

*ຫວນໄຟສີແດງຫວນສຸດທ້າຍໄດ້ພຸ່ງຕົວຂຶ້ນສູງສຸດແຮງ ແລ້ວມັນກໍປິ່ນຕົວນ້ອຍໆຄ່ອຍໆເບົາໆລົງ ຊຶ່ງຖຸມປະໄວ້ຄືຄວັນສີດຳ ທີ່ເປັນເລົາໆຂຶ້ນສູ່ທ້ອງຟ້າແລະແລ້ວຄວັນໄຟສີດຳອັນນັ້ນກໍຈາງຫາຍໄປຕາມກະແສລົມ.

ຊາວໜຸ່ມຄົນໜຶ່ງຍືນນິ້ງງຽບຢູ່ກັອງຮົມສາມສາ. ດວງຕາຂອງເຂົາຈັບຈ້ອງໄປທາງເຕົາເຜົາສົບທີ່ມີຖ່ານໄຟແດງຢູ່. ດວງຕາເສົ້າໃນໜ້າເຫງົາແລະເຂົາກໍຊຸດໂຊມໄປໝົດຕົນໝົດຕົວ. ໃນມືເຂົາຍັງຖືຜ້າແພມີນນ້ອຍຜືນໜຶ່ງ.

ການສູນເສຍ ຜູ້ຍິງຄົນນີ້ເໝືອນກັບເຂົາຕາຍທັງຢືນ, ມັນເປັນການສູນເສຍຄັ້ງໃຫຍ່ຍິ່ງໃນປະຫວັດສາດຊີວິດ ຫລື ເຂົາຖືກລົງໂທດໂກດແຄ້ນຈາກຟ້າດິນນັ້ນລື ?

ເຂົາຖິ້ມສາຍຕາໄປຍັງເຕົາເຜົາສົບ, ຄວາມເຈັບປວດຄວາມເສຍໃຈຄວາມເສົ້າໂສກເຂົ້າຄອບງຳທົ່ວຮ່າງຄິງ ຕາທັງຄູ່ມອງໂລກກາຍເປັນສີດຳ.

ເຂົາຈັບຮູບຖ່າຍແມ່ຍິງຄົນໜຶ່ງຂຶ້ນມາເບິ່ງ. ຮູບແຜ່ນນັ້ນບັນຈຸຢູ່ໃນກະຈົກແວ່ນທີ່ມີຂອບສີດຳແລະປະດັບເອ້ດ້ວຍໂບສີດຳ. ຮູບແຜ່ນນັ້ນໄດ້ສະທ້ອນຄືນໃຫ້ເຫັນທຸກສິ່ງທຸກຢ່າງ ແລ້ວຊາຍໜຸ່ມ ກໍອຸທານສຽງສະອຶກສະອື້ນເວົ້າກັບຮູບແຜ່ນນັ້ນວ່າ: ໂອ! ມະນີລັກ!. ມະນີລັກຂອງອ້າຍ!...ນ້ອງບໍ່ໜ້າຈະຕາຍຈາກອ້າຍໄປເລີຍ!. ເປັນຫຍັງນ້ອງຈຶ່ງຖິ້ມປະອ້າຍຄືແນວນີ້...ຢູ່ໃສນ້ອງວ່າຈະ ແຕ່ງງານກັບອ້າຍ... ໃສພວກເຮົາວ່າຈະເປັນຜົວເມັຍກັນຈົນ ເຖົ້າຈົນແກ່...ນ້ອງຂີ້ຕົວະ...ນ້ອງເວົ້າບໍ່ຈິງ...ແລ້ວຊາຍໜຸ່ມ ກໍປ່ອຍນ້ຳຕາໄຫລຕົກອອກມາ...

ການສູນເສຍຜູ້ຍິງຄົນນີ້, ຫລາຍຄົນກໍເຍີ້ຍຫຍັນວ່າເຂົາ ບາບ, ບາບກຳຕາມນຳສະໜອງເຂົາ. ໂດຍສະເພາະໃນກຸ່ມພວກແມ່ຍິງມັກຈະເວົ້າຕຳນິເຂົາ. ເຂົາຖືກຂະໜານນາມວ່າ: ເສືອຜູ້ສາວ . ເຂົາເກີດຢູ່ໃນຖານະເຊື້ອຜູ້ດີມີຕະກູນ. ເຂົາເປັນລູກຊາຍ ຄົນດຽວແລະທັງເປັນລູກຫລ້າຂອງຕະກູນ ທີ່ພໍ່ແມ່ຊ່າງຄອຍເອົາ ອົກເອົາໃຈມາແຕ່ນ້ອຍຈົນໃຫຍ່. ເຂົາຢາກໄດ້ຫຍັງກໍຕ້ອງໄດ້, ຖ້າວ່າເດືອນກັບດາວສາມາດປົດລົງດິນໄດ້ເຂົາກໍມີສິດຈະໄດ້ມັນມາຄອງ.

ການຮຽນໜັງສືບໍ່ເຄີຍຮຽນເກັ່ງ ຍາມສອບເສັງລັກ ກ່າຍ ແຕ່ລະປີມີສິດເສັງຂຶ້ນຫ້ອງໄດ້ໂດຍການເອົາເງິນຢັດປາກ ຄູ ແລະເຂົາຍັງມີສິດໂຊກດີໄດ້ໄປຮຽນຕ່າງປະເທດ.

ການໄປຮຽນຕ່າງປະເທດຂອງເຂົາ 5 ປີສຳກັບໄປ ທ່ຽວຫລິ້ນ. ພາສາຕ່າງປະເທດກໍຍັງໄດ້ປູງປາງ ເວົ້າຂີ້ຮ້າຍແມ່ນ ແຕ່ ຈ.ມ ຫາຜູ້ສາວກໍຍັງຫາໝູ່ຄູ່ຂຽນໃຫ້.

ຄູອາຈານແກ່ວງຫົວຍອມວຶດງ ບັກນີ້ຮຽນປຶກປານຄວາຍ, ມີບາງຄູສອນກໍເວົ້າສຽດວ່າ: ຄົນສະໝອງກົບແນວນີ້ ມັນກໍມີ ໜ້າຖືກສົ່ງຕົວມາຮຽນຕ່າງປະເທດຊັ້ນຫວະ ?...ແລະໃບປະ ກາດໄຊນິຍະບັດທີ່ໜໍໄດ້ຕິດມືມາຈາກຕ່າງປະເທດກໍໄດ້ຈາກການເອົາເງິນຈອບຍອຍແລກມາ.

ມາຮອດເມືອງລາວໜໍບໍ່ໄດ້ໄປສະເໜີໂຕເຮັດວຽກ. ໜໍນອນຢູ່ບ້ານລ້າໆຕັ້ງຫລາຍເດືອນ. ເມື່ອຖືກຖາມໜໍກໍຕອບວ່າ: ໜໍບໍ່ໄດ້ໄປຮຽນ ແຕ່ໜໍໄປທ່ຽວຕ່າງປະເທດເພື່ອກຳໄລຊີວິດຕ່າງຫາກ...

ປະຈຸບັນນີ້ຊີວິດໜໍກໍຄືໝູຕົກຖັງເຂົ້າສານ ເກົ້າກໍກິນ ສິບ ກໍກິນ, ໜໍເຮັດທຸລະກິດການຄ້າ. ໜໍວິ້ງເຕັ້ນສິນຄ້າ ເຄື່ອງວັດສະດຸກໍ່ສ້າງໃນຖານະເປັນທ້າວເລຂາຊ່ວຍວຽກໃຫ້ກັບຈິດຈະການຂອງພໍ່ໜໍເອງ.

ເວົ້າເຖິງໝໍນີ້, ເລື່ອງສູລານາລີ ຄຽງຄູ່ກັນໄປ. ມີຮ້ານ ກິນດື່ມຮ້ານໃດທີ່ຈະບໍ່ຮູ້ໜ້າໝໍ. ລາຍເຊັນຂອງໝໍສວຍງາມ ທີ່ສຸດກິນທັງຕິດໝີ້ ມີບາງຮ້ານກໍໃຊ້ແລະມີບາງຮ້ານໝໍກໍຕົວະຕົ້ມ ໃຫ້ເປື່ອຍໄປເລີຍ.

ພວກຜູ້ສາວຕ່າງກໍນິຍົມຊົມຊອບໝໍ ເພາະໝໍທັງຫລໍທັງລວຍ ໝໍເຄີຍຕົວະຕົ້ມຜູ້ສາວມາຫລາຍຄົນ ແຕ່ໝໍເອງກໍຖືກຜູ້ສາວ ຕົ້ມຢ່າງສາຫັດເຊັ່ນດຽວ.

ຜ່ານມາໝໍນີ້ເຄີຍຖື ແມ່ຍິງຄືທາງຜ່ານແລະໝໍກໍບໍ່ເຄີຍ ຈິງຈັງກັບໃຜໝົດ. ຜູ້ຍິງຕັ້ງຫລາຍສິບຕົກເປັນເຫຍື່ອດ້ວຍວິທີຈົກ ລູກອອກຈາກພົກຍ້ອນຄາລົມໂຈນຂອງໝໍ.

ກ່ອນໜ້າຈະມາພົບກັບສາວມະນີລັກ ໝໍກໍເສືອກໄປ ຕໍ່ແຍເມຍເຂົາ. ໝໍຖືກຜົວເຂົາຂູ່ຂ້າວ່າ: ຄົນຈະມາເຮືອນຫລັງນີ້ ແລະຈະມາຕໍ່ແຍກັບແມ່ຍິງຄົນນີ້ອີກ ມາເທື່ອໜ້າໃຫ້ຖືທຶບສິບມາ ພ້ອມເນີ!

ໝໍ ພົບກັບສາວມະນີລັກ ແບບຟ້າຊຼກຫລັງໃສ່.

ພຽງພົບຄັ້ງແລກໝໍກໍເກີດຄວາມສົນໃຈແລະກໍ ສົນກວ່າຜູ້ຍິງຫລາຍໆຄົນທີ່ເຄີຍພົບພານ.

ຈາກເສັ້ນທາງເກືອບຮ້ອຍກິໂລແມັດ ທ່າລາດ-ບ້ານ ເກີນແລ້ວມຸ່ງໜ້າສູ່ວຽງຈັນ, ຄວາມເປັນໜຸ່ມເຈົ້າສຳລານຂອງໝໍຈົນລືມກະກຽມຮອດນ້ຳມັນລົດ. ມາຮອດຈຸດໜຶ່ງຂອງເສັ້ນທາງ

ລົດຈັກຢາມາຮາ Z R ເພື່ອນຄູ່ໃຈໜໍ່ກໍເລີຍໝົດນ້ຳມັນ. ກ່ອນຈະມາຮອດບ່ອນຂາຍນ້ຳມັນ ໜໍ່ກໍຕ້ອງອອກແຮງຈູງລົດຢ່າງເໜື່ອໄຫລໄຄຕົກ. ໜໍ່ສົມນ້ຳໜ້າໜໍ່ຢ່າງເອົາແທ້ເອົາວ່າ. ໜຸ່ມ ເຈົ້າສຳລານຊູກລົດຂາດນ້ຳມັນ ກໍເປັນຕາລະອາຍແກ່ຄົນທັງໂລກ. ໃນພາວະແບບນີ້ ເສດຖີມີເງິນເປັນຮ້ອຍໆລ້ານກໍຕ້ອງກົ້ມໜ້າກົ້ມຕາຮັບຊາຕາກຳ.

ຮ່າ ຕຳມັນນີ້ເອີຍ! ຫາລົດໝູ່ຄູ່ບັກຮ່າໃດຈະກາຍຜ່ານ ມາທາງນີ້ ກໍບໍ່ເຫັນພໍ່ອົນ!...ນີ້ຄືສຽງຈົ່ມທຸກຂອງໜໍ່.

ໜໍ່ຈູງລົດເກືອບເຖິງສອງກິໂລແມັດຈຶ່ງມາເຖິງບ່ອນຂາຍນ້ຳມັນ.

ມະໜີ່ນີ້ບໍ່ແມ່ນປ້ຳຂາຍນ້ຳມັນໃຫຍ່. ມັນແມ່ນຈຸດຂາຍນ້ຳ ມັນຍ່ອຍ. ນ້ຳມັນແອັດຊັງ ຖືກບັນຈຸໃສ່ໃນກວດແກ້ວປະມານ ສີ່-ຫ້າແກ້ວ ຕັ້ງຢອງໄວ້ໃນໂຕະນ້ອຍໜ່ວຍໜຶ່ງ. ຈຸດຂາຍນ້ຳມັນ ຍ່ອຍແບບນີ້ບໍ່ຈຳເປັນທີ່ຈະເສຍພັນທະພາສີ, ຂາຍຢ່າງເສລີ ແຕ່ກໍ ຖືກທາງການຍຶດແລະສັ່ງຫ້າມຕັ້ງຫລາຍເທື່ອ ແຕ່ກໍປະກົດເກີດຂຶ້ນມາອີກ ຄຳຕອບຢູ່ບ່ອນວ່າ ໃນໄລຍະເຂົ້າຍາກໝາກແພງວຽກຮັດງານທຳກໍຊອກຍາກ ຫາເງິນກໍຍາກປານຫ່ອນຄຳ ຄ່າແຮງງານກໍຕ່ຳ ຕ່າງຄົນກໍຕ້ອງໄດ້ດີ້ນລົນເພື່ອ ມີຕ່ອນຊຸມແລະຄາບເຂົ້າ ຢາໄສ້, ຈະບີບຄັ້ນປານໃດກໍຍິ່ງແປດ ອອກມາ ປານບີບເສັ້ນເຂົ້າປຸ້ນ.

"ຊື້ນ້ຳມັນແດ່!..." ໜຸ່ມເຈົ້າສຳລານຂານສຽງດ້ວຍ ທ່າທາງເມື່ອຍອ່ອນ.

ມີຍິງຄົນຫນຶ່ງຍ່າງອອກມາ.

"ເອົາຈັກລິດອ້າຍ ?..."

" ຫ້າລິດ!..."

ຂະນະທີ່ຍິງສາວກຳລັງຮ່າຍນ້ຳມັນໃສ່ຖັງລົດ ຫນຸ່ມເຈົ້າ ສຳລານກໍໃຊ້ສາຍຕາພະເອກຫນັງຈັບຈ້ອງໃບຫນ້ານາງຢ່າງບໍ່ພັບຕາ.

ສາວອັນນັ້ນຄິດລະອາຍ ໄດ້ແຕ່ເຮັດຫນ້າຍຸ້ມໆແຍ້ມໆ.

" ຄືວ່າເບິ່ງນ້ອງຄັກແທ້ ?..."

" ກໍນ້ອງງາມນີ້ນາ !..."

" ບໍ່ງາມທໍ່ເມຍອ້າຍດອກ!..."

" ຮູ້ແນວໃດວ່າອ້າຍມີເມຍ ?..."

" ກໍເບິ່ງຫູອ້າຍນັ້ນລະ !...

ຂະນະຊາຍຫນຸ່ມເຈົ້າສຳລານກຳລັງບາຍຫູຕົວເອງຢູ່ນັ້ນ, ສາວອັນນັ້ນກໍຕ້ອຍໃສ່ອີກປະໂຫຍກຫນຶ່ງວ່າ:

" ຢ່າງຂີ້ຮ້າຍອ້າຍກໍມີລູກສອງຄົນແລ້ວ !..."

" ຈີ່ວ່າແນວໃດ ກໍ່ວ່າເທາະ...ອ້າຍຢາກບອກວ່າ ມາເຫັນຫນ້ານ້ອງແລ້ວ ອ້າຍຮູ້ສຶກຫາຍເມື່ອຍກັບທີ່ເລີຍ !..."

" ອ້າຍມາແຕ່ໃສ ?..."

"ໄປເລື້ອຍໆ ບໍ່ມີຈຸດຫມາຍປາຍທາງ !..."

ຫມໍ່ຍື່ນໃບທ້າຮ້ອຍບາດໃຫ້ສາວອັນນັ້ນ

" ອ້າຍເອົາເງິນທອນ !..."

" ຢ່າລະ !...ປະໄວ້ນັ້ນລະ !..."

" ບະ ! ອີຕາອັນນີ້ ມາແປກແທ້!.."

ສາວອັນນັ້ນແນມເບິ່ງໃບໜ້າຮ້ອຍບາດ ແລ້ວຮັດໜ້າສີ ຊຶງລົງ.

- ແລະນີ້ຕໍ່ມາ-ຕໍ່ມາ ແລະຕໍ່ມາ ໜຸ່ມເຈົ້າສຳລານກໍມັກມາປະກົດກາຍຕໍ່ໜ້າເຮືອນສາວອັນນັ້ນເລື້ອຍໆ.

ສາວ ມະນີລັກ, ຄວາມງາມຄວາມມີສະເໜ່ບໍ່ ຂີ້ຮ້າຍ. ໃບໜ້າຮູບໄຂ່ຄ້ວກົງ ສີເນື້ອອ່ອນອ້າງດຳແດງ ເປັນຄົນສະ ຫລາດປາດເປື່ອງ ການເວົ້າຈາອ່ອນຫວານ ກິລິຍາສຸພາບຮຽບຮ້ອຍ. ນາງມີອາຊີບຄູທີ່ຮຽນຈົບຈາກມະຫາວິທະຍາໄລດົງໂດກ.

ຈຸດອ່ອນຂອງນາງຄືເກີດມາບໍ່ລວຍ ແຕ່ກໍໂຫດນາງ ບໍ່ໄດ້ເພາະມັນເລືອກເກີດບໍ່ໄດ້ນີ້ນາ. ນາງເປັນກຳພ້າພໍ່ ມີນ້ອງ ສາມຄົນ ຄອບຄົວນາງລວມມີຫ້າຊີວິດ.

ທຸກເທື່ອທີ່ໜຸ່ມເຈົ້າສຳລານປະກົດຕົວຕໍ່ໜ້າເຮືອນ ສາວມະນີລັກ, ຫລາຍຄົນທີ່ຮູ້ປະຫວັດໜຸ່ມເຈົ້າສຳລານທີ່ເຄີຍຂະໜານຕົວວ່າ: ເສືອຜູ້ສາວ ກໍຕີລາຄາວ່າ ສາວມະນີລັກ ຕ້ອງຕົກ ເປັນເຫຍື່ອບັກອັນນີ້ແທ້ໆ.

ວັນເວລາຜ່ານໄປ ຫ້າເດືອນກວ່າ ສອງຊີວິດກໍຍິ່ງຜູກພັນຮັດຕົວກັນເຂົ້າ. ການໃຫ້ກຽດ ເອົາອົກເອົາໃຈແລະການເຂົ້າໃຈກັນຄືປັດໃຈຂອງຄວາມຮັກທີ່ດີ.

ໜຸ່ມເຈົ້າສຳລານ ໄດ້ຫລົງຕົວຫລົງໃຈກັບສາວມະນີລັກຢ່າງເຮືອຫລົ້ມກາງໜອງ. ໜໍອອກປາກວ່າຮັກໃຜກໍບໍ່ຄືຮັກສາວອັນນີ້, ຍິ່ງຮັກກໍຍິ່ງຖະໜຸຖະໜອມແລະໜໍກໍໄດ້ສາລະພາບໃຫ້ກັບ ຕົວເອງວ່າ: "ນ້ຳກິນບໍ່ກວນໃຫ້ຂຸ່ນ".

ຊຶ່ງການອັນດຽວຂອງສາວມະນີລັກຄື: ຄວາມບໍລິສຸດຂອງລູກຜູ້ຍິງທີ່ເອີ້ນວ່າ: ພົມມະຈາລີດວງນີ້ ຈະມອບໃຫ້ຜູ້ຊາຍຄົນໃດໜຶ່ງໄດ້ກໍຕໍ່ເມື່ອຫລັງຈາກການຜູກແຂນແຕ່ງງານສາກ່ອນ!...

ບໍ່ໜ້າເຊື່ອວ່າສາວມະນີລັກ ຈະຈັບເສືອຮ້າຍຕົວນີ້ໃຫ້ຢູ່ຄາທີ

ເມື່ອຖືກໝູ່ຄູ່ຢອກເຍີ້ຍ ມະນີລັກ ກໍບອກວ່າທຸກສິ່ງຢ່າງ ຂຶ້ນກັບຕົວຜູ້ຍິງເອງ...ເມື່ອນ້ຳຍ້ອຍຫອຍກໍໄຕ່...ຄົນບໍ່ມີໜອງປາກໍບໍ່ບ້ອນ.

ເບື້ອງຕົ້ນພໍ່ແມ່ຂອງໜຸ່ມເຈົ້າສຳລານ ກໍຄັດຂາດຄັດຄ່ຽວບໍ່ເຫັນດີເຫັນພ້ອມ. ເຂົາເຈົ້າໄດ້ຕຳນິຕິສົນວ່າ ສາວມະນີລັກເປັນຄົນທຸກຍາກ ອາດຈະພາໃຫ້ເສື່ອມເສຍຊາດຜູ້ດີມີຕະກູນ.

" ແມ່ເອີຍ!...ຄົນທຸກຄົນຍາກ ເຂົາກໍແມ່ນຄົນຄືກັບ ພວກເຮົາ ບໍ່ແມ່ນຫວະ ?...ຫລືຄົນລວຍຕາຍບໍ່ເປັນຊັ້ນຫວະ!..."

" ແມ່!...ເລີກຈຳແນກແບ່ງຊັ້ນກັນບໍ່ໄດ້ຫວະ ?...ມັນໝົດສະໄໝແລ້ວ...ທຸກກໍ່ຄົນ ມີກໍ່ຄົນ...ຢາກໃຫ້ເຂົາລວຍ ກໍຊ່ວຍເຫລືອເຂົາຕິ !..."

" ເອີ! ເລື່ອງພໍ່ກັບແມ່ບໍ່ເຫັນດີກໍເປັນເລື້ອງຂອງຜູ້ໃຫຍ່ . ດຽວນີ້ລູກເອງກໍບໍ່ແມ່ນເດັກນ້ອຍອີກແລ້ວ!...ລູກໃຫຍ່ແລ້ວ... ແມ່ເຄີຍຕຳນິລູກວ່າເປັນຄົນເກເລເສເພແມ່ນບໍ່ ?...ອີກ ຢ່າງໜຶ່ງແມ່ກໍຮຽກຮ້ອງໃຫ້ລູກແຕ່ງງານຕັ້ງຫລາຍເທື່ອ...ແລະ ພໍເຖິງເວລາລູກຢາກແຕ່ງ...ພໍ່ກັບແມ່ ກໍຢືນຕົວຄັດຄ້ານ...ໂລກນີ້ບໍ່ຍຸຕິທຳເລີຍ !..."

" ແມ່! ຖ້າການແຕ່ງງານຂອງລູກເປັນການເສຍກຽດ ພໍ່ແມ່...ລູກຂອງກໍຈະຕັດຂາດຄວາມເປັນລູກເປັນແມ່ກັນນັບແຕ່ນີ້ເປັນຕົ້ນໄປ...ລູກຮັກເຂົາ...ລູກຕ້ອງແຕ່ງງານກັບເຂົາ!.."

ລູກຊາຍດຽວຂອງຕະກູນ,

ມາຮອດຈຸດນີ້ພໍ່ແມ່ກໍຕ້ອງໃຈອ່ອນ ກໍເພາະການແຕ່ງງານລະຫວ່າງຄົນຈີນກັບຄົນລາວຍັງກໍບໍ່ໄດ້ຜິດກົດໝາຍຂໍ້ໃດ.

ການອອກທຶນປຸກເຮືອນຫລັງໃຫມ່ໃຫ້ກັບສາວມະນີລັກກໍເລີ່ມລົງມື ເພື່ອເປັນການດີໜ້າດີຕາ. ຫລັງຈາກຂຶ້ນເຮືອນໃຫມ່ ໄດ້ສາມວັນ ການສູ່ຂໍຕາມປະເພນີກໍເກີດຂຶ້ນແລະພິທີແຕ່ງງານ ລະຫວ່າງໜຸ່ມເຈົ້າສໍາລານແລະນາງສາວມະນີລັກກໍເຫລືອ ເວລາພຽງສາມວັນ.

ດວງຕາວັນລ້າຍຄ່ໍາແລວ,

ທີ່ເຕົາເຜົາສົບ ຍັງຫຼຽວເຫັນຖ່ານໄຟແດງຢູ່.

ຄວັນໄຟສີດໍາຍັງພຸ່ງຕົວຂຶ້ນເປັນເລົາບາງໆ

ທີ່ຕີນຮົ້ມສາມສາກໍຍັງເຫັນຊາຍໜຸ່ມຄົນໜຶ່ງຢູ່ໃນອາລົມງຽບ.

ພາບເຕົາເຜົາສົບຄອຍປັກຄອຍປວດ,

ສາຍຕາຂອງເຂົາປະກົດແນມເຫັນພາບທຸກສິ່ງທຸກຢ່າງ ຕອນມະນີລັກ ຍັງມີຊີວິດຢູ່. ຄໍາເວົ້າຈາສຽງຫົວຮອຍຍິ້ມ ນ້ໍໃສໃຈ ດີຄວາມນີ້ມນວນອ່ອນຫວານ, ລິດເຫັນພາບທີ່ເລີຍໄປຫລືນໄປ ທ່ຽວດ້ວຍກັນ, ບຸນບັ້ງໄຟບຸນຊ່ວງເຮືອ, ບຸນພະທາດຫລວງ, ສະຖານທີ່ທ່ອງທ່ຽວອື່ນໆແລະພາບທີ່ຍັງປະທັບໃຈທີ່ສຸດກໍຄືພາບພົບຮັກຄັ້ງທໍາອິດຕອນລັດຂາດນ້ໍາມັນ.

ສຽງຖອນໃຈ-ສຽງສູບອື້ມູກ-ສຽງສະອຶກສະອື້ນ ຄ່ອຍໆ.

ມະນີລັກ! ອ້າຍເປັນຄົນຜິດເອງ! ອ້າຍມັນຊົ່ວກ່ວາສັດ ອີກ ຊ້ຳ.

ຕາມຄຳໃຫ້ການຂອງທ່ານໝໍ: ຄົນເຈັບຖືກນຳສົ່ງໂຮງ ໝໍ ຕອນຫ້າໂມງແຈ້ງ. ຖ້າແມ່ຍິງຄົນນີ້ ເອົາມາໂຮງໝໍທັນການນາງ ຈະບໍ່ຕາຍ. ຂານາງບໍ່ຫັກ ແຂນບໍ່ຫ້ານແລະບໍ່ມີບ່ອນໃດທີ່ຈະ ເປັນ ບາດແຜແຮງພິລຶກ, ມີແຕ່ວ່ານາງຊ້ຳໃນ.

ພາບຕອນຄ່ຳຄືນເວລາ 10 ໂມງຂອງວັນທີ 13, ຄືນນັ້ນ ຊາຍໜຸ່ມຈື່ໄດ້ຢ່າງເຕັມຕາວ່າມີຫຍັງເກີດກັບເຂົາ. ດ້ວຍຄວາມ ມຶນເມົາຂອງພິດເຫຼົ້າ ລົດໂຕໂຍຕາ ສີຂາວທີ່ເຂົາກຳລັງຂັບຊາ ພວງມະໄລຢູ່ນັ້ນ ກໍເຈືອກໄປຕຳເອົາລົດຈັກຄັນໜຶ່ງ. ຜູ້ຖືກຕຳບໍ່ຮູ້ ວ່າແມ່ນຍິງຫລືຊາຍ. ຍ້ອນຄວາມບໍ່ຮັບຜິດຊອບຕໍ່ຄວາມຜິດ, ເຂົາ ຢ້ານໂທດມາເຖິງຕົວ, ເຂົາກໍເລັ່ງລົດປົບໜີຄະດີ.

ມະນີລັກ! ອ້າຍບໍ່ນຶກວ່າ ຄົນຂັບລົດຈັກຄັນນັ້ນຈະແມ່ນນ້ອງ! ຖ້າອ້າຍມີຄວາມເປັນມະນຸດພໍນ້ອງຄົງບໍ່ຕາຍອອກ!

ອ້າຍນີ້ລະ! ຄືຜູ້ຂ້ານ້ອງ!

ອ້າຍຄືຄາດຕະກອນ !

ຄືນນັ້ນ, ອ້າຍນອນບໍ່ຫລັບໝົດຄືນຢ້ານຄະດີຕາມຕົວ.

ຕື່ນເຊົ້າມາ, ກໍມີຄົນຜູ້ໜຶ່ງມາກະຊິບໃສ່ອ້າຍວ່າ ນ້ອງເກີດອຸ ປະຕິເຫດ ລົດຕຳແລະກຳລັງພັກຟື້ນຢູ່ໂຮງໝໍ.

ຈາກການເລົ່າເຫດການຂອງຄົນຜູ້ໄປພົບເຫັນສະຖານທີ່ເກີດ

ອຸປະຕິເຫດຄືນນັ້ນ...ກໍແມ່ນອ້າຍນີ້ລະເປັນຕົ້ນເຫດຂອງຄະດີ.

ມະນີລັກ!

ຄະດີນີ້ ອ້າຍຈະເປີດເຜີຍໃຫ້ໃຜຮູ້ບໍ່ໄດ້ເທື່ອ.

ອ້າຍຈະເປີດເຜີຍກໍເມື່ອເຈົ້າໜ້າທີ່ຕາມທັນ.

ອ້າຍຈະຖືມັນເປັນຄວາມລັບຕະຫລອດການ.

ມະນີລັກ!

ຈົ່ງອະໂຫສີໃຫ້ອ້າຍເຖີດ!

ອ້າຍກໍຮູ້ ! ການກະທຳຜິດຂອງອ້າຍຄັ້ງນີ້ເປັນໂທດທີ່ອະໄພບໍ່ໄດ້...ແຕ່ອ້າຍກໍໄດ້ຜິດໄປແລ້ວ !

ຈົ່ງປິດລັບຊ່ວຍອ້າຍເຖີດ !

ຂະນະນີ້ອ້າຍໄດ້ບວດເພື່ອໄຖ່ບາບໃຫ້ກັບນ້ອງແລ້ວ...ເບິ່ງຕີ !...ອ້າຍຢູ່ໃນຊຸດຜ້າກາສາວະພັດສີເຫລືອງ.

ອ້າຍຈະຕັກບາດໝາຍທານໃຫ້ນ້ອງໃນແຕ່ລະມື້ !

ຂໍດວງວິນຍານຂອງນ້ອງຈົ່ງໄປສູ່ສຸຂະຕິເຖີດ !

ມະນີລັກ ! ຢູ່ໃນຊຸດຜ້າເຫລືອງ ໂລກນີ້ຊ່າງສະຫງົບເນາະ!



# ລົດຖີບອີ່ພໍ່

*ຂ້ອຍເອງເປັນລູກຊາຍຫລ້າໃນຈຳນວນລູກເຈັດຄົນ.

ລົດຖີບຄັນນີ້ພໍ່ບອກວ່າຊື້ຕອນສະໄຫມຍັງເປັນບ່າວ ສະ ແດງວ່າເວລານັ້ນຂ້ອຍຍັງເປັນແດດເປັນລົມຢູ່. ມັນເປັນລົດຖີບຄັນທຳອິດຂອງປະຊາຊົນບ້ານນັ້ນໃນສະໄຫມນັ້ນ. ສະໄຫມພໍ່, ໃຜມີລົດຖີບຂີ່, ການມີຫນ້າມີຕາປານວ່າສະໄຫມນີ້ມີຍົນສ່ວນຕົວຂີ່.

ຜູ້ບ່າວຮຸ້ນລາວຄາວດຽວກໍເກີດອິດສາຕາຮ້ອນທີ່ພໍ່ມີລົດຖີບຂີ່. ຜູ້ສາວເກີດຄວາມນິຍົມຊົມຊອບ. ແຖມພໍ່ພັດເປັນອ້າຍຈານສິກຈາກວັດ ສັກແຂນລາຍຂາລາຍແຖມຍັງມີນົກນ້ອຍງອຍແກ້ມຕອດຂີ້ຕາກໍຍິ່ງເກີດຄວາມມະຫາສະເຫນ່.

ພໍ່ຊື່ວ່າ ໂຄນຫລີຈານໂຄນ.

ສະໄຫມພໍ່, ໃຜໄດ້ພົວອ້າຍທິດອ້າຍຈານ ຍິງຄົນນັ້ນນັບ ວ່າໂຊກທີ່ສຸດ ເພາະເປັນນັ້ນ ຄວາມຮູ້ຄວາມສະຫລາດແມ່ນເກີດ ຢູ່ວັດແລະຫຽບໃສ່ໃນສະໄຫມນີ້ສຳລັບຜູ້ຍິງໄດ້ພົວພໍ່ຄ້າໄມ້ທ່ອນ ຈຶ່ງຊັ້ນລະ.

ຄວາມຈິງພໍ່ເວົ້າວ່າໄດ້ເມຍທີ່ເປັນແມ່ພວກສູຢູ່ດຽວນີ້ກໍ ຍ້ອນລົດຖີບຄັນນີ້ລະຊ່ວຍຊູຍູ້ສົ່ງ.

ລົດຖີບພໍ່ເປັນ ລົດ ຜູ້ຊາຍສີດຳ ຍີ່ຫໍ້ໂຟນິກ, ຜະລິດຈາກ ປະເທດອັງກິດ. ຄຸນນະພາບທາງຕົວທຽບຍາກ. ພໍ່ຊື້ລາຄາສາມຫລຽນຫຼືເຈັດ ຫລຽນນີ້ລະ ຂ້ອຍກໍລືມຫລັງຫລືບໍ່ດັ່ງນັ້ນກໍສິບຫລຽນນີ້ລະ.

ເວົ້າເຖິງເງິນຫລຽນຢ່າໄປຄິດວ່າເງິນຫລຽນສະຫະລັດ ອາເມລິກາເດີ, ພາສາພື້ນບ້ານທາງໃຕ້ເຂົາເອີ້ນກີບເປັນຫລຽນ, ເຈັດຫລຽນກໍແມ່ນເຈັດກີບນັ້ນແລ້ວ.

ອີ່ພໍ່ເວົ້າວ່າ: ກ່ອນຈະໄດ້ລົດຖີບຄັນນີ້ ແມ່ນແຕ່ຫຼັບ ຕາ ນອນກໍສະເດີດຝັນ. ພໍ່ຢາກໄດ້ລົດຖີບມາຂີ່ອວດສາວ. ກໍຍ້ອນວ່າພໍ່ ເປັນລູກຊາຍດຽວໃນຈຳນວນ ລູກຫ້າຄົນ ຍິງສີ່ຄົນ, ພໍ່ກໍເລີຍກາຍເປັນລູກຫົວແກ້ວຫົວແຫວນຂອງຄອບຄົວທີ່ທຸກຄົນຕ້ອງໃຫ້ຄວາມຮັກແພງເປັນພິເສດແລະແລ້ວ ພໍ່ຂອງພໍ່ກໍເລີຍຊື້ລົດຖີບຄັນທີ່ວ່ານີ້ເປັນຂອງຂວັນແກ່ລູກຊາຍຄົນໂປດ.

ສິກອອກຈາກວັດ ພໍ່ຍຶດອາຊີບຂາຍຢາ ແຕ່ບໍ່ຫມາຍວ່າພໍ່ເປັນທ່ານຫມໍຫລືທ່ານດອກເຕີຢາທີ່ອີ່ພໍ່ຂາຍກໍບໍ່ແມ່ນຢາເທບຢາ ຫລວງມັນແມ່ນຢາກະທໍຢາສູບນີ້ນາ.

ສະໄຫມພໍ່ຂ້ອຍເປັນບ່າວກໍບໍ່ແມ່ນຂີ້ເປັດຂີ້ໄກ່ເດີ. ພໍ່ເປັນ ນັກຕະລຸຍໂລກທີ່ໂຊກໂຊນພໍສົມຄວນ. ດ້ວຍອາຊີບຂາຍຢາກະທໍ ພໍ່ຈຳຕ້ອງໄດ້ອອກລາດຕະເວນຫລາຍບ່ອນຫລາຍທີ່. ໃນຄຳວ່າ ສີພັນດອນ ພໍ່ບອກວ່າໄດ້ໄປຢ່າງຢຽບຂີ້ດິນເກືອບຫມົດ. ຂີ່ລົດຂ້າມຫ້ວຍ

ລອຍວັງ ຈາກດອນນີ້ກໍຂ້າມໄປໃສ່ດອນໃຫມ່. ບ້ານຄອນ- ບ້ານເດດ-ດອນຕານ-ລີບປະດິຫລະທີ-ດອນຊ້າງໄພ-ດອນພິມານ -ດອນຂະເຫນີໆ-ສາລາສີງ-ດອນຮີ ແລະ ອີກຫລາຍໆດອນ.

ໄປຮອດບ້ານໃດ ພໍ່ຕ້ອງຜູກແພງບ່ອນນັ້ນ. ພໍ່ມີພີ່ຮັກແມ່ຮັກບໍ່ອົດ, ບາງບ້ານພໍ່ຂອດສ່ຽວໄວ້ໂດຍສະເພາະແມ່ນພໍ່ສ່ຽວເພັງ ບ້ານດອນແຮດ ໄດ້ກາຍເປັນສ່ຽວເປັນສ່ຽວຕາຍກັບພໍ່ຈົນຮອດມື້ນີ້ . ແລະມີບາງບ້ານພໍ່ກໍມີຮອດຊູ້ຮອດແຟນໄວ້.

ອີພໍ່ຍັງເວົ້າວ່າ: ນິໃສຜູ້ບ່າວບ້ານນອກມັກຫວງຜູ້ສາວ ປານຫມາຫວງກ້າງ. ອີພໍ່ຖືກບ່າວຕ່າງບ້ານລັດຕີຫລາຍເທື່ອ, ແຕ່ເລື່ອງຊຶກຕ່ອຍຫນຶ່ງຕໍ່ຫ້າສະບາຍບໍ່ເພາະພໍ່ຂອງພີ່ທີ່ອີພໍ່ເອີ້ນຢູ່ນັ້ນ ແມ່ນເຈົ້າຕຳລານວຍເສືອລາກ ຫາງ. ອີພໍ່ບໍ່ໄດ້ຮອດເຄິ່ງຫນຶ່ງຂອງ ປູ່ຊ້ຳ.

ເວົ້າແລ້ວບໍ່ແມ່ນຂາຍຂີ້ຫນ້າພໍ່ໂຕເອງດອກ. ພໍ່ຂ້ອຍກໍເປັນຄົນເຈົ້າຊູ້ຫລີ້ເຫລົ້າພໍ່ຄວນ. ເຮືອນຮ່າງໃຫຍ່ສູງ ເປັນຄົນດຳແດງ . ລາວມັກເວົ້ານົວຫົວມ່ວນ, ມັກເວົ້າຫລາຍຈົນຊາວບ້ານເອີ້ນວ່າ "ຂີ້ຝອຍ". ຂ້ອຍເອງກໍແມ່ນຜູ້ຫນຶ່ງທີ່ຕິດແສດພໍ່ເລື່ອງຂີ້ໂມ້ຂີ້ຝອຍ.

ດ້ວຍຄວາມເວົ້າເປັນເວົ້າຄືຂອງພໍ່ບວກໃສ່ພໍ່ເປັນຄົນຮູບຊໍ່ ແຕ່ພໍ່ຈຶ່ງກາຍເປັນຜູ້ຊາຍມາກຊູ້ຫລາຍເມຍ. ຈັກວ່າ ຂີ້ໂມ້ບໍ່ຫລີບໍ່ລາວວ່າຄາວເປັນບ່າວລາວມີແຟນຕັ້ງສາມໂຫລພຸ້ນລະ ແລະ ແມ່ຂ້ອຍສູ່ມື້ນີ້ເປັນເມຍຄົນທີເຈັດ.

ພໍ່ສ່ຽວເພັງ ຍັງເຍີ້ຍອີພໍ່ວ່າບັກແອວຫມາ ຫມາຍວ່າພໍ່ ເປັນຄົນແອວດີ. ບັນຫານີ້, ຂ້ອຍເອງບໍ່ໄດ້ແນວອີພໍ່ຮອດສິບສ່ວນຮ້ອຍຊ້ຳ.

ຂ້ອຍເປັນຄົນຂີ້ອາຍ, ເລື່ອງຜູ້ສາວບໍ່ມັກມາກຊູ້ຫລາຍເມຍ, ຄົນ ຄື ຂ້ອຍແມ່ນຮັກດຽວໃຈດຽວ.

ເປັນຫຍັງແມ່ຈຶ່ງແຕ່ງງານກັບພໍ່ແລະກໍກາຍມາເປັນຄູ່ຜົວເມຍ ກັນຕະຫລອດຊີວິດຄືແນວນີ້, ຄວາມຈິງແມ່ຄົນຂີ້ຮ້າຍບໍ່ງາມແຕ່ ໄດ້ ຜົວເຈົ້າຊູ້. ຊາວບ້ານ ຫລາຍຄົນເກີດຄວາມອິດສາແມ່ໂດຍ ສະ ເພາະແມ່ນຜູ້ສາວຮຸ່ນລາວຄາວດຽວກັບແມ່.

ແມ່ບອກວ່າ ຮູ້ວ່າໂຕຂີ້ຮ້າຍກໍຕ້ອງເຮັດໃຈດີ, ໃຈກວ້າງ, ຮູ້ ໃຫ້ກຽດຜົວແລະກໍຮູ້ເຖິງອັນໃດຜົວມັກແລະບໍ່ມັກ, ໃນນັ້ນມີ ຄວາມ ອ່ອນໂຍນອ່ອນຫວານແລະເດັດຂາດ. ຮູ້ຈັກພາແລງພາງາຍ ສໍາ ຄັນທີ່ສຸດເຮັດອາຫານໃຫ້ຖືກປາກຜົວ. ຈາກເຂົາບໍ່ຄິດຮອດ ເຮົາ ເຂົາກໍຄິດຮອດຄາບເຂົ້າ. ອີກຫນຶ່ງເປັນເມຍກໍບໍ່ຄວນຈະຫວງ ຜົວ ເກີນໄປແລະກໍບໍ່ຄວນເພີຕົວ. ເວລາເຂົາໄປກໍຕ້ອງໃຫ້ເຂົາ ໄປ ຮອດເວລາມາເຂົາກໍຈະມາ, ແມ່ເຮືອນທີ່ດີກໍຄືແອບນວດມະຫາສະ ເຫນ່. ນີ້ຄືຕໍານານຮັກຂອງແມ່ ທີ່ເປັນໂສ້ມັດຂາພໍ່ໃຫ້ຢູ່ຄາຫມັດ.

ແມ່ເປັນຄົນບ້ານລົບປະດີຫົວດອນ ພໍ່ເປັນ ຄົນບ້ານດອນຖານ ກ່ອນຈະມາຫາແມ່ຕ້ອງຜ່ານດອນລຽງ ຂ້າມນ້ຳອີກສອງຕໍ່. ກໍຍ້ອນ ການຂີ່ລົດຖີບເລາະຂາຍຢາກະທໍຂອງພໍ່ນັ້ນລະ ໄດ້ກາຍເປັນຄາດ ແຕ່ ແຖນແນນແຕ່ຟ້າໃຫ້ພໍ່ກັບແມ່ມາຈັບມືແຕ່ງງານກັນ.

ດ້ວຍປາຍລີ້ນອັນມີສິລະປະຂອງພໍ່ ຈຶ່ງສາມາດຊະນະ ເອົາ ໃຈແມ່ໄດ້.

ຄວາມຮັກລະຫວ່າງພໍ່ກັບແມ່ບໍ່ແມ່ນຮັກດ້ວຍເງິນແມ່ນ ຮັກ ທີ່ແລກດ້ວຍແຮງງານ. ພໍ່ໄດ້ມາໄຖນາຊ່ວຍຕາງສອງຝົນ. ກໍຫມາຍ

ວ່າຄວາມຮັກແບບຊົມມະບົດ ເຂົາເຈົ້າຈະວັດແທກກັນຢູ່ ບ່ອນຄວາມຂະຫຍັນຂັນແຂງຂອງຜູ້ຈະມາເປັນເຂີຍ.

ແມ່ກໍຮູ້ດີວ່າພໍ່ເປັນຄົນມາກຊູ້ຫລາຍເມຍ ແຕ່ແມ່ກໍຕ້ອງ ຕັດສິນໃຈສ່ຽງໂຊກ ເພາະຊີວິດຮ້າງຜົວຮ້າງເມຍມັນກໍເປັນ ກົດເກນທີ່ຕາຍຕົວຢູ່ແລ້ວ ແຕ່ບໍ່ຫມາຍວ່າແມ່ ເປັນຄົນໃຈງ່າຍ.

ມາຮອດມື້ນອ້ພໍຍັງຂໂມ້ວ່າ: ກູເອົາກັບແມ່ພວກສູກັບຫມື່ງ ກໍບໍ່ໄດ້ແຕ່ງ ພໍ່ເຖົ້າແຕ່ງເອົາຕ່າງຫາກ. ອີແມ່ບໍ່ປາກພໍ່ຄວາມ ແຕ່ອີແມ່ຍົມຢ່າງຜູ້ຊະນະຄືແມ່ໄດ້ຜົວງາມ. ໂຕບ່ອນວ່າເອົາເມຍບໍ່ ໄດ້ແຕ່ງນີ້ ຂ້ອຍຢາກຮຽນເອົາແນວພໍ່ເດ!...

ຫວນຄືນລົດຖີບພໍອີກເທື່ອຫນຶ່ງ.

ມັນຊ່າງເປັນລົດຖີບມາດຖານແລະຄົງທົນຖາວອນ ທັງງ ອີພໍ່ກໍໃຊ້ງານຢ່າງປະຫຍັດປະຫາທີ່ສຸດ. ສະໄຫມນັ້ນນອ້ພໍເຄີຍຂີ່ກົ້ອນັບເທື່ອບໍ່ໄດ້, ອີພໍ່ແຂ້ວເຣ່ຍຕັ້ງສອງເຫລັ້ມແຕ່ລົດຖີບຍັງບໍ່ເປັນຫຍັງ.

ພໍ່ຖະຫນຸຖະຫນອມດັ່ງລູກໃນໄສ້. ເຊັດສ່ວາຍລ້າງປຽນຊຸປະກອນທີ່ຈຳເປັນ. ພໍ່ເວົ້າວ່າ: ສິ່ງໃດໃຫ້ຄຸນຄ່າກັບຊີວິດເຮົາ ກໍຕ້ອງຮັກມັນຄືຊີວິດ. ມີຄົນມາຖາມຊື້ຕັ້ງຫລາຍຄັ້ງຫລາຍຄົນ ບາງຄົນ ກໍໃຫ້ລາຄາທີ່ເປັນຕາຢາກຂາຍ ແຕ່ອີພໍ່ເວົ້າວ່າຂາຍລົດຖີບຄັນນີ້ ບໍ່ຕ່າງຫຍັງກັບຕັດຂາໂຕເອງ.

ຕອນລົດຖີບ ພໍ່ເສຍ

ອີພໍ່ ເບະໄຫ້ປານເດັກນ້ອຍຖືກແມ່ຕີ. ພໍ່ຈົ່ມແລ້ວຈົ່ມເລົ່າ ຄືດເສຍດາຍລົດ. ພໍ່ຫັງຮ້າຍທັງໂກດ. ບັກໃດລັກລົດກູ ຖ້າກູຈັບໄດ້ໄລ່ຫັນ ກູຊິຂ້າມັນ ນັ້ນຄືຄຳພະເດັດການຂອງພໍ່. ລົດຖີບເສຍກໍເສົ້າສະ

ຫລົດໃຈໄປທັງຄອບຄົວ ແມ່ກໍເສົ້າ ອ້າຍກໍເສົ້າ ເອື້ອຍກໍ ເສົ້າ ແລະຂ້ອຍເອງກໍສູດເສຍດາຍ ເພາະເວລານັ້ນຂ້ອຍເອງກຳ ລັງ ຮຽນຂີ່ລົດໃຫມ່.

ລົດພໍ່ເສຍຫ້າມຫາຄືນ, ພໍ່ຈອດໄວ້ກ້ອງລ່າງ. ຄວາມຈິງ ບ້ານ ຂ້ອຍບໍ່ຄ່ອຍຈະມີຄົນຂີ້ລັກມັກຈົກມີ້ນາ, ມັນແມ່ນໃຜມາກ້າລັກລົດພໍ່. ພໍ່ບໍ່ເຄີຍສ້າງຄວາມອາຄາດບາດຫມາງກັບໃຜມາ. ນິໃສພໍ່ຢ້ານແຕ່ ຜູ້ອື່ນເສຍໃຈຫລືວ່າມີຜູ້ຄິດອິດສາໃຜຈະໄປຮູ້ ?

ແລະແລ້ວລົດພໍ່ກໍເຫັນຄືນ.

ມັນແມ່ນບັກແກ້ວຂີ້ເຫລົ້າທີ່ເປັນຄົນຂ້າງເຮືອນແລະກໍ ແມ່ນ ຫລານອີ່ພໍ່ເອງ. ມັນລັກໄປເຊື່ອງໄວ້ຫົວນາລຸງແດງ. ມັນວ່າຈະລັກ ໄປຂາຍຊື້ເຫລົ້າ. ມັນໄປຈ່າວຂາຍໃຫ້ລຸງແດງ, ລຸງແດງຈື່ລົດພໍ່ໄດ້ ຢ່າງເຕັມຕາແລະແລ້ວລຸງແດງກໍລາກຄໍບັກແກ້ວພ້ອມລົດຖີບມາຫາ ພໍ່.

ເວົ້າກໍເວົ້າເທາະລົດຖີບອີ່ພໍ່ຄັນນີ້, ໃນຂອບເຂດຕາແສງນີ້ຈະ ລັກເອົາໄປຂາຍໃຫ້ໃຜບໍ່ໄດ້ດອກ. ປະຊາຊົນເຂດນີ້ຈື່ລົດພໍ່ໄດ້ດີ ທີ່ ສຸດ. ພວກເຂົາຈະຫ້ວງວ່າລົດອີ່ພໍ່ໂລດ.

ເມື່ອຮູ້ວ່າ ບັກແກ້ວ ຂີ້ເຫລົ້າ ລັກລົດຖີບ, ອີ່ພໍ່ບໍ່ປາກພໍຄວາມ ພໍ່ຫົວຮາງ... ຂອງແນວວ່າບັກແກ້ວຂີ້ເຫລົ້າ ຊິຈັບຄົນບ້າ ຊິຂ້າ ຄົນເມົາ ມັນກໍບໍ່ຢຸຕິທຳ. ອີ່ພໍ່ຈົກເງິນໃຫ້ບັກແກ້ວໄປຊື້ເຫລົ້າຕື່ມ.

ພໍ່ຊີ້ຫນ້າບັກແກ້ວທັງເວົ້າວ່າ: ຄົນມຶງບໍ່ມີເງິນຊື້ເຫລົ້າໃຫ້ ມຶງ ຂໍເອົາເດີ... ແຕ່ບໍ່ແມ່ນການຂີ້ລັກ... ເທື່ອນີ້ກູຍົກໂທດໃຫ້ມຶງ.. ເທື່ອຫນ້າຢ່າຫາວ່າກູໃຈໂຫດເດີ!...

ລົດຖີບອີ່ພໍ່.

ມັນເປັນມູນມໍລະດົກຂອງຕະກູນແທ້ໆ.

ມັນໃຫ້ຄວາມສຸກຄວາມສະບາຍກັບຄອບຄົວຂ້ອຍອີຫລີ.

ລູກເຈັດຄົນກ່ອນຈະຂີ່ລົດຖີບເປັນຕ້ອງໄດ້ຜ່ານລົດຄັນນີ້.

ສະໄຫມອ້າຍກົກຊ້ອນເອື້ອຍກາງຫຽວໂຮງຮຽນກໍແມ່ນລົດຄັນນີ້ແລະສະໄຫມຂ້ອຍເອງນ້ອງຫລ້າຫຽວໂຮງຮຽນກໍຍັງແມ່ນລົດຖີບຄັນນີ້ຄືເກົ່າ.

ຂ້ອຍຍັງຈື່ໄດ້ຕອນຮຽນແອບລົດໃຫມ່, ຂ້ອຍເຮັດມັນລົ້ມຫລາຍປັ້ນຫລາຍພິກ ແຕ່ລົດຖີບຍີ່ຫໍ້ໂຟນິກ ຜະລິດຈາກປະເທດອັງກິດຄັນນີ້ບໍ່ເຫັນວ່າມັນຈະຫັກ ເຈາະເພ ມັນຊ່າງເປັນລົດທີ່ມີຄຸນນະພາບ ດີຂະຫນາດເລີຍ!

ຮູ້ບໍ່ຂ້ອຍຈາກບ້ານເກືອບຊາວປີແລ້ວ.

ປີນີ້ ຂ້ອຍມີໂອກາດເມືອຢາມບ້ານອີກ.

ເຊື່ອບໍ່ວ່າຂ້ອຍຍັງໄດ້ຂີ່ລົດຖີບອີ່ພໍ່ຄັນນີ້ໄປເລາະທ່ຽວສາວແມ່ຮ້າງຢູ່.

ຊິເຊື່ອກໍເຊື່ອ

ບໍ່ເຊື່ອເສຍຫ້າພັນກີບ

ຖ້າເຊື່ອບໍ່ເສຍພໍກີບ

ລວມອາຍຸການລົດຖີບອີ່ພໍ່ມາຮອດມື້ນີ້ 75 ພັນສາແລ້ວ!..



# ຄືນຊີວິດ

* ກ່ອນຊີວິດຈະດັບດິ້ນ, ກ່ອນລົມຫາຍໃຈຖ້ຽວສຸດທ້າຍ, ກ່ອນຄົນຈະກາຍເປັນຜີແລະກ່ອນຄຳວ່າຄາດຕະກອນຈະເປັນປ້າຍ ປະກາດຕິດຫນ້າຜາກເຂົາ, ຄວາມມຸ່ງຫມັ້ນໃນຊີວິດເຂົາກໍຄືເຂົາຕ້ອງການພົບຄົນຜູ້ຫນຶ່ງແລະແລ້ວເຂົາກໍຫອບວິນຍານທີ່ເຄິ່ງຜີເຄິ່ງ ຄົນຫ້ອຍແຂນຫລັງລົດຂະບວນມຸ່ງຫນ້າຂຶ້ນສູ່ວຽງຈັນ.

ດ້ວຍສັດຈະທຳຂອງການປະຕິວັດ. ຈາກປຶ້ມ "ລ້າງເລືອດດ້ວຍເລືອດ" ທີ່ເວົ້າເຖິງນັກມະນຸດສະທຳຢ່າງຊີວິດເຈເກວະຣາ, ຈາກປຶ້ມເຫລັກທີ່ຖືກຊຸບແລ້ວຄືດັ່ງນີ້ລະ ທີ່ມີຕົວລະຄອນຊື່: "ປາແວນ" ແລະ ດ້ວຍຕົວຂອງເຂົາເອງກໍມີສັນດານແອບແຝງ ໄປດ້ວຍວິນຍານນັກຊາດນິຍົມ, ແຖມຍັງມີມະນຸດສະທຳປະດັບ ເຄືອບຫົວໃຈ, ກ້າຄິດ, ກ້າເຮັດ, ກ້າຜິດ, ຖ້າຖືກ.

ຈາກເຫດຜົນທີ່ ກ່າວ ອ້າງເທິງນັ້ນມັນໄດ້ກາຍເປັນໄຟ ກອງໃຫຍ່ຊຸບຫລໍ່ຊີວິດຫນຸ່ມຂອງເຂົາໃຫ້ເປັນເຫລັກກ້າແລະ ໃນ ທີ່ສຸດເຫລັກກ້າທີ່ເຄີຍຜ່ານໄຟກໍຈະປ່ຽນທາດເປັນກ້ອນຂີ້ກົ່ວເສຍແລ້ວ.

ຈາກໄລຍະທາງສະຫວັນ-ວຽງຈັນ ທີ່ຍາວເຍືອເປັນຮ້ອຍ ກິໂລແມັດ. ທ່າມກາງສາຍລົມ-ແສງແດດກ້າ. ຈາກການຫລຸບ ໂມນບວກຊຸມຂອງເສັ້ນທາງເລກທີ 13 ຈາກເມກຫມອກຂອງຄວັນ ຂີ້ຝຸ່ນທາງມັນກໍເປັນອຸປະສັກຫນຶ່ງທີ່ມອບຄວາມທໍລະມານໃຫ້ກັບ ຄົນເດີນທາງ.

ເມື່ອເຂົາຄິດຄືນເຖິງແປ້ວປວດຊີວິດ, ຄວາມຮູ້ສຶກຂອງເຂົາ ກໍເຫມືອນຊີວິດກຳລັງຖືກປາດແລ່ດ້ວຍຄົມມີດຫລາຍຮ້ອຍດວງ, ຍິງຄິດມັນກໍຍິງເຈັບປວດ.

ມີບາງເທື່ອເຂົາກໍຄິດຢາກກະໂດດລົງຫລັງລົດໃຫ້ມັນຕາຍຊ້ຳສາ. ມີບາງເທື່ອເຂົາກໍຄິດຢາກໃຫ້ພວກປະຕິການລັດຍິງລົດເພາະເຂົາຄິດຢາກຕາຍພ້ອມກັບການຖືກຍິງຂອງລົດ. ແຕ່ເມື່ອເຂົາ ຄິດວ່າກ່ອນຈະຕາຍເຂົາຂໍພົບຫນ້າຄົນຫຜູ້ຫນຶງເສຍກ່ອນ, ຄົແນວ ນັ້ນເຂົາຈຶ່ງຮວບໂຮມພະລັງເອົາຊະນະຄວາມຄິດສັ້ນໆຂອງເຂົາແລະໃນທີ່ສຸດເຂົາກໍມາເຖິງວຽງຈັນ.

"ເຮືອນຫລັງນັ້ນເປັນຫລັງເຮືອນເກົາແກ່! ເປັນເຮືອນ ສາມຊັ້ນ !...ແຕ່ກ່ອນເປັນໂຮງແຮມຂອງເອກະຊົນ...ດຽວນີ້ແມ່ນເປັນເຮືອນພະນັກງານ...ແລະເຂົາຜູ້ນັ້ນພັກຢູ່ຊັ້ນທີສາມ!..." ນີ້ແມ່ນຄຳແນະນຳຈາກຄົນຜູ້ຫນຶ່ງ.

ເຂົາຫອບສັງຂານປີນຂັ້ນສາມລໍ້ເຄື່ອງ.

ສາມລໍ້ຫອບຕົວເຂົາເຂົ້າບຸຜ່າໃຈກາງເມືອງ.

ເຂົາຝາກຊາຕາກຳໄວ້ກັບຜູ້ບັນຊາສາມລໍ້ກໍເພາະເຂົາ ເອງກໍປີນຂັ້ນມາວຽງຈັນເປັນຄັ້ງທຳອິດຂອງຊີວິດ.

ສາມລໍ້ເຄື່ອງກ້ຽວວຽນ, ລ້ຽວຊ້າຍ ລ້ຽວຂວາ, ຈາກ ແຍກຫນຶ່ງກໍໄປເຖິງອີກແຍກຫນຶ່ງແລະແລ້ວກໍມາຢຸດຕໍ່ຫນ້າເຮືອນ ຫລັງຫນຶ່ງ.

ເຂົາໃຊ້ສາຍຕາສັງເກດເຮືອນຫລັງນັ້ນຕາມການ ແນະນຳຂອງຄົນຜູ້ໜຶ່ງ.

" ເຮືອນເກົ່າແກ່ສາມຊັ້ນ...ຕໍ່ໜ້າບ້ານຈະເຫັນປ້າຍ ທີ່ຂຽນເປັນຕົວອັກສອນລາວແລະສາກົນ...ແມ່ນແລ້ວ! ແມ່ນເຮືອນຫລັງນີ້ແລ້ວ !... "

ຊາຍໜຸ່ມຍືນຣິມສືບຖາມຄົນອີກຜູ້ໜຶ່ງເພື່ອຄວາມແນ່ໃຈ.

ຄົນຜູ້ນັ້ນຕອດຫົວແທນຄຳຕອບວ່າ: ຄົນຜູ້ຊຈ້າງຊຸກຢູ່ນີ້ລະ....

ເຂົາຂືນຫົວເຂົາປີນຂຶ້ນຂັ້ນໄດໄປຫາຊັ້ນສາມ

" ຫ້ອງເບີຫ້າເດີ !... "ຄົນຜູ້ນັ້ນຮ້ອງບອກຕາມຫລັງທີ່ຊັ້ນສາມ.

ຈະເຫັນເດັກນ້ອຍໄລ່ແລ່ນຢອກໄຍກັນດ້ວຍສຽງຫົວສະອຶກສະອ້ອຍ. ແມ່ຍິງຜູ້ໜຶ່ງກຳລັງຊັກເຄື່ອງແລະຈະເຫັນຜູ້ຊາຍຄົນ ໜຶ່ງນັ່ງເຫົ້ງຫລັງງອຍປ່ອງຢ້ຽມດ້ວຍການໃຊ້ສາຍຕາຈັບຈ້ອງໜ້າປື້ມຫົວໜຶ່ງຢູ່.

ການຈົ່ງໆຈຽມໆຂອງແຂກ ແປກໜ້າມັນກໍເປັນເລື່ອງທຳມະດາ.

ເຂົາເດີນສືບຖາມຜູ້ຊາຍອີກຜູ້ໜຶ່ງຢູ່ປ່ອງຢ້ຽມ.

ຜູ້ຊາຍຄົນນັ້ນນັ້ນຊີ້ໄປທາງຫ້ອງເບີຫ້າ.

ເຂົາເຄາະປະຕູເປັນສັນຍານ"

" ເຊີນ !... " ສຽງເວົ້າຂ້າງໃນເປັນຜູ້ຍິງ.

ເຂົາໄຂປະຕູເຂົ້າໄປ.

" ສະບາຍດີເອື້ອຍ !..." ເອົາທັກທາຍໃສ່ແມ່ຍິງຄົນນັ້ນ

" ເຊີນ ! ນັ່ງຕາມສະບາຍໂລດ !...

" ອ້າຍເພິ່ນບໍ່ຢູ່ບໍ ?..."

" ຍັງບໍ່ທັນມາແຕ່ວຽກ !...ມີວຽກກັບເພິ່ນບໍ ?... ນັ່ງຖ້ານ້ອຍໜຶ່ງ...ຈັກໜ້ອຍກໍມາດອກ...ແຕ່ກໍບໍ່ແນ່ເພາະຄົນຜູ້ນີ້ກໍແມ່ນ ສີຊຽງເລີຍ !...ມີບາງຄັ້ງກໍເດິກດື່ນ !..."

ບຶດໜຶ່ງນ້ຳຮັບແຂກກໍຖືກຍົກມາ

" ຂອບໃຈ !..."

ແລະ ແລ້ວແມ່ຍິງຄົນນັ້ນກໍກົ້ມໜ້າໃສ່ການຄົວກິນ.

ຊາຍໜຸ່ມໃຊ້ສາຍຕາຖຸ້ມທວານທົ່ວໆຫ້ອງເຮືອນ.

ຫ້ອງນອນ-ຫ້ອງຮັບແຂກ-ຫ້ອງຄົວກິນກໍແມ່ນອັນດຽວກັນ.

ການຈັດສັນນັ່ງຮຽນນັດເຄື່ອງຂອງກໍມີລັກສະນະເປັນລະບຽບດີພໍຄວນ. ເບິ່ງສາດເສື່ອນອນໝອນໝູນຫົວ, ຕູ້ຫ້ອຍເຄື່ອງນຸ່ງ, ກໍບອກເຖິງວ່າຊີວິດຄອບຄົວນີ້ຝຶດເຄືອງພໍສົມຄວນ.

ມີໂຕະຂຽນໜັງສືໜ່ວຍໜຶ່ງທີ່ຖືກຢອງໄປດ້ວຍປຶ້ມອ່ານແລະເອກະສານ.

ຈາກຮູບຖ່າຍຂະໜາດຊາວຄູນຊາວຫ້າທີ່ຊອນແປະໄວ້ ໃນຂອບແວ່ນມັນກໍບອກໄດ້ວ່າ: ຜູ້ຊາຍຄົນນີ້ມີຊີວິດຊົກໂຊນມາ ຫລາຍປີ້ນຫລາຍຕ່າວ. ທີ່ຝາດ້ານໜຶ່ງ ກໍຈະເຫັນຮູບພາບແຜ່ນໜຶ່ງ ຂະໜາດໃຫ່ຍ, ເປັນຮູບພາບໂຄສະນາ, ຮູບແຜ່ນນັ້ນແມ່ນການ ຈົກຕ່ອຍກັນລະຫວ່າງ "ບຸດສະລີກັບຈັກນໍຣິສ" ຢູ່ໃນທ່າຈັ່ງຫວະຜູ້ໜຶ່ງ

ເຕະແລະຜູ້ຫນຶ່ງຮັບ ຊຶ່ງສະແດງໃຫ້ເຫັນເຖິງເຈົ້າຂອງເຮືອນຫຼັງນີ້ ມັກຄວາມຮຸນແຮງເດັດເດືອດ.

ຢູ່ທີ່ຝາດ້ານຊ້າຍມືຈະເຫັນຕົວອັກສອນໃຫຍ່ຄືດັ່ງປ້າຍຄຳຂວັນ ແລະກໍຂຽນວ່າ: "ບັນລັງຫຼືຕຳແຫນ່ງອາດຈະບໍ່ຈຳເປັນແກ່ນັກຕໍ່ສູ້" ດ້ວຍຄຳຂວັນດັ່ງກ່າວໄດ້ຕຳກະຕຸກປະສາດຊາຍຫນຸ່ມຈົນຫລົງລັກຊຸທານອອກໃນໃຈວ່າ: ຄົນຜູ້ນັ້ນມີອຸດົມການແປກ...ຫລືຫມົດ ຊີວິດຂອງເຂົາມີແຕ່ການຈະເສຍສະຫລະຢ່າງດຽວມັນກໍເປັນ • ເລື່ອງແປກ.

ຊາຍຫນຸ່ມເດີນໄປຈັບເບິ່ງປື້ມຫົວຫນຶ່ງ.

ປື້ມຫົວນີ້ຊື່ " ເຮືອຊີວິດ ".

ມັນເປັນປື້ມຄຳກອນ.

ຄວາມຫນາຂອງປື້ມປະມານຊາວຫນ້ານີ້ລະ.

ພິມດ້ວຍຈັກໂລນຽວ.

ອາດເປັນປື້ມຈັດພິມທີ່ບໍ່ເປັນທາງການ.

ເບື້ອງຫລັງປົກຂ້າງຫລັງຂຽນດ້ວຍລາຍມືທີ່ຊັບຊ້ອນດ້ວຍ ສັບສຳນວນປະລັດຊະຍາ ອັນມີນ້ຳຫນັກກ່ວາ: "ຂໍພຽງຊີວິດອື່ນໄດ້ພົ້ນຈາກແອກໂສ້ກົງຂັງແລ້ວມີຊີວິດຢູ່ຢ່າງອິດສະຫລະພາບ, ໃນນັ້ນ ມີເພື່ອນຂອງຂ້ອຍ, ສະຫາຍຂອງຂ້ອຍ, ປະຊາຊົນຮ່ວມບ້ານ, ປະຊາຊາດຮ່ວມໂລກ, ຂ້ອຍເອງເຖິງຈະມີຄວາມຂົມຂື່ນເຈັບປວດທໍ ລະມານກໍຕາມ ແຕ່ກໍຍອມຍິ້ມອອກມາໄດ້ແລະ ຮອຍຍິ້ມນັ້ນລະ ຄືຄວາມສຸກທີ່ສຸດຂອງຂ້ອຍ...

ແລະແລ້ວຊາຍໜຸ່ມກໍຫັນຄວາມສົນໃຈມາ ປົງໄວ້ຄຳນຳຂອງຜູ້ຂຽນທີ່ຂຽນວ່າ: "ຂ້າພະເຈົ້າຄົນຄິດເຣືອຊີວິດຂຶ້ນມາ, ຄວາມຍາກຂອງມັນບໍ່ຕ່າງຫຍັງກັບເຣືອໂດຍສານລຳໜຶ່ງທີ່ບັນທຸກຄົນໂດຍສານຕັ້ງຫລາຍສິບຊີວິດ, ແລະກຳລັງຈະບົ່ນຕົວຂຶ້ນປະເຊີນໜ້າກັບຕາດແກ້ງທີ່ມີກະແສສິນທີ່ເປັນອັນຕະລາຍ, ຕໍ່ຄວາມຫຼູລະກັນດານຄືແນວນັ້ນ, ນາຍທ້າຍເຣືອເອົາຈະໂລ່ງໃຈຫລືຈະໜັກໃຈ..."

ຈາກຄຳນຳຂອງຜູ້ຂຽນກໍພໍສະຫລຸບໄດ້ວ່າ: ບົດຂຽນທີ່ເອົາຂຽນແຕ່ລະບົດແມ່ນຢູ່ໃນຄວາມຮັບຜິດຊອບຂອງຜູ້ຂຽນເອງສູງທີ່ສຸດແລະກໍແຕກຕ່າງກັບຄວາມເຂົ້າໃຈຂອງຄົນບາງຄົນວ່າ: ເມົາຂຽນ ຂຽນເພື່ອຂຽນ...

ຈາກນັ້ນຊາຍໜຸ່ມພົບກັບເນື້ອໃນຄຳກອນທີ່ຂຽນວ່າ:

ຊູດົມການ  ບ່ອນນ້ຳ  ຊີມົງໄຝນອນຝັນ ເປັນລີ !
ມີບໍ່ຈັບ  ບາຍແຫ  ບໍ່ຫອນເຫັນປາປົ້ງ
ຄືດັງ  ນາຍພານເນື້ອ  ເຫັນກວາງນ້ຳລາຍອອກ.
ປີນບໍ່ແນ  ແມບໂປ້ງ  ບໍ່ຄອງລຸ້ຍຕ່ອນແກງ...

ແລະອີກຄຳກອນໜຶ່ງຂຽນວ່າ:

* ໂອ ! ຄວາມດີ  ຖ້າມີຢູ່  ຄູ່ຕົວໃຜ
ເໝືອນ ຕົ້ນໄມ້  ມີດວງດອກ  ຍອງປະດັບ
ມີຄວາມດີ ເໝືອນຕົວເຮົາ  ລ້ຳລວຍຊັບ
ເຖິງອາພັບ  ຢ່າແຄບຄັບ  ອັບຄວາມດີ

ຊາຍໜຸ່ມເກີດຄວາມສັດທາຕໍ່ປຶ້ມຫົວນີ້ຢ່າງອັດຕະໂນມັດ.

ເຂົາກອດປົ້ມໂມ້ນໃສ່ຫນ້າເອິກ.

ດວງຕາຮູ້ສຶກແຈ້ງສະຫວ່າງ

ຄວາມຫວັງໃຫມ່ປະກົດແຍ້ມໆຕົວອອກມາ

ເຫືອແຮງກຳລັງວັງຊາປະກົດຄືນເນື້ອຄືນຄີງ.

" ນັ້ນເດ ! ມາແລ້ວເດ ! ຟັງແຕ່ບາດຕີນຍ່າງກໍຮູ້ !.. ແມ່ຍິງຄົນນັ້ນຫົວງອັ້ນ.

ຊາຍກາງຄົນຍື່ນຫນ້າເຂົ້າມາ.

" ສະບາຍດີອ້າຍ !..."ຊາຍຫນຸ່ມທັກທາຍດ້ວຍການ ຍິ້ມ ມົບ.

" ສະບາຍດີ !...ໄປຈັ່ງໃດມາຈັ່ງໃດ ?..."

"ກໍມາຫາອ້າຍນັ້ນລະ !..."

ຊາຍກາງຄົນທົບທວນຄວາມຊົງຈຳ.

" ພວກເຮົາເຄີຍພົບກັນຢູ່ໃສນໍ ?..."

" ບໍ່ດອກອ້າຍ ! ພວກເຮົາບໍ່ເຄີຍພົບກັນມາກ່ອນເລີຍ , ແຕ່ນ້ອງຮູ້ອ້າຍຈາກບົດຂຽນ-ບົດປະພັນແລະກໍຈາກນາມປາກ ກາ ຂອງອ້າຍນັ້ນລະເປັນແມ່ເຫລັກດູດຫົວໃຈນ້ອງໃຫ້ໄດ້ມາພົບອ້າຍ.

ຊາຍກາງຄົນຍິ້ມນ້ອຍໆທີ່ເຫັນຫນ້າແຟນປາກກາຕາມມາເຖິງ ບ້ານ.

" ຄືວ່າຕີນຕົວມີແຕ່ຂີ້ຝຸ່ນ ?..."

" ກໍນ້ອງເອງງອຍຫລັງລົດຂະບວນມານີ້ມາ...ນ້ອງມາແຕ່ ສະຫວັນ... ຮອດວຽງຈັນສີ່ໂມງນີ້ເອງ...ຮອດປັບ ກໍມາປັບ."

"ມາທ່ອງທ່ຽວວຽງຈັນອຸ້ນບໍ ?..."

ເອີ!...ອື!...ກໍບໍ່ດອກ...ມາເປັນຄັ້ງທຳອິດ... ຕັ້ງໜ້າຕັ້ງຕາມາຫາອ້າຍຕ່າງຫາກ...

ຊາຍກາງຄົນຈັບຕາເບິ່ງໜຸ່ມແປກໜ້າຢ່າງປະຫລາດໃຈ .

" ຮູ້ເຮືອນອ້າຍດ້ວຍວິທີໃດ ?..."

ຈາກການແນະນຳຂອງຄົນຜູ້ໜຶ່ງ...ລາວຊື່ ກາບແກ້ວ , ລາວວ່າເປັນສ່ຽວອ້າຍແລະກໍເກີດບ້ານດຽວກັນແລະກໍເຄີຍ ເອົາໂຮງຮຽນນຳກັນແຕ່ສະໄໝຫ້ອງປໍໜຶ່ງພຸ້ນ..."

ຊາຍກາງຄົນຕອດຫົວຮັບເອົາການລາຍງານ.

ບັນຍາກາດທີ່ເປັນກັນເອງແຍ້ມຕົວອອກມາ.

" ຮູ້ຈັກໃຜແດ່ຢູ່ວຽງຈັນ ?..."

" ບໍ່ຮູ້ໃຜຈັກຄົນ !... ພີ່ນ້ອງບໍ່ມີຈັກຄົນເລີຍ !..."

" ເອົາ ! ສູບຢາ !..." ຊາຍກາງຄົນຍື່ນຢາໃຫ້ ໜຸ່ມແປກໜ້າ.

" ເຮີຍເຖົ້າ !!...ເຈົ້າເຮັດຫຍັງກິນ ?..."

" ແກງໜໍ່ !..."

" ມື້ນີ້ກິນເຂົ້າແລງນຳກັນ !...ແກງໜໍ່ໄມ້ກໍຖືວ່າອາຫານດີແລ້ວໃດ... ດຽວນີ້ເຂົ້າກໍຢາກ ໝາກກໍແພງ...ບໍ່ທັນມີ ສິດກິນອັນແຊບໄດ້ເທື່ອ !..."

" ສະພາບເສັ້ນທາງສະຫວັນ-ວຽງຈັນເປັນແນວໃດ..."

" ມີບາງບ່ອນກໍຮ້າຍກວ່າທາງກວຽນແລະບາງບ່ອນແໜ ທີ່ຈະເປັນບວກຄວາຍກໍເປັນບວກຊ້າງ... ດີແຕ່ການສະກັດລັດຍິງລົດລາງບໍ່ຄ່ອຍຢາກມີປານໃດ !..."

" ປັ້ນກອນຫົວນີ້ໃຫ້ນ້ອງຂໍດີ !... ນ້ອງອ່ານແລ້ວຮູ້ສຶກວ່າເກີດຄວາມຢາກໄດ້ຂຶ້ນມາ..."

" ຄືຊິຍັງເຫລືອຫົວດຽວເທົ່ານີ້ລະ... ຖ້າຄິດວ່າມັນພໍເປັນເພື່ອນຊີວິດໃຫ້ກັບນ້ອງໄດ້ກໍເອົາສາ !..."

"ອ້າຍຂຽນໄດ້ດີຫລາຍ !..."

"ເອີ ! ກໍເອົາແຕ່ຜູ້ອ່ານວ່າ...ເພາະຄວາມດີຫລືບໍ່ດີ ບົດຂຽນແມ່ນຜູ້ອ່ານເປັນຜູ້ໃຫ້ຄະແນນ..ນັກຂຽນບໍ່ກ້າເອົາໃບ ປະກາດແຂວນຄໍໂຕເອງວ່າເປັນນັກຂຽນທີ່ດີໄດ້ດອກ ?..."

" ອ້າຍເປັນນັກຂຽນໄດ້ຈັກປີແລ້ວ ?..."

" ເລີ່ມຂຽນຕອນອາຍຸ 26 ປີ...ໃນຊີວິດບໍ່ເຄີຍຄິດຈະເປັນນັກຂຽນມາກ່ອນແລະກໍບໍ່ເຄີຍມັກ...ມັນເປັນເລື່ອງປະຕິຫານ ກໍວ່າໄດ້..."

" ອ້າຍເປັນຜູ້ໂຊກດີຫລາຍ...ອາຊີບນີ້ຫລາຍຄົນເຮັດ ໄດ້ຍາກ...ຫນຶ່ງລ້ານໃນຫມື່ນຄົນມັນກໍຍັງເປັນເປີເຊັນທີ່ຫາຍາກຢູ່..ຢ່າງອື່ນຮ້າຍຊີວິດເປັນນັກຂຽນກໍແມ່ນທຽນເຫລັ້ມຫນຶ່ງເພື່ອ ໃຫ້ຄວາມສະຫວ່າງກັບມະນຸດ...ເວົ້າແລ້ວບໍ່ແມ່ນຍ້ອງຕໍ່ຫນ້າ....ນ້ອງກໍແມ່ນຜູ້ຫນຶ່ງທີ່ສັດທາບົດຂຽນຂອງອ້າຍມາແຕ່ໃດ ແຕ່ໃດ?"

" ໃສ ?...ອັນທີ່ນ້ອງຕັ້ງຫນ້າຕັ້ງຕາມາຫາອ້າຍນັ້ນ ແມ່ນເລື່ອງອັນໃດ?..."

ຫນຸ່ມແປກຫນ້າຍັ້ນກົດຢາໃສ່ກ່ອງຂີ້ຢາດ້ວຍບາດມືຫນັກ. ດວງຕາທັງຄູ່ປະກົດມີໄຟລຸກ.

ໜ້າຕາປ່ຽນສີໂດຍກະທັນຫັນ-ໜ້າແດງ ຫູແດງແຝງ ດ້ວຍຄວາມໂກດແຄ້ນ.

" ນ້ອງມາຂໍຂໍ້ຄິດຂໍສຸດທ້າຍຈາກອ້າຍ...ກ່ອນນ້ອງຈະກາຍເປັນຄາດຕະກອນຫລືຈະຕາຍເປັນຜີ...ນ້ອງຢາກໄດ້ຍິນຄຳເວົ້າຈາກອ້າຍເປັນຜູ້ສຸດທ້າຍ...ນ້ອງຢາກຖາມວ່າ: ຄົນຄືນ້ອງມັນສົມຄວນຕາຍຫລືສົມຄວນເປັນຄາດຕະກອນ ?..."

" ມີເລື່ອງຮ້າຍແຮງປານນັ້ນພຸ້ນຫວະ ?..."

ຫນຸ່ມແປກໜ້າຖອກຄວາມອຶດອັດອອກມາປານກະແສນ້ຳລົ້ນຝັ່ງ, ເຂົາຫຸ້ມສຽງແລະເປັ່ງສຽງແລະບາງຕອນກໍສະແດງ ທ່າທີອອກມາແບບເສົ້າໂສກເສຍໃຈທີ່ສຸດ.

ລະດັບວັດທະນະທຳຮຽນຈົບຊັ້ນຊູດົມ.

ເປັນພະນັກງານລັດມາໄດ້ຫ້າປີເຕັມ.

ໜີດຊີວິດຄວາມເປັນພະນັກງານເຂົາແມ່ນການອຸທິດ- ການເສຍສະຫລະ-ຄວາມຊື່ສັດແລະຄວາມຈົງຮັກພັກດີຕໍ່ໜ້າທີ່, ບໍ່ເຄີຍແຕະຕ້ອງສິນບົນແມ່ນແຕ່ກີບດຽວ.

ວຽກທີ່ເຂົາເຮັດແມ່ນກ່ຽວພັນກັບຄວາມຍຸຕິທຳແລະກົດໝາຍເຂົາບໍ່ເຄີຍຄິດວ່າຄົນຜູ້ບໍລິສຸດຈະເອີຍທ້າຍລົງແບບນີ້. ເຂົາ ບອກວ່າມື້ທີ່ເຂົາໄດ້ໃບປົດປ່ອຍອອກຈາກພະນັກງານກໍແມ່ນມື້ດຽວ ກັບເຂົາໄດ້ຮັບໃບຍ້ອງຍໍແລະຫລຽນໄຊ...ນີ້ຫວະ ? ຄວາມ ເປັນທຳຂອງການປະຕິວັດມອບໃຫ້ກັບຄົນຜູ້ບໍລິສຸດຜູ້ໜຶ່ງ?..

" ອ້າຍ!... ອ້າຍເປັນນັກຂຽນ... ອ້າຍແມ່ນຜູ້ໜຶ່ງ ທີ່

ເຮັດໜ້າທີ່ມະນຸດສະທຳ !...ຄົນຄືນ້ອງສົມຄວນບໍ່ທີ່ຈະຖືກ ໄລ່ອອກການ ?... ຫົວໜ້າໜຳນັ້ນສົມຄວນໃຫ້ມັນມີຊີວິດຢູ່ຕໍ່ໄປບໍ່? ນ້ອງຢາກເດັດຊີວິດມັນ !...ໃຫ້ນ້ອງຂ້າມັນບໍ່ ?...ຫລືຈະໃຫ້ນ້ອງເຮັດວິທີການໃດກັບຫົວໜ້າຄົນນັ້ນ ?...ມັນເປັນຜູ້ຕັດແຂນຕັດຂາອານາຄົດຂອງນ້ອງແທ້ໆລະ..."

ເອົາລະໆ...ໃຈເຢັນໆນ້ອງຊາຍ...ອ້າຍພໍເຂົ້າໃຈແລ້ວ! ແມ່ເຈົ້າເຮືອນຍົກພາເຂົ້າແລງມາ

" ເອົາ !ລ້າງມືກິນເຂົ້າກ່ອນ !"

" ຄືນນີ້ນອນພັກຜ່ອນຢູ່ເຮືອນອ້າຍກໍໄດ້ !...."

" ບໍ່ຕ້ອງໂສກເສົ້າເສຍໃຈເກີນໄປ ! ເພາະເຮົາເອງກໍບໍ່ທັນໄດ້ຕາຍເທື່ອ... ການຍັງມີຊີວິດຢູ່ກໍຄືການຍັງມີຫວັງຢູ່.... ມີແຕ່ຜູ້ທີ່ຕາຍແລ້ວ ຈຶ່ງຈະສົມທຸກສິ່ງທຸກຢ່າງ...ອ້າຍເຊື່ອ ວ່າໂລກນີ້ຕ້ອງມີຄວາມເປັນທຳແລະທັງເຊື່ອອີກວ່າສົມທຳຕ້ອງຊະນະອະທຳ..."

" ມີບາງໂອກາດອະທຳກໍມີສິດໂງຫົວຂຶ້ນມາຊະນະ ຄວາມເປັນທຳໄດ້ !

ບາງໂອກາດທຳດີໄດ້ດີມີຢູ່ໃສ ? ແຕ່ທຳຊົ່ວ ໄດ້ດີມີຖົມໄປ..

ບາງໂອກາດຜູ້ບໍລິສຸດກໍມີສິດເປັນຜູ້ພ່າຍແພ້ໄດ້ !...

ແຕ່ສ່ວນໃຫຍ່ແລ້ວ ເວລາໃດສົມທຳຕ້ອງຊະນະອະທຳ ແລະຄວາມດີຕ້ອງຊະນະຄວາມຊົ່ວ !...ແລະຜູ້ບໍລິສຸດກໍເປັນຜູ້ຊະນະຕະຫລອດໄປ..."

" ເອົາ ! ກິນເຂົ້າໃຫ້ມັນອີ່ມ !..."

" ອ້າຍເອີ້ຍ ! ບໍ່ທັນມີລູກຈັກຄົນຊັ້ນຫວະ ?..."

" ບໍ່ !...ນັ້ນແຫຼະ...ເອີ້ຍເຈົ້າຫາກໍຕັ້ງທ້ອງໄດ້ ຫົກ ເດືອນ !... ຄົນເປັນຜູ້ຊາຍອ້າຍຈະສົ່ງເສີມມັນໃຫ້ເປັນນັກກົດ ໝາຍ !..."

" ນ້ອງເຫັນດີນຳເດີ !...ຝາວໃຫ້ມັນເກີດມາປາບຄົນຊົ່ວ ໃຫ້ລາບຄາບຊ່ອຍກັນແດ່...ເບື່ອ !..."

" ເອີ ! ນ້ອງຊາຍ !...ອ້າຍບໍ່ຕຳນິ ນ້ອງດອກ "... ຂອງແນວວ່າໂດນບັນຫາຊີວິດເປັນຄັ້ງທຳອິດ...ແລະກໍໂດນ ບັນ ຫາໜັກໜ່ວງໂລດ...ເລື່ອງຈັບປວດມັນກໍແມ່ນເລື່ອງທຳ ມະ ດາ...ແຕ່ຖ້າໂດນບັນຫານ້ອຍໆນ້ອງກໍຈະຊິນເອົາເອງ ດອກ ມີເພື່ອນອ້າຍຜູ້ໜຶ່ງ ອອກການຫ້າເທື່ອແລະ ມັນກໍເອົ້າການ ຫ້າ ເທື່ອ...

ມັນເວົ້າວ່າໂລກໃຫຍ່ກ່ວາໃບຂາມ...ບໍ່ແມ່ນໜີການ ປະຕິ ວັດ ແຕ່ໜີບຸກຄົນຕ່າງຫາກ...ແມ່ນອນລະເມື່ອຮູ້ວ່ານ້ຳວັງ ນັ້ນ ຊຸ່ມຮ້ອນ...ປາໂຕໃດຮູ້ເອົາຕົວລອດກໍສະແດງວ່າ ປາສະຫລາດ ເມື່ອຮູ້ວ່າທັ່ນບໍ່ດີກອງໄຟ-ຄືຄວາມຕາຍກໍຍັງເອົາຫົວຖ້າໂຕ່ງ ຮັບ ເອົາຄວາມຕາຍກໍຈະບໍ່ແມ່ນຜູ້ສະຫລາດ ແຕ່ຜູ້ຮູ້ວ່າທັ່ນບໍ່ດີ ຄວາມ ຕາຍ ແຕ່ກໍຢັ້ງຢືນຕົວເອົາຊະນະຄວາມຕາຍໄດ້ກໍຍິ່ງເປັນຜູ້ ສະ ຫລາດ...ຊີວິດໃດທີ່ຮູ້ຈັກຕໍ່ສູ້ບຫິບໄດ້ ຊີວິດນັ້ນກໍບໍ່ຄ່ອຍຈະຕົກລົ່ມ ປານໃດ... ຄົນຜູ້ລູບແຂ້ງເລຍຂາເກົ້າ...ກໍບໍ່ໝາຍວ່າຄົນ ຜູ້ ນັ້ນອ່ອນແອສະເໝີໄປ... ກໍເພາະໜັງໜ້ານາຍ ມັນມັກແບບ

ນັ້ນຕັ້ນມາ... ມີບາງໂອກາດກໍຕ້ອງອ່ອນຕົວໄປຕາມລົມ ແຕ່ ກໍບໍ່ຫມາຍວ່າຍອມຈຳນົນຢ່າງບໍ່ມີທາງສູ້...ມີບາງຄັ້ງຄົນເຮົາກໍຈຳຕ້ອງຝືນໃຈທຳໃນສິ່ງທີ່ໂຕບໍ່ມັກ...

ຫນຸ່ມແປກຫນ້າມືນຕາອ້າປາກຟັງການເລົ່ານິທານຈາກ ຊາຍກາງຄົນຈົນລືມຮອດປັ້ນເຂົ້າໃສ່ປາກ.

ແລະແລ້ວ ຫນຸ່ມແປກຫນ້າໄດ້ກາຍເປັນແຂກພິເສດຢູ່ໃນການຕ້ອນຮັບຂອງຄອບຄົວເຮືອນຫລັງນັ້ນເປັນເວລາຫ້າວັນເຕັມ. ມີບາງມື້ຊາຍກາງຄົນນັ້ນກໍເອົາຫນຸ່ມແປກຫນ້າຫ້ອຍແຂນທ້າຍລົດຈັກໄປທ່ອງທ່ຽວຫລາຍບ່ອນຫລາຍທີ່.

"ນ້ອງຊາຍ ! ຊີວິດເຮັດໃຫ້ມັນເສົ້າມັນກໍເສົ້າ...ຜູ້ທີ່ມັກ
ຍິ້ມໃຫ້ກັບຊີວິດຕົວເອງເລື້ອຍໆກໍຄືຜູ້ຮູ້ຈັກຊີວິດ...

ໂລກຫນ່ວຍນີ້ສຸດຫນ້າຢູ່...

ໂລກນີ້ຍັງມີນ້ອຍ...

ມີລົມ ກໍຕ້ອງມີລູກ...

ຜູ້ກຳນົດຊີວິດເຮົາກໍຄືຕົວເຮົາເອງ...

ຖຽງນາຍ ພາຍຖົງຫມີ !...

ເງິນ !...ຖົມໃສ່ຂາ ຂາອ້າ–ຖົມໃສ່ຫຍ້າ ຫຍ້າຕາຍ–ຖົມໃສ່ນາຍຫົວຍົມ...

ແມ່ນອລະເມື້ອນາຍພາກິນ...ເຮົາບໍ່ກິນສະແດງວ່າເຮົາ ຄືສັຽນຫນາມຂອງເຂົາ...ຄວາມຈິງເຂົາກໍເຮັດຫນ້າທີ່ຂອງ ເຂົາຖືກແລ້ວ...ອັນນັ້ນເຂົາເອີ້ນວ່າການປ້ອງກັນຕົວຂອງຄວາມອະຍຸຕິທຳ...ໃນກຸ່ມໂຈນ...ໂຈນແລະໂຈນ ຈຶ່ງຢູ່ນຳກັນໄດ້...

ແລະນ້ອງເອງກໍ່ບໍ່ຄວນຈະເປັນຄາດຕະກອນ !...

ເຂົາຜູ້ນັ້ນກໍ່ບໍ່ຄວນໃຫ້ມັນຕາຍໄວເກີນໄປ...

ໃຫ້ມັນຍັງຍືນເຍື່ອເພື່ອເຮົາຈະໄດ້ເບິ່ງຊີວິດມັນແລະມັນເອງຈະໄດ້ເຫັນຊີວິດເຮົາ...ສຳຄັນຢູ່ກັບຕົວນ້ອງເອງວ່າ:ນ້ອງ ຈະເປັນຜີຫລືຈະເປັນຄົນ ?...

ກາເວົ້າວ່າ ຄວາມເປັນທຳຂອງການປະຕິວັດ ຈະບໍ່ເຂົ້າຂ້າງ ຄົນທີ່ຜິດ...

ຕຳແຫນ່ງຫົວໜ້າຂອງເຂົາຈະຖືກລົບຊື່ອອກດ້ວຍການ ເວລາ...

ປ່ອຍໃຫ້ກົດຫມາຍບ້ານເມືອງເປັນຈ່າຍົມພິບານລາກຄໍ ເຂົາມາລົງໂທດ...

ການເອົາຊະນະຄົນມີບາງເທື່ອກໍ່ບໍ່ຈຳເປັນຈະໃຊ້ກຳລັງ...

ການເອົາຊະນະດ້ວຍການສ້າງຖານະອານາຄົດໃຫ້ດີລື່ນຄູ່ ຕໍ່ສູ້ເປັນການຊະນະທີ່ຂາວສະອາດທີ່ສຸດ...

ໂລກໃຫຍ່ ກ່ວາໃບຂາມ...

ແຜ່ນດິນລາວຍັງກ້ວາງໃຫຍ່...

ສາຍຂອງຍັງລ່ອງໄຫລ...

ນ້ອນຍັງມີ...

ຈາກຄວາມມືດດຳຂອງລາຕີຄົນນີ້ກໍຍັງມີແສງທອງຂອງມື້ໃຫມ່

ຫວັງວ່ານ້ອງຈະເຂົ້າໃຈຊີວິດອີກເທື່ອໃຫມ່

ຊີວິດ ຄືສາຍນ້ຳ...

ເມື່ອຮູ້ວ່າສາຍນ້ຳມີແກ້ງ-ຕາດ-ເຫວ,ຫີນ ອັນໃດ,ສິ່ງນັ້ນຊິ

ວິດກໍຈະປັດສະຈາກບໍ່ໄດ້ຄວາມເຈັບປວດຂື່ນຂົມແລະກໍຄວາມ ຂື່ນຂົມນັ້ນລະຄິພະລັງຊີວິດເພື່ອຊີວິດ...

ທຶກເດືອນຜ່ານໄປ.

ມີຈົດໝາຍສະບັບໜຶ່ງບິນມາຈາກພາກໃຕ້.

ບິ ຈົດໝາຍໄດ້ຂຽນວ່າ: ຫົວໜ້າຄົນນັ້ນຖືກປົດ ຕຳແໜ່ງແລ້ວ.

ນ້ອງຂອງໄດ້ຮຽກຕົວຄືນໄປເຮັດວຽກຢູ່ບ່ອນເກົ່າ.

ນ້ອງຂອງບໍ່ຮູ້ວ່າຈະຂອບໃຈອ້າຍແນວໃດດີ.

ຖ້າບໍ່ມີອ້າຍເປັນແສງສະຫວ່າງໃຫ້, ນ້ອງອາດຈະຕາຍເປັນຜີຫລືເປັນຄາດຕະກອນໄປແລ້ວ!...

ອ້າຍແມ່ນເທບພະເຈົ້າໃນດວງໃຈຂອງນ້ອງ !

ແລະນ້ອງຂອງຈະຕອບສະໜອງເຈດຕະນາດີຂອງອ້າຍດ້ວຍການສ້າງຕົວໃຫ້ເປັນຄົນດີຕະຫລອດໄປ!...

ພໍອ່ານຈົດໝາຍສຸດ.

ຊາຍກາງຄົນໄດ້ຈ້ອງສາຍຕາໄປຍັງທ້ອງຟ້າ

ເຂົາຍິ້ມນ້ອຍໆອອກມາ

ຣິມສີບຂອງເຂົາຕິງເໜັງ

ເບິ່ງຄືເຂົາຢາກຮ້ອງຂຶ້ນໃຫ້ກ້ອງຟ້າວ່າ:

ຄົນດີແລະຄວາມດີ ຄືຜູ້ຊະນະ!...

ແລະ ຊະນະຕະຫລອດການ!...

■■■■



# ປັບປຸງ ຄຸນນະ ພາບ ຊຸ້ກຂາວ ສະອາດ

## ຊົມໃຊ້ຂອງລາວ

* ຈະຊື້ຍ່ອຍ ລາຄາຖືກ ຫລື ຕ້ອງການເປັນສາຂາ
ເຊີນຕິດຕໍ່ທີ່....
-ໂຮງງານຕັ້ງຢູ່ຫຼັກ 8 ຖະໜົນທ່າເດື່ອ
ວຽງຈັນ. ຕູ້ ປ.ນ: 899 ໂທ: 2002.

# ໂຮງແຮມ ລ້ານຊ້າງ

## LANE-XANG HOTEL

## ບໍລິການດີ ມີນ້ຳໃຈ!



VIENTIANE (LAO PDR)
FaNgum Road (Mekong River)
Telephone: 3672, 4781, 5346,
Cable: LANXOTEL.
P.O.BOX: 280
FAX: 5448

ບໍລິສັດ ໄຟຟ້າລາວ

ກະແສໄຟ ສາຍເລືອດ ລ້ຽງຊີວິດ
ຖ້ານຳໃຊ້ ຢ່າງໄຮ້ຄວາມຄິດ
ຈະເປັນເສດຖະກິດ ທີ່ສິ້ນເປືອງ!